1. <u>ຈຸດປະສົງ ແລະເປົ້າໝາຍຂອງການສຳຫລວດ</u> :

ປະຕິບັດຕາມແຜນການດຳເນີນງານຂອງສູນສະຖິຕິແຫ່ງຊາດ ໃນການກະກຽມການສຳຫລວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ່ 4 ຊຶ່ງຈະເລີ່ມຕົ້ນສຳຫລວດໃນເດືອນ 4 ປີ 2007 ຈົນໄປຮອດ ເດືອນ 3 ຂອງປີ 2007 ຈຶ່ງສິ້ນສຸດການສຳຫລວດຢູ່ພາກສະໜາມ.

ເປົ້າໝາຍຂອງການສຳຫລວດ ແມ່ນບັນດາຄົວເຮືອນສ່ວນບຸກຄົນ ເພື່ອເກັບກຳ ແລະສຳພາດຫົວໜ້າ ແລະ ສະມາຊິກໃນຄົວເຮືອນ ກ່ຽວກັບລາຍຮັບ, ການໃຊ້ຈ່າຍ ແລະການຊົມໃຊ້ໃນຄົວເຮືອນຂອງເຂົາເຈົ້າ ຊຶ່ງອາດຈະ ແມ່ນໃຊ້ຈ່າຍເປັນເງິນສົດ ຫລືນຳໃຊ້ຜົນຜະລິດຂອງຕົນເອງກໍ່ຕາມ ກໍ່ແມ່ນເອົາມາຕີລາຄາເປັນມູນຄ່າ.

ຈຸດປະສົງຕົ້ນຕໍ ຂອງການສຳຫລວດຄັ້ງນີ້ ປະກອບມີ :

- ສາມາດຄິດໄລ່ເສັ້ນຄວາມທຸກຍາກ
- ຄາດຄະເນການຊົມໃຊ້ຂອງຄົວເຮືອນ
- ສຶກສາເບິ່ງເງື່ອນໄຂການດຳລົງຊີວິດຂອງປະຊາຊົນ
- ຄາດຄະເນຜົນຜະລິດຂອງຄົວເຮືອນ
- ການນຳໃຊ້ແຮງງານ
- ຕົວຊີ້ບອກ ກ່ຽວກັບການສຶກສາ
- ຕົວຊີ້ບອກ ກ່ຽວກັບສາທາລະນະສຸກ

2. <u>**ໜ້າທີ່ຂອງນັກເດີນສຳຫລວດ**</u> :

ຄຸນນະພາບ ຂອງການສຳຫລວດນີ້ ແມ່ນຂຶ້ນກັບນັກເດີນສຳຫລວດເປັນສ່ວນໃຫ່ຍ ໃນການນຳມີຄຸນນະ ພາບ ຜົນຂອງການສຳຫລວດ. ດັ່ງນັ້ນ ມັນຈຶ່ງມີຄວາມສຳຄັນຫລາຍ ທີ່ນັກເດີນສຳຫລວດ ແລະນັກກວດກາ ຈະ ຕ້ອງປະຕິບັດຕາມຄຳແນະນຳໃນປື້ມຄູ່ມືນີ້. ບັນດານັກເດີນສຳຫລວດມີໜ້າທີ່ ແລະພັນທະຕ່າງໆກ່ອນສຳຫລວດ ໃນໄລຍະສຳຫລວດ ແລະພາຍຫລັງສຳຫລວດແລ້ວ.

**2.1. ໜ້າທີ່ກ່ອນການສຳຫລວດ :**

- ເຂົ້າຮ່ວມການຝຶກອົບຮົມ ທີ່ຄະນະຮັບຜິດຊອບການສຳຫລວດຈັດຂຶ້ນ.
- ກວດກາ ເອກະສານສຳຫລວດ, ໃບສອບຖາມ, ອຸປະກອນຮັບໃຊ້ການສຳຫລວດ ກ່ອນການອອກເດີນ ທາງ.
- ສະເໜີຕົນເອງຕໍ່ກັບອຳນາດການປົກຄອງບ້ານທີ່ຕົນຈະປະຕິບັດການສຳຫລວດ.
- ຂຶ້ນບັນຊີຄົວເຮືອນ ແລະຄັດເລືອກຄົວເຮືອນຕົວແທນ.
- ນັດພົບກັບບັນດາຄົວເຮືອນຕົວແທນ ໂດຍຜ່ານຄະນະບ້ານເປັນຊີ້ທາງ.
- ຈົດກ່າຍລະຫັດທີ່ຕັ້ງໃສ່ໜ້າປົກຂອງໃບສອບຖາມ ແລະປື້ມບັນທຶກປະຈຳວັນຂອງແຕ່ລະຄົວເຮືອນຕົວ ແທນ.

### 2.2. ໜ້າທີ່ໃນຊ່ວງໄລຍະເດີນສຳຫລວດ :

- ສຳພາດທຸກຄຳຖາມທີ່ໄດ້ມີໃນແບບໃບສອບຖາມ. ໃບສອບຖາມ ປະກອບມີທັງໝົດ 6 ແບບໃບ ສອບຖາມ ດັ່ງນີ້ :
    1. ບັນຊີຄົວເຮືອນ
    2. ໃບສອບຖາມບ້ານ ປະກອບມີ 8 ພາກ
    3. ໃບສອບຖາມຄົວເຮືອນ ປະກອບມີ 16 ພາກ
    4. ການບັນທຶກປະຈຳວັນ ປະກອບມີ 7 ຄຳຖາມ
    5. ໃບສອບຖາມການນຳໃຊ້ເວລາ ປະກອບມີ 22 ຄຳຖາມ
    6. ໃບສອບຖາມ ລາຄາສິນຄ້າ ແລະບໍລິການ ໃນບ້ານ

### 2.3. ໜ້າທີ່ພາຍຫລັງສຳເລັດການສຳຫລວດ :

- ນຳສິ່ງບັນດາເອກກະສານທີ່ໄດ້ສຳພາດ ແລະຢັ້ງຢືນການຈົດກ່າຍຄົບຖ້ວນແລ້ວ ໃຫ້ນັກກວດກາ ລວມມີ :
    1. ບັນຊີຄົວເຮືອນ
    2. ໃບສອບຖາມບ້ານ ປະກອບມີ 8 ພາກ
    3. ໃບສອບຖາມຄົວເຮືອນ ປະກອບມີ 16 ພາກ
    4. ການບັນທຶກປະຈຳວັນ ປະກອບມີ 7 ຄຳຖາມ
    5. ໃບສອບຖາມການນຳໃຊ້ເວລາ ປະກອບມີ 22 ຄຳຖາມ
    6. ໃບສອບຖາມ ລາຄາສິນຄ້າ ແລະບໍລິການ ໃນບ້ານ
- ບົດລາຍງານ ກ່ຽວກັບບັນຫາຫຍຸ້ງຍາກຕ່າງໆ ຫລືຂໍ້ສັງເກດຕ່າງໆທີ່ເຮັດຮ່ວມກັບບ້ານ ໃຫ້ນັກກວດກາ

### 2.4. ການຝຶກອົບຮົມ ນັກເດີນສຳຫລວດ :

ຜູ້ທີ່ຖືກຄັດເລືອກ ຈະມາເຮັດວຽກເປັນນັກເດີນສຳຫລວດ ຈຳເປັນຕ້ອງໄດ້ຜ່ານການຝຶກອົບຮົມຢ່າງລະອຽດຄັກແນ. ການຝຶກອົບຮົມປະກອບມີ ການຝຶກອົບຮົມຢູ່ໃນຫ້ອງຮຽນ ແລະຝຶກອົບຮົມຕົວຈິງ (ພາກສະໜາມ). ນັກເດີນສຳຫລວດ ຈະຕ້ອງອ່ານ ແລະຄົ້ນຄວ້າ ທຸກຄຳເວົ້າໃນປຶ້ມຄູ່ມື ແລະບັນດາໃບສອບຖາມ, ວິທີການຈົດກ່າຍທຸກຂັ້ນຕອນ, ນັກເດີນສຳຫລວດສາມາດຊັກຖາມໄດ້ທຸກເວລາໃນເວລາຝຶກອົບຮົມ ເພື່ອຫລີກເວັ້ນການເຮັດຜິດພາດໃນເວລາປະຕິບັດວຽກງານຕົວຈິງ.

ການຝຶກອົບຮົມນັກເດີນສຳຫລວດ ຈະໃຊ້ເວລາຢູ່ 10 ວັນ, ບໍ່ນັບການເດີນທາງໄປ ແລະກັບຂອງນັກເດີນສຳຫລວດ ຄື :

1. ຮຽນພາກທິດສະດີຕ່າງໆ 4 ວັນ
2. ລົງຝຶກຫັດຕົວຈິງຢູ່ບ້ານ 2 ວັນ (ຮັບຜິດຊອບຢ່າງໜ້ອຍ 4 ຄົວເຮືອນ)
3. ທົບທວນຄືນ ບັນຫາທີ່ພົບພໍ້ ພ້ອມທັງແກ້ໃຂຂໍ້ຂັດຂ້ອງຕ່າງໆ ທີ່ອາດເກີດຂື້ນໃນເວລາສຳຫລວດຕົວຈິງ 2 ວັນ.

4. ສະເນີວິທີການກວດກາໃບສອບຖາມ 1 ວັນ.
5. ມອບຮັບເອກກະສານກັບນັກເດີນສໍາຫລວດ 1 ວັນ.

## 3. ບັນດານິຍາມ :

### 3.1. ນິຍາມຄົວເຮືອນ ສ່ວນບຸກຄົນ :

1. ຄົວເຮືອນທີ່ມີຄົນຜູ້ດຽວ ແມ່ນຄົນຜູ້ໜຶ່ງ ທີ່ຢູ່ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງເຮືອນຢູ່, ຊອກຫາອາຫານສໍາລັບຕົວລາວເອງ ແລະສິ່ງຂອງທີ່ຈໍາເປັນອື່ນໆສໍາຫລັບການດໍາລົງຊີວິດ ໂດຍປັດສະຈາກການຊອກຫາຮ່ວມກັນກັບຄົນອື່ນໆ
2. ຄົວເຮືອນມີຫລາຍຄົນ ແມ່ນກຸ່ມຄົນທີ່ມີສອງ ຫຼືຫລາຍກ່ວານັ້ນ ທີ່ຢູ່ທັງໝົດ ຫຼືສ່ວນໜຶ່ງຂອງເຮືອນຢູ່, ຊອກຫາອາຫານ ແລະສິ່ງຂອງຕ່າງໆທີ່ຈໍາເປັນໃນການດໍາລົງຊີວິດຮ່ວມກັນ. ປົກກະຕິແລ້ວຄົວເຮືອນແບບນີ້ປະກອບມີຜົວ,ເມັຽ ແລະລູກນ້ອຍ, ພີ່ນ້ອງ, ຄົນຮັບໃຊ້ ທີ່ອາໃສຢູ່ນໍາ. ຜູ້ໃຫ້ເຊົ່າເຮືອນຈະຕ້ອງເອົາອອກຕ່າງຫາກ ບໍ່ນັບເປັນສະມາຊິກຂອງຄົວເຮືອນ (ຄົວເຮືອນ ມັນແຕກຕ່າງກັນກັບຄອບຄົວ).

<u>ຕົວຢ່າງ 1</u>: ຄົວເຮືອນຂອງທ່ານຄໍາມີ, ມີສາມຄອບຄົວຢູ່ນໍາກັນຄື:

1) ຄອບຄົວຂອງທ່ານ ຄໍາມີ ຜົວ, ເມັຍ, ລູກຜູ້ບໍ່ທັນແຕ່ງງານ ແລະພີ່ນ້ອງ.

2) ຄອບຄົວລູກສາວ ຜົວ (ລູກເຂີຍ), ເມຍ ແລະລູກຂອງເຂົາເຈົ້າ.

3) ຄອບຄົວຂອງລູກຊາຍ ຜົວ, ເມຍ (ລູກໃພ້). ເຮືອນຫັລງນີ້ເອີ້ນວ່າຄົວເຮືອນໜຶ່ງ ໂດຍແມ່ນທ່ານຄໍາມີເປັນຫົວໜ້າຄົວເຮືອນ

<u>ຕົວຢ່າງ 2</u>: ຄົວເຮືອນຂອງທ່ານ ບຸນຕາ ຊຶ່ງມີຜົວ, ເມຍ, ລູກຊາຍ ແລະພີ່ນ້ອງ (ນ້ອງຊາຍຂອງເມຍ) ດໍາລົງຊີວິດຢູ່ຮ່ວມກັນໃນເຮືອນຫັລງດຽວກັນ ກໍລະນີນີ້ເອີ້ນວ່າຄົວເຮືອນນຶ່ງ.

### 3.2. ຫົວໜ້າຄົວເຮືອນ :

ຫົວໜ້າຄົວເຮືອນ ແມ່ນຜູ້ມີບົດບາດ ແລະເຄົາລົບນັບຖືຈາກບັນດາສະມາຊິກຂອງຄົວເຮືອນ, ສ່ວນຫລາຍລາວຈະເປັນຜູ້ຫາລາຍຮັບມາໃຫ້ຄົວເຮືອນຫລາຍກ່ວາສະມາຊິກຂອງຄົວເຮືອນ ທັງເປັນຜູ້ເບິ່ງແຍງສະວັດດີການຂອງຄົວເຮືອນ. ຫົວໜ້າຄົວເຮືອນອາດແມ່ນເພດຊາຍຜູ້ເປັນຜົວ ຫລື ອາດຈະແມ່ນເພດຍິງຜູ້ເປັນເມັຍ.

3.3. ສະມາຊິກໃນຄົວເຮືອນ :

ສະມາຊິກໃນຄົວເຮືອນປະກອບມີ :

1. ບຸກຄົນທີ່ດໍາລົງຊີວິດເປັນປົກກະຕິໃນຄົວເຮືອນນີ້ມາ ຈົນຮອດໄລຍະເວລາຂອງການສໍາຫລວດ.
2. ບຸກຄົນທີ່ດໍາລົງຊີວິດເປັນປົກກະຕິໃນຄົວເຮືອນນີ້ ແຕ່ບໍ່ມີໜ້າຊົ່ວຄາວ ເຊັ່ນ: ໄປຍາມພີ່ນ້ອງ, ໄປເຮັດວຽກທາງໄກໄລຍະສັ້ນ ແລະກໍລະນີອື່ນໆ ທີ່ມີໄລຍະ 6 ເດືອນລົງມາກ່ອນການສໍາຫລວດ.

3. ບຸກຄົນທີ່ດຳລົງຊີວິດບໍ່ປົກກະຕິຢູ່ເຮືອນຫລັງນີ້, ໝາຍວ່າບໍ່ມີຊື່ໃນສຳມະໂນຄົວ ແຕ່ບຸກຄົນເຫລົ່ານັ້ນໄດ້ຢູ່ນຳຄົວເຮືອນຫລັງນີ້ຫລາຍກ່ວາ 6 ເດືອນຂື້ນໄປກ່ອນການສຳຫລວດ ກໍ່ໃຫ້ນັບເຂົ້າເປັນສະມາຊິກຂອງຄົວເຮືອນນີ້.

### 3.4. ປະເພດວິດຖ່າຍ:

- ວິດຊຶມຊັກໂຄກ ແມ່ນວິດຊຶມທີ່ການກໍ່ສ້າງໄດ້ມາດຕະຖານ ມີລະບົບລ້າງທັນສະໄໝ ແລະ ມີລະບົບການກັ່ນຕອງ
- ວິດຊຶມທຳມະດາ ແມ່ນວິດທີ່ມີການກໍ່ສ້າງໄດ້ມາດຖານ, ມີລະບົບການກັ່ນຕອງ ແລະໄດ້ຕັກນ້ຳລ້າງເອງ
- ວິດຂຸດຂຸມ ແມ່ນວິດທີ່ຂຸດເປັນຂຸມ ແລ້ວເອົາຫົວວິດໃສ່ ຫຼືເອົາໄມ້ມາກາດ ບໍ່ມີລະບົບການກັ່ນຕອງ
- ບໍ່ມີວິດ ໝາຍເຖິງການໄປຖ່າຍໜັກ ຫຼືເບົາຕາມສະຖານທີ່ແຄມບ້ານ ຫຼືແຄມເຮືອນ( ປ່າ, ຫ້ວຍ ແລະໜອງບຶງ).

### 3.5. ນ້ຳສະອາດ :

- ນ້ຳສ້າງມີຝາປິດ (ນ້ຳສ້າງບາດານ, ນ້ຳສ້າງທຳມະດາ) ມີການຮັກສາຄວາມສະອາດ ເພື່ອໃຊ້ດື່ມ ແລະໃຊ້ແຕ່ງກິນໄດ້.
- ນ້ຳທໍ ແມ່ນໝາຍເຖິງນ້ຳທີ່ໄດ້ມາຈາກແຫຼ່ງອື່ນໆ ໂດຍຜ່ານທໍ່ເຊັ່ນ: ນ້ຳປະປາ, ນ້ຳລິນ ແລະນ້ຳທໍ່ອື່ນໆ ທີ່ຖືວ່າສະອາດ ເພື່ອໃຊ້ດື່ມ ແລະຄົວກິນໄດ້.

### 3.6. ຖານະອາໃສ :

- ເປັນເຈົ້າຂອງ ແມ່ນໝາຍເຖິງເຈົ້າຂອງເຮືອນຜູ້ມີກຳມະສິດໃນເຮືອນຫລັງນີ້ ຫຼືກຳລັງແລ່ນໜັງສື ເພື່ອມີກຳມະສິດເປັນເຈົ້າຂອງເຮືອນ. ບາງຄົນອາດເປັນເຈົ້າຂອງເຮືອນຈາກມໍລະດົກຕົກທອດໃຫ້, ໃນກໍລະນີນີ້ກໍ່ຖືວ່າແມ່ນເຈົ້າຂອງ, ເຖິງວ່າຜູ້ມອບໃຫ້ຈະຍັງບໍ່ທັນເສັຽຊີວິດ ຫຼືອາໃສຢູ່ນຳກັນຢູ່.
- ຜູ້ເຊົ່າ ແມ່ນໝາຍເຖິງຜູ້ເຊົ່າ ແລະອາໃສຢູ່ເຮືອນຫລັງນັ້ນໝົດຫລັງ ຫຼືສ່ວນໜື່ງຂອງເຮືອນ ແລະເສັຍຄ່ານ້ຳ, ເສັຍຄ່າໄຟຟ້າເອງ (ນັບທັງພີ່ນ້ອງໃຫ້ຢູ່ລ່າ)
- ຢູ່ເຮືອນຂອງນາຍຈ້າງ ຫຼື ລັດໃຫ້ຢູ່ລ້າ: ແມ່ນໝາຍເຖິງເຮືອນທີ່ຢູ່ໄດ້ຍ້ອນການເຮັດວຽກ. ເຮືອນຫລັງດັ່ງກ່າວ ແມ່ນເປັນຂອງຜູ້ໃຊ້ແຮງງານ ຫຼືນາຍຈ້າງ ແລະໄດ້ໃຫ້ຄົວເຮືອນຜູ້ກ່ຽວຢູ່. ໂດຍເປັນສ່ວນໜື່ງຂອງເງິນເດືອນ ຫຼືຄ່າແຮງງານ.

### 3.7. ການໃຊ້ຈ່າຍຂອງຄົວເຮືອນ :

ການໃຊ້ຈ່າຍຂອງຄົວເຮືອນແມ່ນ:

ກ. ການໃຊ້ຈ່າຍເປັນເງິນສົດ ໃນການຊື້ສິນຄ້າ ແລະບໍລິການຮັບໃຊ້ ຊີວິດການເປັນຢູ່.

ຂ. ມູນຄ່າຂອງສິນຄ້າ ແລະບໍລິການຮັບໃຊ້ ເພື່ອການໃຊ້ຈ່າຍຕາມພາກສ່ວນຜະລິດຕະພັນຕ່າງໆ ຂອງຄົວເຮືອນ ແລະການຊົມໃຊ້ (ນັບທັງມູນຄ່າເຊົ່າເຮືອນ) ຫຼືໄດ້ໃຫ້ຜູ້ອື່ນລ້າ.

ຄ. ການໃຊ້ຈ່າຍເປັນມູນຄ່າ ຫຼືເປັນວັດຖຸສຳລັບພາສີ, ບໍລິຈາກ, ດອກເບັ້ຍຂອງເງິນກູ້ຢືມ ແລະອື່ນໆທີ່ບໍ່ໃຊ້ເຂົ້າໃນການຊົມໃຊ້ .

**3.8. ຖານະຕຳແໜ່ງງານ :**

- ລູກຈ້າງ: ແມ່ນໝາຍເຖິງຜູ້ທີ່ໄດ້ເຮັດວຽກໃນຖານະທີ່ເປັນລູກຈ້າງ ໄດ້ຮັບຄ່າຈ້າງຈາກນາຍຈ້າງ, ມັນອາດເປັນຄ່າແຮງງານ (ເງິນເດືອນທີ່ເປັນເງິນສົດ ຫລືເປັນວັດຖຸ). ລູກຈ້າງເລົ່ານີ້ປະກອບມີ: ຜູ້ອອກແຮງງານໃຫ້ລັດ, ຜູ້ອອກແຮງງານໃຫ້ລັດວິສາຫະກິດ, ລັດ - ເອກະຊົນ ແລະເອກະຊົນ.

ຕົວຢ່າງ: ພະນັກງານລັດຖະກອນ, ກຳມະກອນໃນໂຮງຈັກໂຮງງານ, ຫົວໜ່ວຍທຸລະກິດ, ຫ້າງຮ້ານ ຫລືຜູ້ອອກແຮງງານຮັບຈ້າງອື່ນໆ.

- ຜູ້ອອກແຮງງານໃຫ້ລັດ: ໝາຍເຖິງຈຳພວກເຮັດວຽກຢູ່ໃນພາກສ່ວນບໍລິຫານ, ຕຸລາການ ທີ່ບໍ່ມີລັກສະນະເປັນຫົວໜ່ວຍທຸລະກິດ ແລະແມ່ນລັດເປັນຜູ້ເບີກຈ່າຍເງິນເດືອນໃຫ້.

- ຜູ້ອອກແຮງງານໃຫ້ລັດວິສາຫະກິດ: ຫມາຍເຖິງຈຳພວກທີ່ເຮັດວຽກ ແລະໄດ້ຮັບເງິນເດືອນຢູ່ໃນບັນດາຫົວຫນ່ວຍທຸລະກິດຂອງລັດ.

- ຜູ້ອອກແຮງງານໃຫ້ລັດ - ເອກກະຊົນ: ຫມາຍເຖິງຜູ້ອອກແຮງງານທີ່ເຮັດວຽກນຳບັນດາຫົວຫນ່ວຍວິສາຫະກິດປະສົມລະຫວາງລັດ ກັບເອກະຊົນ.

- ຜູ້ອອກແຮງງານໃຫ້ເອກກະຊົນ: ຫມາຍເຖິງຜູ້ທີ່ເຮັດວຽກໃຫ້ຜູ້ໃຊ້ແຮງງານ (ນາຍຈ້າງ) ແລະໄດ້ຮັບຄ່າເປັນເງິນເດືອນ,ບຳເນັດ,ເບ້ຍມື້, ຫລືໄດ້ຮັບຄ່າແຮງງານຕາມວຽກທີ່ມີບາງຄັ້ງຄາວ ຫລືວັດຖຸຕ່າງໆຈາກຜູ້ໃຊ້ແຮງງານ.

- ນາຍຈ້າງ : ຫມາຍເຖິງບຸກຄົນທີ່ດຳເນີນການຜະລິດ, ທຸລະກິດຂອງຕົນເອງ ແລະໄດ້ວາຈ້າງ ຜູ້ອອກແຮງງານນັ້ນ ແຕ່ນື່ງຄົນຂື້ນໄປ.
- ເຮັດວຽກໃຫ້ຕົນເອງ: ຫມາຍເຖິງຜູ້ທີ່ເຮັດວຽກໃຫ້ຕົນ (ນອກຈາກເຮັດໄຮ່, ເຮັດນາ, ເຮັດສວນ, ລ້ຽງສັດ ແລະວຽກອື່ນໆທີ່ກາວກັບກະສິກຳ) ເຊັ່ນ: ພໍ່ຄ້ານ້ອຍ, ຊ່າງໄມ້, ແຕ່ບໍ່ໄດ້ວ່າຈ້າງຜູ້ອອກແຮງງານເຮັດວຽກໃຫ້ຕົນເອງ ຫລືເພື່ອກຳໄລ.
- ຜູ້ທີ່ເຮັດວຽກໃຫ້ຄອບຄົວ: ຫມາຍເຖິງບັນດາສະມາຊິກໃນຄົວເຮືອນທີ່ເຮັດວຽກໃນວິສາຫະກິດ ຫລືການຜະລິດ - ທຸລະກິດຂອງຄອບຄົວໂດຍທີ່ບໍ່ໄດ້ຮັບຄ່າຈ້າງ ຫລືກຳໄລ
- ຊາວກະຊິກອນ: ແມ່ນນັບລວມຜູ້ທີ່ເຮັດໄຮ, ເຮັດນາ, ເຮັດສວນ, ລ້ຽງສັດ ທີ່ກ່ຽວກັບການຜະລິດກະສິກຳ ແຕ່ບໍ່ແມ່ນຮູບແບບທຸລະກິດ.
- ຜູ້ຫວ່າງງານ: ແມ່ນບຸກຄົນທີ່ສາມາດເຮັດວຽກໄດ້ ແຕ່ບໍ່ໄດ້ເຮັດວຽກງານຢ່າງໃດເລີຍ ຫລືກຳລັງຊອກວຽກເຮັດຢູ່.

- ນັກຮຽນ/ນັກສຶກສາ: ທຸກຄົນທີ່ເຂົ້າໂຮງຮຽນເປັນປົກກະຕິ ໃນສະຖາບັນສຶກສາລັດ ຫຼືເອກະຊົນ, ລາວຕ້ອງເປັນນັກຮຽນຕາມເວລາທີ່ປົກກະຕິ ບໍ່ໄດ້ປະກອບກິດຈະກຳເສດຖະກິດເປັນປະຈຳ.
- ແມ່ເຮືອນ: ໝາຍເຖິງຜູ້ທີ່ເຮັດວຽກ, ອາດນັບທັງແມ່ຍິງ ຫຼືຜູ້ຊາຍ ເຊິ່ງເຮັດວຽກບ້ານ ການເຮືອນຢູ່ໃນຄົວເຮືອນຂອງຕົນ ແລະບໍ່ໄດ້ເຮັດເພື່ອຄ່າຈ້າງ ຫຼືກຳໄລ. ຖ້າຫາກບຸກຄົນເຮັດວຽກໃນທຸລະກິດຂອງຄົວເຮືອນ, ລາວຕ້ອງຖືກນັບເປັນປະເພດເຮັດວຽກໃຫ້ຕົນເອງ ຫຼືປະເພດເຮັດວຽກໃຫ້ຄົວເຮືອນໂດຍບໍ່ມີຄ່າຈ້າງ. ຜູ້ທີ່ເຮົາວຽກບ້ານການເຮືອນ ເພື່ອຈ້າງ ບໍ່ຕ້ອງຈົດເຂົ້າປະເພດນີ້ ໃຫ້ຈົດຢູ່ປະເພດຜູ້ອອກແຮງງານໃນພາກສ່ວນເອກະຊົນ.
- ເບັ້ຍບຳນານ ຫຼືແກ່ສາລາ: ໝາຍເຖິງຜູ້ທີ່ບອກວ່າໃນ 12 ເດືອນຜ່ານມາ ສ່ວນຫລາຍແລ້ວ ລາວບໍ່ໄດ້ເຮັດກິດຈະກຳເສດຖະກິດຍ້ອນວ່າ ລາວລາອອກຈາກການ ແລ້ວມີເບັ້ຍບຳນານ, ເຖົ້າແກ່ ຫຼືສະມັກໃຈພັກຜ່ອນລ້າໆ.
- ພິການ ຫຼືເຈັບປ່ວຍດົນ: ໝາຍເຖິງຜູ້ທີ່ບອກວ່າໃນ 12 ເດືອນຜ່ານມາ ສ່ວນຫລາຍແລ້ວລາວບໍ່ໄດ້ເຮັດກິດຈະກຳເສດຖະກິດ ຍ້ອນວ່າລາວເຈັບເປັນດົນນານ ຫຼືພິການ ບໍ່ສາມາດທີ່ຈະເຮັດວຽກໄດ້.

**4. ການຂຶ້ນບັນຊີຄົວເຮືອນ :**

ໜ້າວຽກທຳອິດຂອງນັກເດີນສຳຫລວດ ພາຍຫລັງທີ່ໄດ້ພົບປະກັບຄະນະບ້ານແລ້ວ ແມ່ນບັນຊີລາຍຊື່ຄົວເຮືອນ. ຈຸດປະສົງຂອງການສ້າງບັນຊີຄົວເຮືອນ ແມ່ນເພື່ອກຳນົດ ຈຳນວນຄົວເຮືອນທັງໝົດ ໃນບ້ານ ເພື່ອຄັດເລືອກເອົາຄົວເຮືອນຕົວແທນໃນການສຳຫລວດ.

ນັກເດີນສຳຫຼວດຈະຕ້ອງບັນທຶກຊື່ຂອງແຕ່ລະຫົວໜ້າຄົວເຮືອນເຂົ້າໃນບັນຊີຄົວເຮືອນໂດຍ ໄດ້ຮັບການຊ່ວຍເຫລືອຈາກຄະນະບ້ານ ແລະອີງໃສ່ປື້ມສຳມະໂນຄົວ, ບັນຊີຄົວເຮືອນຂອງບ້ານທີ່ໄດ້ຂຶ້ນຄັ້ງລ້າສຸດ.

- **ບົດບາດ, ໜ້າທີ່ ຂອງນາຍບ້ານ :**

ຖ້າເປັນໄປໄດ້, ກ່ອນລົງໄປບ້ານໃຫ້ຕິດຕໍ່ກັບນາຍບ້ານ ເພື່ອກຳນົດເວລາພົບປະໃຫ້ເໝາະສົມ. ຖ້າທ່ານບໍ່ໄດ້ນັດພົບກັບນາຍບ້ານກ່ອນ, ເມື່ອເວລາລົງໄປເຖິງ ໃຫ້ໄປພົວພັນໄວເທົ່າທີ່ຈະໄວໄດ້ ແລະ ໃນເວລາ ພົບນັ້ນ ຄວນແນະນຳວ່າ ທ່ານແມ່ນໃຜ ມາເພື່ອຈຸດປະສົງຫຍັງ?

ນາຍບ້ານຈະຊ່ວຍທ່ານ ໄດ້ 3 ວຽກໃຫ່ຍຕົ້ນຕໍ ດັ່ງນີ້ :

– ລາວ ຈະເປັນຜູ້ບອກ ຈຳນວນຄົວເຮືອນທັງໝົດໃນບ້ານເພື່ອຊ່ວຍໃນການສ້າງບັນຊີຄົວເຮືອນ ຂອງທ່ານ.

– ລາວຈະເປັນຜູ້ບອກວ່າ ຊື່ຫົວໜ້າແຕ່ລະຄົວເຮືອນ ແລະຈຳນວນສະມາຊິກໃນແຕ່ລະຄົວເຮືອນ.

– ຈະຊ່ວຍບອກທ່ານ ໃຫ້ຮູ້ ທີ່ຕັ້ງຂອງຄົວເຮືອນ ທີ່ເປັນເປົາໝາຍຂອງການສຳຫຼວດ.

ເວລາທີ່ທ່ານຫາກສຳເລັດສ້າງບັນຊີຄົວເຮືອນພາຍໃນບ້ານແລ້ວ, ໃຫ້ນາຍບ້ານຊ່ວຍກວດເບິ່ງຄືນ ຈຳນວນຄົວເຮືອນດັ່ງກ່າວ ເພື່ອຢັ້ງຢືນວ່າບັນຊີລາຍຊື່ຄົວເຮືອນຄົບຖ້ວນຖືກຕ້ອງ, ມີໜ້າຕົວຈິງໃນບ້ານ ເພື່ອເຮັດໃຫ້ການສຳຫຼວດສາມາດດຳເນີນໄປໄດ້ດີ.

- **ການກວດສອບບ້ານໃຫ້ຖືກຕ້ອງ**

ທ່ານຕ້ອງໝັ້ນໃຈວ່າທ່ານໄດ້ໄປຖືກບ້ານແລ້ວ. ບາງຄັ້ງ, ທ່ານອາດພົບສະພາບຂອງບ້ານມີການປ່ຽນແປງ:

- ຫາກບ້ານໄດ້ປ່ຽນຊື່ໃໝ່, ການເດີນສຳຫຼວດຖືວ່າປົກກະຕິ. ບັນທຶກຊື່ບ້ານໃໝ່ໃສ່ ແລະຂຽນຊື່ບ້ານເກົ່າ ໃສ່ໃນວົງເລັບໄວ້.
- ຖ້າບ້ານແຍກອອກເປັນ 2 ບ້ານໃໝ່, ໃຫ້ລວມເອົາທັງສອງບ້ານເລີຍ.
- ຖ້າບ້ານຫາກລວມເຂົາກັບບ້ານອື່ນ ແລ້ວຕັ້ງເປັນບ້ານນຶ່ງໃໝ່ໂດຍທີ່ ທີ່ຕັ້ງຂອງຄົວເຮືອນບໍ່ໄດ້ປ່ຽນແປງ ຫລືຍົກຍ້າຍໄປໃສ່ນັ້ນ. ນັກເດີນສຳຫລວດຕ້ອງເລືອກເອົາ ແຕ່ຈຳນວນຄົວເຮືອນໃນບ້ານເດີມເທົ່ານັ້ນ.
- ຖ້າບ້ານຫາກລວມເຂົາກັບບ້ານອື່ນ ໂດຍທີ່ຕັ້ງຂອງຄົວເຮືອນໄດ້ມີການປ່ຽນແປງ ໂດຍໄດ້ຍົກຍ້າຍໜີຈາກບ່ອນເກົ່າ ແລະປົນເປກັບບ້ານອື່ນ. ກໍລະນີນີ້ ນັກເດີນສຳຫລວດຕ້ອງເລືອກເອົາ ແຕ່ຈຳນວນຄົວເຮືອນໃນບ້ານໃໝ່ທັງໝົດເລີຍ.

ຖ້າທ່ານພົບຄວາມຫຍຸ້ງຍາກ ໃນການກຳນົດເຂດແດນບ້ານ, ພະຍາຍາມຕິດຕໍ່ພົບກັບນັກກວດກາຂອງທ່ານໂດຍດ່ວນ ຫລືລາຍງານໂດຍກົງຫາສູນສະຖິຕິແຫ່ງຊາດ (ທ່ານ ທິບສະຫວັນ ໂທຣ 020 5633771). ຜົນທີ່ໄດ້ຮັບຈາກການສຳຫຼວດຈະມີຄ່າສູງ ກໍຕໍ່ເມື່ອວ່າ ທຸກຄົວເຮືອນ ໄດ້ຂຶ້ນບັນຊີລາຍຊື່ໝົດ ແລະກໍ່ເປັນການຊ່ວຍແກ້ໄຂບັນຫາໃຫ້ວ່ອງໄວ.

- **ຄົວເຮືອນໃດຄວນຈົດເຂົາບັນຊີ**

ທ່ານ ຕ້ອງຈົດ ລາຍຊື່ ຄົວເຮືອນທັງໝົດທີ່ມີທີ່ຢູ່ເປັນປະຈຳ ໃນເວລາການສຳຫຼວດ ໝາຍວ່າ ມີທີ່ຕັ້ງຂອງເຮືອນຢູ່ໃນຂອບເຂດຊາຍແດນຂອງບ້ານນັ້ນ.

- ບໍ່ຄວນຈົດລາຍຊື່ຄົວເຮືອນທີ່ມີທີ່ພັກບໍ່ຖາວອນເຊັ່ນ ຕູບ, ຖຽງນາ...ໄລຍະລະດູການປູກພືດ, ເກັບກ່ຽວ...
- ບໍ່ຈົດເອົາຄົວເຮືອນທີ່ໄດ້ຍົກຍ້າຍໜີອອກຈາກບ້ານ ແຕ່ຍັງມີສຳມະໂນຄົວຢູ່ບ້ານ.
- ບໍ່ຈົດເອົາເຮືອນພວມ ປຸກສ້າງ ຫຼື ເຮືອນ ບໍ່ມີໃຜ ພັກຢູ່.
- ໃຫ້ຈົດເອົາຄົວເຮືອນ ຊຶ່ງມີທີ່ຢູ່ປົກກະຕິໃນບ້ານ ແຕ່ຜູ້ກ່ຽວໄປຢູ່ບ່ອນອື່ນຊົ່ວຄາວ.

- **ລາຍຊື່ຄົວເຮືອນທີ່ບໍ່ຄວນຈົດເຂົ້າບັນຊີ:**

- ຄົວເຮືອນສະຖານທູດຕ່າງປະເທດທີ່ອາໄສຢູ່ລາວ, ຫຼື ຊາວຕ່າງດາວທີ່ອາໄສຢູ່ລາວຊົ່ວຄາວ ຍ້ອນມາ

ເຮັດວຽກກັບອົງການຈັດຕັ້ງສາກົນຕ່າງໆ ຫລື ບໍລິສັດ, ມາຄ້າຂາຍໄລຍະໃດນຶ່ງ (ຫວຽດນາມ, ຈີນ, ໄທ...)

– ຄົວເຮືອນລວມໝູ່, ວັດ, ຫໍພັກ...

## 5. ວິທີການຄັດເລືອກຕົວແທນ :

ການຄັດເລືອກຕົວແທນໃນການສຳຫລວດຄັ້ງນີ້ ໄດ້ອີງໃສ່ຜົນຂອງການສຳຫລວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນຄັ້ງທີ່ 3 ໃນສົກປີ 2002/03, ໂດຍມາປະເມີນຄ່າຜິດພາດຂອງແຕ່ລະຕົວຊີ້ບອກຜ່ານມາ ແລະຊອກຫາ ຄວາມເປັນໄປໄດ້ຂອງຂໍ້ມູນ. ຜ່ານການຄິດໄລ່ ແລະຕີລາຄາຜ່ານມານັ້ນ ຈຶ່ງສະເໜີ ການສຳຫລວດການຊົມໃຊ້ ແລະໃຊ້ຈ່າຍຂອງຄົວເຮືອນຄັ້ງທີ່ 4 ສົກປີ 2007 ນີ້ ມີ 519 ບ້ານຕົວແທນໃນຂອບເຂດ ທົ່ວປະເທດ ໂດຍເລືອກເອົາ 15 ຄົວເຮືອນຕົວແທນ ໃນແຕ່ລະບ້ານ ຈະໄດ້ຢູ່ 7785 ຄົວເຮືອນຕົວແທນ.

- ຂັ້ນຕອນການຄັດເລືອກຄົວເຮືອນຕົວແທນ :
  1. ຂັ້ນຕອນ 1 : ຂື້ນບັນຊີລາຍຊື່ຄົວເຮືອນທັງໝົດນຳນາຍບ້ານ.
  2. ຂັ້ນຕອນ 2 : ເລືອກເອົາຄົວເຮືອນເກົ່າທີ່ຖືກສຳພາດແລ້ວໃນປີ 2002/03 (ໄດ້ມີບັນຊີລາຍຊື່ຄັດຕິດມາພ້ອມນີ້)
  3. ຂັ້ນຕອນ 3 : ກໍລະນີ ຄົວເຮືອນເກົ່າບໍ່ຄົບ ເຄິ່ງນຶ່ງ ແມ່ນໃຫ້ຄັດເລືອກເອົາຄົວເຮືອນ ໃໝ່ທົດແທນໃຫ້ຄົບ 15 ຄົວເຮືອນຕົວແທນຕໍ່ນຶ່ງບ້ານ.
     a. ວິທີການດັ່ງນີ້ : ຄຳນວນຄ່າໄລຍະຫ່າງຂອງການສຸ່ມຕົວຢ່າງໂດຍໃຊ້ສູດ

K = ໄລຍະຫ່າງ

m = ຈຳນວນຄົວເຮືອນທັງໝົດ

n = 15 ຄົວເຮືອນ

$$K = \frac{\sum_{i=1}^{N} m_i}{n}$$

– ຊອກຫາຄົວເຮືອນຕົວແທນທຳອິດ ຄື : R (R ຈະຢູ່ລະຫວ່າງ 1 ເຖິງ K) ໂດຍວິທີຈົກສະຫລາກເອົາແບບບັງເອີນ.

– ຊອກຫາຄົວເຮືອນຕົວແທນທີສອງ R + K.

– ຊອກຫາຄົວເຮືອນຕົວແທນທີສາມ ( R + K ) + K = R + 2 K ແລະເຮັດຕໍ່ໄປ ຈົນຄົບຄົວເຮືອນຕົວແທນທີ່ທົດແທນ.

## ການຈົດກ່າຍເຂົ້າໃບສອບຖາມ ຂອງບ້ານ :

ໃບສອບຖາມ ເພື່ອສຳພາດນາຍບ້ານ ແມ່ນໃຫ້ສຳພາດ ໃນອາທິດທຳອິດຂອງເດືອນ. ກ່ອນການສຳພາດ ນັກເດີນສຳຫລວດຈະຕ້ອງໄດ້ກະກຽມຈົດກ່າຍຂໍ້ມູນທີ່ຈຳເປັນເຂົ້າກ່ອນໃນໜ້າປົກໃບສອບຖາມ ດັ່ງນີ້ :

**ລະຫັດທີ່ຕັ້ງ :**

ນັກເດີນສຳຫລວດຕ້ອງໄດ້ຂຽນຊື່ ແຂວງ, ເມືອງ, ບ້ານ ພ້ອມທັງໃສ່ລະຫັດ ໃນບ່ອນທີ່ກຳນົດໄວ້ ໃຫ້ຖືກຕ້ອງຕາມບັນຊີລາຍຊື່ບ້ານທີ່ນັກກວດກາຂອງທ່ານໄດ້ຈັດໄວ້ໃຫ້ ໃນເວລາຝຶກອົບຮົມ. ຈາກນັ້ນ ຈຶ່ງກຳນົດບ້ານນີ້ ແມ່ນເປັນບ້ານເຂດຕົວເມືອງ ຫລືຊົນນະບົດ ຊຶ່ງນັກເດີນສຳຫລວດ ຈະເຫັນໃນບັນຊີລາຍຊື່ບ້ານ ແລ້ວ ແຕ່ນັກເດີນສຳຫລວດ ຈະຕ້ອງໄດ້ຖາມນາຍບ້ານຕື່ມ ດັ່ງນີ້ :

ການກຳນົດບ້ານເປັນບ້ານຕົວເມືອງ ຫລືບ້ານຊົນນະບົດ ແມ່ນຂື້ນກັບ 5 ມາດຖານ ຂ້າງລຸ່ມນີ້ :

1. ມີຈຳນວນຄົວເຮືອນ 100 ຄົວເຮືອນຂື້ນໄປ ຫລື ມີພົນລະເມືອງປະມານ 600 ຄົນຂື້ນໄປ.
2. ມີເສັ້ນທາງລົດໃຫ່ຍ ທ່ຽວໄດ້ຕະຫລອດປີ.
3. ມີນ້ຳປະປາໃຊ້ໃນບ້ານ.
4. ມີໄຟຟ້າໃຊ້.
5. ມີຕະຫລາດຊື້ຂາຍຕະຫລອດວັນ.

ຖ້າບ້ານໃດຫາກມີ 3 ໃນ 5 ມາດຖານ ໃຫ້ຖືວ່າບ້ານນີ້ ແມ່ນບ້ານຕົວເມືອງ ແລະໃຫ້ຈົດກ່າຍ ລະຫັດ "1" ເຂົ້າໃນຮູບ 4 ແຈ ທີ່ກຳນົດໄວ້.ຈາກນັ້ນ ກໍຈົດກ່າຍວັນເດືອນ ທີ່ສຳພາດນາຍບ້ານຕົວຈິງ.

ຈຳນວນຄົວເຮືອນທັງໝົດໃນບ້ານ ແມ່ນໝາຍເຖິງຈຳນວນຄົວເຮືອນຕົວຈິງ ທີ່ດຳລົງຊີວິດໃນບ້ານ ໂດຍອີງໃສ່ນິຍາມການຢູ່ອາໃສ່ຂອງພົນລະເມືອງ.

**ຮູບຮ່າງຂອງໃບສອບຖາມບ້ານ :**

ໃບສອບຖາມບ້ານປະກອບດ້ວຍ 8 ພາກໃຫ່ຍ ຄື:

1. ອົງການຈັດຕັ້ງບ້ານ ແລະບໍລິການ
2. ສະພາບເສດຖະກິດ ແລະການພັດທະນາ
3. ດິນ ແລະການນຳໃຊ້ດິນ
4. ພື້ນຖານໂຄງລາງ
5. ດ້ານການສຶກສາ
6. ດ້ານການດູແລສຸຂະພາບ
7. ດ້ານກະສິກຳ
8. ແຮງງານ, ລາຄາ, ການກໍ່ສ້າງ ແລະສະພາບອື່ນໆ

ຮູບຮ່າງຕາຕະລາງນີ້ ແບ່ງອອກເປັນ 5 ຊ່ອງ :

ຊ່ອງທີ່ 1: ເລກລຳດັບຂອງຄຳຖາມ

ຊ່ອງທີ່ 2: ເນື້ອໃນຄຳຖາມ

ຊ່ອງທີ່ 3: ຄຳຕອບທີ່ໃຫ້ເລືອກ

ຊ່ອງທີ່ 4: ລະຫັດຄຳຕອບ ທີ່ນັກເດີນສຳຫລວດຈະເປັນຜູ້ຈົດກ່າຍໃສ່

ຊ່ອງທີ່ 5: ໃຊ້ສຳຫລັບສັງເກດເບິ່ງວ່າ ຄຳຖາມໃດ ຖ້າຖືກເລືອກຕອບ ແລະຈະຕ້ອງເຕັ້ນຂ້າມໄປຫາຄຳຖາມໃດ.

**ວິທີການຈົດກ່າຍເຂົ້າແຕ່ລະພາກລະອຽດ :**

**I. ອົງການຈັດຕັ້ງ ແລະການບໍລິການ :**

ຈຸດປະສົງຂອງຫົວຂໍ້ນີ້ ເພື່ອສຶກສາ ເບິ່ງ ອົງການຈັດຕັ້ງໃນບ້ານ ມີຫັຍງແດ່ ແລະໄດ້ມີການຊ່ວຍເຫລືອ, ຊຸກຍູ້ສົ່ງເສີມ ແລະພັດທະນາບ້ານຕົນເອງໄດ້ສຳໃດ.

ຄຳຖາມ 1: ຢູ່ບ້ານນີ້ ມີອົງການຈັດຕັ້ງຂອງບ້ານເຫລົ່ານີ້ບໍ່ ? ຄຳຖາມນີ້ ສາມາດຕອບໄດ້ຫລາຍຄຳຕອບ ຕາມອົງການຈັດຕັ້ງຂອງບ້ານທີ່ມີ. ອົງການຈັດຕັ້ງນີ້ ໝາຍເຖິງອົງການຈັດຕັ້ງທີ່ສ້າງຕັ້ງຂື້ນໂດຍການເຫັນດີ ເຫັນພ້ອມຈາກປະຊາຊົນ ແລະຟດ້ຖືກອະນຸມັດຈາກລັດຖະບານເທົ່ານັ້ນ. ວິທີຈົດກ່າຍ ແມ່ນໃຫ້ຂີດວົງມົນອ້ອມລະຫັດທີ່ຖືກຕ້ອງ ໃນຊ່ອງລະຫັດຄຳຕອບ.

ຄຳຖາມທີ່ 2: ຢູ່ບ້ານນີ້ ມີໜ່ວຍບໍລິການຂອງລັດປະເພດໃດແດ່? ຄຳຖາມນີ້ ແມ່ນຖາມສະເພາະໜ່ວຍບໍລິການທີ່ຂຶ້ນກັບລັດ ຊື່ງໄດ້ສ້າງຕັ້ງຂື້ນໃນບ້ານ ເພື່ອຊຸກຍູ້ສົ່ງເສີມການຜະລິດ ກໍ່ຄືການບໍລິການອື່ນໆ. ຄຳຖາມນີ້ ສາມາດຕອບໄດ້ຫລາຍຄຳຕອບ ແລະໃຫ້ຂີດວົງມົນໃສ່ຄຳຕອບທີ່ຖືກຕ້ອງໃສ່ໃນຊ່ອງລະຫັດຄຳຕອບ.

ຄຳຖາມທີ່ 3: ຖາມກ່ຽວກັບຈຳນວນພົນລະເມືອງທີ່ດຳລົງຊີວິດ ຫລືມີໜ້າຕົວຈິງໃນບ້ານ. ພົນລະເມືອງທີ່ມີໜ້າຕົວຈິງໃນບ້ານນີ້ ແມ່ນໝາຍເຖິງພົນລະເມືອງທີ່ດຳລົງຊີວິດ, ມີຄອບຄົວ ເຮືອນຊານທີ່ຕັ້ງຢູ່ບ້ານ ມີສຳມະໂນຄົວຂຶ້ນກັບບ້ານ ເຖິງແມ່ນວ່າອາດຈະໄປເຮັດວຽກທາງໄກ, ກິນນອນໃນໂຮງຮຽນ ພັກຮຽນຈຶ່ງກັບມາ ກໍ່ໃຫ້ຖືວ່າເປັນພົນລະເມືອງທີ່ມີໜ້າຕົວຈິງໃນບ້ານນີ້. ຈົດກ່າຍເຂົ້າຈຳນວນພົນລະເມືອງທັງໝົດເຂົ້າໃນຊ່ອງລະຫັດຄຳຕອບ.

ຄຳຖາມທີ່ 4 : ໃນ 12 ເດືອນຜ່ານມາ ມີເດັກນ້ອຍເກີດໃໝ່ຈັກຄົນ? ຄຳຖາມນີ້ ຈະຊ່ວຍໃນການຕິດຕາມສະພາບການເກີດຂອງພົນລະເມືອງ. ໃຫ້ຈົດກ່າຍຈຳເກີດໃໝ່ຕົວຈິງ ຊື່ງລວມທັງຜູ້ເກີດແລ້ວຕາຍ. ການເກີດມີຊີວິດແມ່ນໃຫ້ອ່ານເບິ່ງນິຍາມ.

ຄຳຖາມທີ່ 5 : ໃນ 12 ເດືອນຜ່ານມາ ມີຄົນຕາຍຈັກຄົນໃນບ້ານນີ້ ? ຄຳຖາມນີ້ ຈະຊ່ວຍໃນການຕິດຕາມສະພາບການຕາຍຂອງພົນລະເມືອງ ໃນການຄິດໄລ່ອັດຕາການເພີ້ມຂື້ນຂອງພົນລະເມືອງແບບທຳມະຊາດ.

ຄຳຖາມທີ່ 6 : ໃນໄລຍະ 12 ເດືອນຜ່ານມາ ໃນບ້ານມີຄົນຍ້າຍເຂົ້າ-ຍ້າຍອອກ ຢູ່ບ້ານມີຈັກຄົນ? ຄຳຖາມນີ້ ແມ່ນເພື່ອຢັ່ງສືບເບິ່ງສະພາບການເໜັງຕີງຂອງພົນລະເມືອງ. ການຍ້າຍເຂົ້າ-ຍ້າຍອອກ ນີ້ ອາດຈະ ມີໃບສຳມະໂນຄົວຍົກມາ ຫລືບໍ່ມີກໍ່ຕາມ ຖ້າບຸກຄົນເຫລົ່ານັ້ນ ສະເໜີຈຸດປະສົງວ່າຈະມາຢູ່ເລີຍ ຫລືຍົກຍ້າຍອອກໄປເລີຍກໍ່

ຕ້ອງນັບເອົາ. ການຈົດກ່າຍ ແມ່ນແບ່ງອອກເປັນສອງຄຳຕອບ ແລະໃຫ້ຈົດກ່າຍເຂົ້າຈຳນວນທີ່ຖືກຕ້ອງໃນຊ່ອງລະຫັດຄຳຕອບ.

ຄຳຖາມທີ່ 7: ທີ່ຕັ້ງພູມສັນຖານຂອງບ້ານມີລັກສະນະແບບໃດ? ຄຳຖາມນີ້ ແມ່ນເພື່ອສຶກສາເບິ່ງຮູບຮ່າງລັກສະນະທີ່ຕັ້ງຂອງບ້ານ, ໂດຍເບິ່ງພື້ນພິວດິນທີ່ປະຊາຊົນໄດ້ຕັ້ງເຮືອນຊານຂອງເຂົາເຈົ້າໃສ່ ຕາມຄ້ອຍຊັນບໍ່? ສັນພູ, ພູພຽງ. ຄຳຖາມນີ້ ນັກເດີນສຳຫລວດທັງຖາມນາຍບ້ານ ແລະຕ້ອງໄດ້ສັງເກດດ້ວຍຕາຂອງຕົນເອງຄັກແນ່ ກ່ອນຈົດກ່າຍຄຳຕອບທີ່ຖືກຕ້ອງເຂົ້າໃນຊ່ອງລະຫັດຄຳຕອບ.

ຄຳຖາມທີ່ 8 : ຖາມກ່ຽວກັບບັນຫາຕ່າງໆ ທີ່ເກີດຂື້ນໃນບ້ານ ຊຶ່ງຄັດກັບລະບຽບກົດໝາຍຂອງບ້ານເມືອງ ໂດຍໃຫ້ຂີດເອົາທຸກໆ ຄຳຖາມທີ່ມີໃນໃບສອບຖາມ.

## II. ສະພາບເສດຖະກິດ ແລະການພັດທະນາ :

ຄຳຖາມທີ່ 1: ປະຊາຊົນບ້ານນີ້ ມີລາຍຮັບຕົ້ນຕໍມາຈາກການເຮັດກິດຈະກຳຫຍັງ? ຄວາມໝາຍຄຳຖາມນີ້ ແມ່ນຖາມເຖິງລາຍຮັບຕົ້ນຕໍຂອງປະຊາຊົນໝົດບ້ານ ແມ່ນໄດ້ມາຈາກໃສ? ແລ້ວນັກເດີນສຳຫລວດຈັດລຽງລຳດັບຄັກແນ່ ໃຫ້ໄດ້ 3 ກິດຈະກຳຕົ້ນຕໍໃນບ້ານ.

ຄຳຖາມທີ່ 2: ນາຍບ້ານຄິດວ່າຊີວິດການເປັນຢູ່ປະຈຸບັນ ທຽບໃສ່ 5 ປີຄືນຫລັງ ເຫັນວ່າເປັນແນວໃດ? ດີຂື້ນ ຫລືຫລຸດລົງ ຫລືວ່າຍັງສຳເກົ່າ. ຄຳຖາມນີ້ ຕ້ອງຍົກຂໍ້ສັງເກດໃຫ້ຜູ້ຕອບເຂົ້າໃຈ ຊຶ່ງອາດຈະຍົກໃຫ້ເຫັນເປັນຕົ້ນ ການກໍ່ສ້າງເຮືອນຊານບ້ານຊ່ອງ, ການບູລະນະເສັ້ນທາງ, ການຜະລິດ, ການນຸ່ງຖືຂອງປະຊາຊົນ... ຖ້ານາຍບ້ານມາຢູ່ໃໝ່ ກໍ່ຂອກຖາມນຳຜູ້ໃຫ່ຍຊົງຄຸນວຸດທິໃນບ້ານຕື່ມ.

ຄຳຖາມທີ່ 3: ປະຈຸບັນ ຢູ່ບ້ານມີໂຄງການພັດທະນາໃດນຶ່ງບໍ່? ໂຄງການພັດທະນາ ແມ່ນລວມເອົາໝົດໂຄງການຂອງລັດ ຂອງເອກະຊົນ ຫລືຂອງຕ່າງປະເທດ ທີ່ມາຕັ້ງຢູ່ບ້ານ. ຖ້າມີ ແມ່ນໃຫ້ຖາມຕໍ່ຄຳຖາມທີ່ 4. ຖ້າຕອບວ່າບໍ່ມີ ແມ່ນໃຫ້ຂ້າມໄປພາກທີ່ III ເລີຍ.

ຄຳຖາມທີ່ 4: ໂຄງການພັດທະນາດັ່ງກ່າວ ແມ່ນມີປະເພດໃດແດ່? ຄຳຖາມນີ້ ແມ່ນມີຫລາຍຄຳຕອບ ໃຫ້ຂີດວົງມົນໃສ່ຊ່ອງລະຫັດຄຳຕອບທີ່ຖືກຕ້ອງ,

ຄຳຖາມທີ່ 5: ໂຄງການນີ້ ໄດ້ຮັບການຊ່ວຍເຫລືອທາງດ້ານທຶນຮອນຈາກໃສ? ຄຳຖາມນີ້ ໝາຍເຖິງການລົງທຶນເຂົ້າໃນແຕ່ລະໂຄງການນັ້ນ ສ່ວນໃຫ່ຍໄດ້ມາຈາກໃສ.

- ທຶນຂອງບ້ານ ໝາຍເຖິງທຶນຈາກການຮັບໂຮມກັນຂອງປະຊາຊົນໃນບ້ານທັງໝົດ.

- ທຶນອົງການຈັດຕັ້ງສາກົນ ແມ່ນອົງຈັດຕັ້ງສາກົນມາເຮັດເອງ ຫລືເອົາໃຫ້ເຮັດ ບໍ່ລວມທຶນອົງການຈັດຕັ້ງສາກົນທີ່ບໍ່ຂື້ນກັບລັດຖະບານ.

- ໃນກໍລະນີ ທຶນສົມທົບລະຫວ່າງປະຊາຊົນ ກັບລັດຖະບານ ຫລືກັບອົງການອື່ນ ກໍໃຫ້ໝາຍມີຫລາຍຄຳຕອບ.

## III. ດິນ ແລະການນຳໃຊ້ດິນ :

ພາກນີ້ປະກອບມີ 6 ຄຳຖາມ :

ຄຳຖາມທີ່ 1 : ຖາມເຖິງຈຳນວນເນື້ອທີ່ດິນທັງໝົດທີ່ບ້ານຄູ້ມຄອງ ມີຈັກເຮັກຕາ? ເນື້ອທີ່ດິນດັ່ງກ່າວ ແມ່ນລວມເອົາທັງດິນປຸກສ້າງ, ດິນບ້ານ, ປ່າ, ດິນກະສິກຳ ແລະອື່ນໆ ໂດຍໃຫ້ຄິດໄລ່ເປັນເຮັກຕາ.

ຄຳຖາມທີ່ 2 : ແມ່ນຖາມສະເພາະ ແຕ່ດິນກະສິກຳ ? ດິນກະສິກຳ ໝາຍເຖິງດິນທີ່ທຳການຜະລິດກະສິກຳ ຊຶ່ງອາດຈະປະລະທຳການຜະລິດປ່ອຍເປັນເຮື້ອ ມາໃນໄລຍະ 4 ປີລົງມາ ກໍ່ໃຫ້ຖືວ່າແມ່ນດິນກະສິກຳ.

ຄຳຖາມ 3 : ແມ່ນໃຫ້ແຍກບັນດາເນື້ອທີ່ທັງໝົດນັ້ນ ອອກເປັນແຕ່ລະປະເພດຂອງດິນ ເຊັ່ນ: ດິນປ່າຫຍ້າ ຊຶ່ງລວມທັງປ່າຫຍ້າຄາທີ່ປະຊາຊົນປູກ, ດິນປ່າໄມ້ ລວມທັງດິນປ່າໄມ້ປະຊາຊົນປູກ, ນອກນັ້ນໃນຈັດເຂົ້າເປັນດິນປະເພດອື່ນໆ.

| |
|---|
| *ໃຫ້ກວດເບິ່ງ ໂດຍບວກເອົາເນື້ອທີ່ ກະສິກຳ, ເນື້ອທີ່ທົ່ງຫຍ້າ, ເນື້ອທີ່ປ່າໄມ້ ແລະເນື້ອທີ່ດິນອື່ນໆນັ້ນ ໃຫ້ເທົ່າກັນກັບເນື້ອທີ່ທັງໝົດ ໃນຄຳຖາມທີ່ 1.* |

ຄຳຖາມທີ່ 4 : ໃນລະດູແລ້ງຜ່ານມາ ນີ້, ເນື້ອທີ່ກະສິກຳໄດ້ນຳໃຊ້ນ້ຳຊົນລະປະທານເພື່ອເຮັດກະສິກຳໃດນີ້ ບໍ່? ໃຫ້ນັບເອົາແຕ່ເນື້ອທີ່ໄດ້ຮັບນ້ຳຊົນລະປະທານຕົວຈິງ. ຊົນລະປະທານ ແມ່ນໝາຍເຖິງຊົນລະປະທານ ທີ່ປະຊາຊົນເຮັດເອງ ແລະລວມທັງຂອງລັດຖະບານເຮັດໃຫ້.

ຄຳຖາມທີ່ 5 : ໃຫ້ຄິດໄລ່ເບິ່ງຕົວຈິງເນື້ອທີ່ກວມລວມຂອງບ້ານ ໂດຍແຍກເປັນທົ່ງພຽງ ແລະຄ້ອຍຊັນ ຕາມ ຊັດສ່ວນຂອງດິນຕົວຈິງຂອງບ້ານຄູ້ມຄອງ.

ຕົວຢ່າງ : ດິນບ້ານຊຽງສີ ມີທັງໝົດ 560 ເຮັກຕາ ໃນນັ້ນ ມີເນື້ອທີ່ ທີ່ເປັນທົ່ງພຽງຢູ່ປະມານ 480 ເຮັກຕາ ແລະຄ້ອຍຊັນຢູ່ 80 ເຮັກຕາ.

ຄຳຖາມທີ່ 6 : ບ້ານນີ້ ໄດ້ສຳເລັດການມອບດິນມອບປ່າແລ້ວບໍ່ ? ກໍລະນີບ້ານນີ້ ກຳລັງດຳເນີນການມອບດິນມອບປ່າຢູ່ກໍ່ຖືວ່າ ບ້ານນີ້ ໄດ້ມອບດິນມອບປ່າແລ້ວ ໃຫ້ຂີດວົງມົນອ້ອມ ລະຫັດ 1 ໃນຊ່ອງລະຫັດຄຳຕອບ.

## IV. ພື້ນຖານໂຄງລ່າງ:

ພາກນີ້ ມີ 18 ຄຳຖາມ, ບາງຄຳຖາມນັກເດີນສຳຫລວດຈະຕ້ອງສັງເກດດ້ວຍຕົວເອງນຳ ເພື່ອເປັນການຊ່ວຍໃນການໝາຍຄຳຕອບໃຫ້ຖືກຕ້ອງ.

ຄຳຖາມທີ່ 1: ບ້ານນີ້ ມີເສັ້ນທາງເຂົ້າເຖິງບໍ່ ? ຄວາມໝາຍຂອງການເຂົ້າເຖິງ ແມ່ນໃຫ້ສັງເກດເອົາວ່າເສັ້ນທາງຫ່າງອອກຈາກບ້ານປະມານ 100 ແມັດ ຫລືຍ່າງເອົາປະມານ 2-3 ນາທີ ແມ່ນຖືວ່າບ້ານນີ້ ມີເສັ້ນທາງເຂົ້າເຖິງ. ໃຫ້ຂີດຄຳຕອບ 1 ໃນຊ່ອງລະຫັດຄຳຕອບ ແລ້ວຂ້າມໄປຄຳຖາມ 3 ເລີຍ.

ຄຳຖາມທີ່ 2: ໄລຍະຫ່າງແຕ່ບ້ານໄປຫາເສັ້ນທາງໄກປານໃດ? ເສັ້ນທາງ ແມ່ນໝາຍເຖິງທາງໃຫຍ່ທີ່ລົດໃຫຍ່ສາມາດໄປມາໄດ້. ຄຳຖາມນີ້ ແມ່ນຖາມເຖິງໄລຍະຫ່າງແຕ່ບ້ານຫາເສັ້ນທາງດັ່ງກ່າວ ໂດຍຈົດກ່າຍໄລຍະຫ່າງເປັນກິໂລແມັດ. ຖ້າຫາກມີເສັ້ນທາງຜ່ານບ້ານ ແມ່ນໃຫ້ຈົດກ່າຍ "00" ເຂົ້າໃນຊ່ອງລະຫັດຄຳຕອບ.

ຄຳຖາມທີ່ 3: ໃນລະດູແລ້ງລົດສາມາດເຂົ້າເຖິງບ້ານໄດ້ບໍ່? ລົດສາມາດເຂົ້າເຖິງບ້ານ ແມ່ນກຳນົດເອົາໄລຍະຫ່າງຂອງເສັ້ນທາງຫາບ້ານລະຫວ່າງ 0.1 ກິໂລແມັດ ຫລືປະມານ 2 ຫາ 3 ນາທີ ແມ່ນຖືວ່າບ້ານນີ້ ມີເສັ້ນທາງເຂົ້າເຖິງ. ຄຳຖາມນີ້ນີ້ ແມ່ນໃຫ້ຂີດວົງມົນອ້ອມຄຳຕອບທີ່ຖືກຕ້ອງໃສ່ຊ່ອງລະຫັດຄຳຕອບ.

ຄຳຖາມທີ່ 4: ແມ່ນຖາມຄ້າຍຄືກັບຄຳຖາມທີ່ 2 ແຕ່ແມ່ນລະດູການຕ່າງກັນ. ຄຳຖາມນີ້ ແມ່ນຖາມສະເພາະລະດູຝົນ.

***ຂໍ້ສັງເກດ : ກໍລະນີມີເສັ້ນທາງ ໄປມາໄດ້ຕະຫລອດປີ ແມ່ນໃຫ້ຂ້າມໄປຖາມຄຳຖາມທີ່ 5 ເລີຍ. ຖ້າກໍລະນີບໍ່ມີເສັ້ນທາງ ໃຫ້ຂ້າມໄປຖາມຄຳຖາມທີ່ 7 ເລີຍ.***

ຄຳຖາມທີ່ 5: ບ້ານນີ້ ມີໂດຍສານຜ່ານ ແລະຈອດຮັບເອົາຜູ້ໂດຍສານບໍ່? ຄຳຖາມນີ້ ແມ່ນຖາມສະເພາະບ້ານທີ່ມີເສັ້ນທາງເຂົ້າເຖິງເທົ່ານັ້ນ.

ຄຳຖາມ 6: ໂດຍສານທີ່ແລ່ນຮັບໃຊ້ປະຊາຊົນແທບນີ້ ແມ່ນແລ່ນຈັກຖ້ຽວຕໍ່ມື້, ຕໍ່ອາທິດ ຫລືຈັກຖ້ຽວຕໍ່ເດືອນ. ຖ້າຕອບໄດ້ຈຳນວນຖ້ຽວຕໍ່ມື້ກໍບໍ່ຈຳເປັນຖາມຕໍ່.

ຄຳຖາມທີ່ 7: ຈາກບ້ານໄປຫາສະຖານທີ່ ທີ່ມີລົດໂດຍສານ ໄກປານໃດ? ໃຫ້ຄິດໄລ່ເປັນກິໂລແມັດ. ຖ້າຢູ່ກັບບ້ານ ແມ່ນໃຫ້ຂຽນ "00".

ຄຳຖາມທີ່ 8: ແຕ່ບ້ານນີ້ ໄປຫາຫ້ອງການປົກຄອງເມືອງ ມີໄລຍະຫ່າງເທົ່າໃດກິໂລແມັດ ? ຖ້າບໍ່ກຳນົດໄລຍະທາງເປັນກິໂລແມັດ ແມ່ນໃຫ້ຄິດໄລ່ຕາມການຍ່າງ, <u>ໂດຍຄາດຄະເນ ເອົາປະມານ 1 ໂມງ ຍ່າງໄດ້ 4 ກິໂລແມັດ.</u>

ຄຳຖາມທີ່ 9: ແມ່ນຖາມໄລຍະເວລາການເດີນທາງຈາກບ້ານໄປຫາຫ້ອງການປົກຄອງເມືອງ, ເຂົາເຈົ້າໄດ້ໃຊ້ເວລາຈັກຊົ່ວໂມງ ແລະຈັກນາທີ. ໂດຍແຍກອອກຕາມລະດູການ. ຖ້າເປັນບ້ານທີ່ຕັ້ງຂອງຫ້ອງວ່າການເມືອງ ແມ່ນໃຫ້ຂຽນ "00".

ຄຳຖາມທີ່ 10: ແມ່ນຖາມຄ້າຍຄືຄຳຖາມທີ່ 4 ແຕ່ຄຳຖາມນີ້ ແມ່ນຖາມໄລຍະຫ່າງແຕ່ບ້ານໄປຫາປົກຄອງແຂວງ.

ຄຳຖາມທີ່ 11: ແມ່ນຖາມຄ້າຍຄຳຖາມ 9 ແຕ່ຖາມການໃຊ້ເວລາເດີນທາງໄປຫາປົກຄອງແຂວງ.

ຄຳຖາມທີ່ 12: ບ້ານນີ້ ມີໄຟຟ້າໃຊ້ ຫລືບໍ່? ຖ້າຄຳຕອບວ່າບໍ່ ແມ່ນໃຫ້ຂ້າມໄປຫາ ຄຳຖາມທີ່ 14 ເລີຍ.

ຄຳຖາມທີ່ 13: ແມ່ນຖາມກໍລະນີບ້ານມີໄຟຟ້າໃຊ້ ໂດຍໃຫ້ຂີດວົງມົນໃສ່ຄຳຕອບທີ່ຖືກຕ້ອງໃສ່ຊ່ອງລະຫັດຄຳຕອບ. ຖ້າມີຫລາຍແຫລ່ງນຳໃຊ້ໄຟຟ້າ ແມ່ນໃຫ້ເລືອກເອົາແຫລ່ງໄຟຟ້າທີ່ນຳໃຊ້ຫລາຍກວ່າໝູ່ໃນບ້ານ.

ຄຳຖາມທີ່ 14: ບ້ານນີ້ ມີນ້ຳສະອາດໃຊ້ບໍ່? ນ້ຳສະອາດໝາຍເຖິງບັນດາແຫລ່ງນ້ຳເຫລົ່ານີ້ :

ນ້ຳປະປາ, ນ້ຳສ້າງມີຝາປິດ, ນ້ຳບາດານ ແລະນ້ຳລິນສະອາດທີ່ໂຄງການນ້ຳສະອາດເປັນຜູ້ເຮັດໃຫ້.

ຄຳຖາມທີ່ 15: ບ້ານນີ້ມີຕະຫລາດຂາຍເປັນປະຈຳແຕ່ລະວັນບໍ່? ຕະຫລາດຂາຍເປັນປະຈຳແຕ່ລະວັນໝາຍເຖິງຕະຫລາດທີ່ມີການຈັດຕັ້ງ ຫລືຫ້ອງການຈັດສັນ ແລະຄູ້ມຄອງຕະຫລາດ. ຖ້າຄຳຕອບວ່າມີ ແມ່ນໃຫ້ຂ້າມໄປຖາມ ຄຳຖາມທີ່ 18 ເລີຍ.

ຄຳຖາມທີ່ 16: ແມ່ນຖາມເຖິງຕະຫລາດບາງຄັ້ງບາງຄາວ. ຕະຫລາດນີ້ ໝາຍເຖິງຕະຫລາດ ທີ່ປະຊາຊົນ ຫລືກຸ່ມຄົນ ພ້ອມກັນຈັດຕັ້ງຂື້ນ ບາງ 2-3 ຄັ້ງນື່ງ ຫລື ອາທິດນື່ງຄັ້ງນື່ງ ເຊິ່ງເອີ້ນວ່າຕະຫລາດນັດ. ຖ້າຕອບວ່າມີ ແມ່ນຖາມຕໍ່ຄຳຖາມທີ່ 14. ຖ້າຄຳຕອບວ່າບໍ່ມີ ແມ່ນໃຫ້ຂ້າມໄປຖາມຄຳຖາມທີ່ 18 ເລີຍ.

ຄຳຖາມ 17: ຖາມເຖິງຕະຫລາດບາງຄັ້ງບາງຄາວນີ້ ແມ່ນເປີດຈັກຄັ້ງຕໍ່ເດືອນ ແລ້ວຈົດກ່າຍຈຳນວນຄັ້ງ ເຂົ້າໃສ່ຊ່ອງລະຫັດຄຳຕອບ.

ຄຳຖາມທີ່ 18: ແຕ່ບ້ານ ໄປຫາຫ້ອງການໄປສະນີ ທີ່ໃກ້ທີ່ທີ່ສຸດ ແມ່ນໄກປານໃດ? ໂດຍໃຫ້ຄິດໄລ່ເປັນກິໂລແມັດ.

## V. ດ້ານການສຶກສາ :

ຄຳຖາມທີ່ 1 : ມີເດັກນ້ອຍໃນກຸ່ມອາຍຸເຫລົ່ານີ້ ຈັກຄົນ ຢູ່ໃນບ້ານນີ້ ? ຄຳຖາມນີ້ ແມ່ນເພື່ອຢາກຮູ້ສະພາບຂອງກຸ່ມອາຍຸເດັກເຂົ້າໂຮງຮຽນ ມີຈັກສ່ວນຮ້ອຍທີ່ໄດ້ຮັບການສຶກສາ. ສະນັ້ນ ຕ້ອງສັງລວມອອກມາໃຫ້ໄດ້ ເດັກໃນກຸ່ມອາຍຸ 6-10 ປີ ແລະ 11-15 ປີ.

ຄຳຖາມທີ່ 2 : ໃນບັນດາເດັກນ້ອຍໃນກຸ່ມອາຍຸເຫລົ່ານີ້ ໃນສົກຮຽນນີ້ ມີຈັກຄົນໄດ້ເຂົ້າໂຮງຮຽນ (ລົງທະບຽນເຂົ້າໂຮງຮຽນ).

ຄຳຖາມທີ່ 3 : ບ້ານນີ້ ມີໂຮງຮຽນໃດແດ່? ໃຫ້ຂີດວົງມົນອ້ອມເອົາຄຳຕອບທີ່ຖືກຕ້ອງ ແລະໃຫ້ຖາມທຸກຄຳຖາມທີ່ມີ.

***ຂໍ້ສັງເກດ : ຖ້າມີໂຮງຮຽນປະຖົມ ແມ່ນໃຫ້ຂ້າມໄປຖາມຄຳຖາມທີ່ 4. ຖ້າບໍ່ມີໂຮງຮຽນປະຖົມ ແມ່ນໃຫ້ຂ້າມໄປຖາມຄຳຖາມທີ່ 9 ເລີຍ.***

ຄຳຖາມທີ່ 4 : ໂຮງຮຽນປະຖົມນີ້ ມີປື້ມແບບຮຽນ ແລະແບບສອນບໍ່? ຄຳຖາມນີ້ ແມ່ນເວົ້າກ່ຽວກັບປື້ມຄູ່ມືການຮຽນການສອນ ມີພຽງພໍບໍ່ສຳຫລັບນາຍຄູໃນໂຮງຮຽນ ໂດຍໃຫ້ເລືອກນື່ງຄຳຕອບທີ່ຖືກຕ້ອງ ຂີດວົງມົນອ້ອມເອົາຄຳຕອບດັ່ງກ່າວ.

ຄຳຖາມທີ່ 5 : ໂຮງຮຽນປະຖົມນີ້ ມີຄູສອນເປັນປະຈຳຈັກຄົນ? ຄູສອນປະຈຳ ໝາຍເຖິງນາຍຄູທີ່ຖືກແຕ່ງຕັ້ງ ຫລືປະຊາຊົນຈ້າງມາສອນເປັນປະຈຳຢູ່ໂຮງຮຽນນີ້ ກໍແມ່ນຖືວ່າເປັນປະຈຳ. ກໍລະນີ ບໍ່ນັບເອົາ ແມ່ນບັນດານາຍຄູລົງຝຶກຫັດ ຫລືມາຊ່ວຍສອນບາງຄັ້ງຄາວ. ໃຫ້ຈົດກ່າຍຈຳນວນຄູຕົວຈິງເຂົ້າໃນຊ່ອງລະຫັດຄຳຕອບ.

ຄຳຖາມທີ່ 6: ຖາມເຖິງສະພາບການຮຽນ ໂດຍຖາມວ່າ ໂຮງຮຽນປະຖົມນີ້ ເປີດສອນເປັນປົກກະຕິບໍ່? ບໍ່ປົກກະຕິ ມັນຈະລວມເອົາກໍລະນີຄູບໍ່ຢູ່ໃນໄລຍະ 2-3 ເດືອນເພື່ອໄປຝຶກອົບຮົມຕໍ່ ຫລືກໍລະນີ ໂຮງຮຽນເປ້ເພ ຍັງສ້ອມແປງ, ຄູບໍ່ຢູ່ບ້ານໄກ ອາທິດນື່ງສອນ 1-2 ວັນ ແລະກໍລະນີອື່ນໆ.

ຄຳຖາມທີ່ 7: ໂຮງຮຽນປະຖົມນີ້ ມີການສອນຄວບກັນບໍ່ ? ການສອນຄວບກັນ ແມ່ນໝາຍເຖິງ ຫ້ອງຮຽນນື່ງມີ ສອງຊັ້ນຮຽນ ຮຽນນຳກັນ ໂດຍອາດປີ້ນຫລັງໃສ່ກັນ.

ຄຳຖາມທີ່ 8 : ໂຮງຮຽນປະຖົມນີ້ ໄດ້ແບ່ງການສິດສອນບໍ່ ? ໝາຍວ່າຊັ້ນຮຽນນີ້ ຮຽນຕອນເຊົ້າ ແລະຊັ້ນຕໍ່ໄປຮຽນຕອນແລງພັດປ່ຽນກັນ. ຖ້າມີ ຫລືບໍ່ມີ ໃຫ້ຂີດວົງມົນອ້ອມຄຳຕອບທີ່ຖືກຕ້ອງ ແລ້ວຂ້າມໄປຖາມຄຳຖາມທີ່ 10.

ຄຳຖາມທີ່ 9 : ໂຮງຮຽນປະຖົມທີ່ ເດັກນ້ອຍໃນບ້ານໄປຮຽນ ທີ່ໄກ້ທີ່ສຸດ ໄກປານໃດ? ໂດຍຄິດໄລ່ເປັນກິໂລແມັດ.

ຄຳຖາມ 10 : ໂຮງຮຽນມັດທະຍົມທີ່ເດັກນ້ອຍໃນບ້ານໄປຮຽນທີ່ໄກ້ທີ່ສຸດ ໄກປານໃດ? ໃຫ້ຄິດໄລ່ເປັນກິໂລແມັດ, ຖ້າຢູ່ກັບບ້ານແມ່ນໃຫ້ຂີດອ້ອມ "1".

ຄຳຖາມທີ່ 11 : ໃນໄລຍະ 5 ປີ ຜ່ານມາ ບ້ານນີ້ ມີໂຄງການຮຽນການສອນນອກລະບົບບໍ່ (ໂຮງຮຽນສອນຜູ້ໃຫ່ຍ)? ຂີດວົງອ້ອມຄຳຕອບທີ່ຖືກຕ້ອງໃສ່ຊ່ອງລະຫັດຄຳຕອບ.

## VI. ການດູແລສຸຂະພາບ :

ພາກຮັກສາສຸຂະພາບນີ້ ປະກອບມີ 18 ຄຳຖາມ ຊຶ່ງແຕ່ລະຄຳຖາມ ໄດ້ສຶກສາເບິ່ງຄວາມພຽບພ້ອມທາງດ້ານບໍລິການສາທາລະນະສຸກໃຫ້ແກ່ປະຊາຊົນໃນບ້ານ ແລະໝູ່ບ້ານຂ້າງຄຽງ.

ຄຳຖາມທີ່ 1 : ບ້ານ ໄດ້ມີຖົງຢາປະຈຳບ້ານບໍ່ ? ຖົງຢາປະຈຳບ້ານ ແມ່ນທາງສາທາລະນະສຸກ ເປັນຜູ້ຈັດໃຫ້ ຫລືເອີ້ນອີກອັນນຶ່ງວ່າ ແມ່ນຖົງຢາມູນວຽນຂອງບ້ານ.

ຄຳຖາມທີ່ 2: ບ້ານນີ້ມີໝໍຕຳແຍ (ຊ່ວຍເກີດລູກ) ບໍ່? ໝໍຕຳແຍ ແມ່ນໄດ້ຮັບການຝຶກອົບຮົມຈາກກະຊວງສາທາລະນະສຸກ ຫລືອົງການຈັດຕັ້ງສາທາລະນະສຸກ ແລະມີໃບປະກາດຢັ້ງຢືນຄັກແນ.

ຄຳຖາມທີ່ 3: ບ້ານນີ້ ມີໝໍຢາພື້ນເມືອງບໍ່? ໝໍຢາພື້ນເມືອງໝາຍເຖິງໝໍຢາທີ່ນຳໃຊ້ຮາກຢາ, ສະມູນໄພທີ່ຫາມາຈາກທຳມະຊາດ ປະສົມປະສານກັບການເປົ່າ ເພື່ອປິ່ນປົວ.

ຄຳຖາມທີ່ 4 : ບ້ານນີ້ ມີແພດອາສາສະໝັກບໍ່? ແພດອາສາສະໝັກ ແມ່ນແພດທີ່ໄດ້ຮັບການຝຶກອົບຮົມຈາກກະຊວງສາທາລະນະສຸກ ຫລືອົງການຈັດຕັ້ງສາທາລະນະສຸກ ແລະມີໃບປະກາດຢັ້ງຢືນຄັກແນ.

ຄຳຖາມທີ່ 5 : ໃນບ້ານນີ້ ມີບັນດາແພດໝໍ (ຊັ້ນກາງຂຶ້ນໄປ) ດຳລົງຊີວິດຢູ່ບໍ່? ແພດໝໍໝາຍເຖິງບັນດາແພດໝໍ ທີ່ໄດ້ຮ່ຳຮຽນການແພດມາ ໂດຍມີໃບຢັ້ງຢືນຈົບວິຊາສະເພາະທາງດ້ານການແພດ ຫລືການຢາມາຄັກແນ. ຖ້າມີໃຫ້ຂີດວົງມົນອ້ອມຄຳຕອບທີ່ຖືກຕ້ອງ. ຖ້າບໍ່ມີ ແມ່ນໃຫ້ຂ້າມໄປຫາຄຳຖາມທີ່ 7.

ຄຳຖາມທີ່ 6: ບັນດາແພດໝໍໃນຄຳຖາມທີ່ 1 ນັ້ນ, ໃນກໍລະນີປະຊາຊົນເຈັບເປັນ ລາວໄດ້ຊ່ວຍແນະນຳ ຫລືປິ່ນປົວບໍ່?

ຄຳຖາມທີ່ 7 : ໂຮງໝໍທີ່ໄກ້ທີ່ສຸດ ໄກຫລາຍປານໃດ ? ກໍລະນີໂຮງໝໍຢູ່ກັບບ້ານ ແມ່ນໃຫ້ຂີດວົງມົນໃສ່ “1” ແລ້ວຂ້າມໄປຖາມຄຳຖາມທີ່ 9 ເລີຍ. ຖ້າບໍ່ຢູ່ໃນບ້ານ ແມ່ນໃຫ້ບອກໄລຍະທາງເປັນ ກິໂລແມັດ.

ຄຳຖາມທີ່ 8 : ການນຳໃຊ້ເວລາ ເພື່ອຈະໄປຫາໂຮງໝໍດັ່ງກ່າວ ຈາກບ້ານໄປ ແມ່ນໄດ້ໃຊ້ເວລາເທົ່າໃດ ? ການເດີນທາງແມ່ນການເດີນທາງແບບປົກກະຕິ ອາດຈະ ໃຊວິທີ ຍ່າງ, ກຽວນ, ລົດຈັກ ລົດໃຫ່ຍ ຫລືປະເພດອື່ນໆທີ່ປະຊາຊົນໃນບ້ານມັກໃຊ້ກັນ. ໂດຍຄິດໄລເປັນຊົ່ວໂມງ ແລະນາທີ.

ຄຳຖາມທີ່ 9 : ແມ່ນຖາມເຖິງໂຮງໝໍດັ່ງກ່າວ ແມ່ນເປັນຂອງລັດ ຫລືຂອງເອກກະຊົນ ຊຶ່ງປະຊາຊົນໃນບ້ານມັກໄປຫາ ແລະນຳໃຊ້ບໍລິການ.

ຄຳຖາມທີ່ 10 : ຢູ່ບ້ານນີ້ ສຸກສາລາ ຫລືສະຖານທີ່ປິ່ນປົວທີ່ໃກ້ທີ່ສຸດ ຈັກກິໂລແມັດ ? ສຸກສາລາ ຫລືສະຖານທີ່ບໍລິການ ແມ່ນລວມເອົາທັງຂອງລັດ ແລະເອກກະຊົນ.

ຄຳຖາມທີ່ 11 : ໄກຫລາຍປານໃດ ? ໃຫ້ບອກໄລຍະທາງເປັນ ກິໂລແມັດ.

ຄຳຖາມທີ່ 12 : ການນຳໃຊ້ເວລາ ເພື່ອຈະໄປຫາສຸກສາລາ ຫລືສະຖານທີ່ປິ່ນປົວດັ່ງກ່າວ ຈາກບ້ານໄປແມ່ນໄດ້ໃຊ້ເວລາເທົ່າໃດ ? ການເດີນທາງແມ່ນການເດີນທາງແບບປົກກະຕິ ອາດຈະ ໃຊວິທີ ຍ່າງ, ກຽວນ, ລົດຈັກ ລົດໃຫ່ຍ ຫລືປະເພດອື່ນໆ ທີ່ປະຊາຊົນໃນບ້ານມັກໃຊ້ກັນ.

ຄຳຖາມທີ່ 13 : ຢູ່ໃນບ້ານນີ້ ມີຮ້ານຂາຍຢາບໍ່ ? ຮ້ານຂາຍຢາ ແມ່ນຢ່າງໜ້ອຍຕ້ອງມີຢາ 4 ຊະນິດຕົ້ນຕໍ ເຊັ່ນ : ຢາປາລາເຊຕາໂມນ, ໂອລາລິດ, ໂກໂລກິນ, ອຳປີຊີລີນ. ຖ້າບໍ່ມີ ແມ່ນໃຫ້ຂ້າມໄປຫາຄຳຖາມ 15 ເລີຍ.

ຄຳຖາມທີ່ 14 : ຮ້ານຂາຍຢາດັ່ງກ່າວ ແມ່ນໄດ້ຮັບອະນຸຍາດຈາກກະຊວງສາທາລະນະສຸກ ແລະກະຊວງການເງິນແລ້ວບໍ່ ? ຖ້າມີໃບອະນຸຍາດ ຂໍເບິ່ງໃບອະນຸຍາດດັ່ງກ່າວເພື່ອຢັ້ງຢືນ.

ຄຳຖາມທີ່ 15 : ໃນໄລຍະ 12 ເດືອນຜ່ານມາ, ບ້ານນີ້ ມີສະພາບກ່ຽວກັບສຸຂະພາບຫຍັງບໍ່ ໂດຍຖາມໝົດທຸດຄຳຖາມ ກ່ອນ ແລ້ວ ຖາມນາຍບ້ານຕື່ມ ບັນດາຄຳຕອບທີ່ຕອບວ່າມີນັ້ນ. ມີບັນຫາຫຍັງທີ່ໜັກໜ່ວງ ແລະເປັນບັນຫາໃຫ່ຍ, ແລະເລືອກເອົາ 3 ບັນຫາໃຫ່ຍ ເພື່ອຈົດກ່າຍເຂົ້າ ພາກລະຫັດຄຳຕອບ.

ຄຳຖາມທີ່ 16 : ແມ່ຍິງໃນບ້ານ, ໃນເວລາເກີດລູກ ສ່ວນໃຫ່ຍເຂົາໄປເກີດຢູ່ໃສ? ເກີດຢູ່ເຮືອນ ແມ່ນໝາຍເຖິງເກີດຢູ່ກັບບ້ານຕົນເອງ. ກໍລະນີອື່ນໆ ເວົ້າແຈ້ງ ນັ້ນ ແມ່ນບໍ່ນອນໃນ ສອງຄຳຕອບຂ້າງເທິງ ອາດຈະແມ່ນເກີດຢູ່ປ່າ ຕາມຮີດຄອງຂອງບາງເຜົ່າຊົນ ແລະອື່ນໆ.

ຄຳຖາມທີ່ 17 : ໃນໄລຍະ 3 ປີ ຜ່ານມານີ້ , ບ້ານນີ້ ໄດ້ມີໂຄງການສັກຢາກັນພະຍາດສຳຫລັບເດັກນ້ອຍໄດ້ມາຮອດບໍ່ ?. ບັນດາແພດໝໍ ລົງໄປສັກຢາໃຫ້ເດັກນ້ອຍ ຊຶ່ງມີ ຕົວຢາ ເຊັ່ນ : ກັນເຕຕານິດ, ໝາກແດງ, ກັນບາດພະຍັກ, ຢອດໂປລີໂອ.

ຄຳຖາມທີ່ 18 : ໃນໄລຍະ 3 ປີ ບ້ານນີ້ ໄດ້ມີໂຄງການຕ້ານໄຂ້ປ່າ (ໄຂ້ຍຸງ) ມາຮອດບໍ່ ? ໂຄງການໄຂ້ຍຸງຊຶ່ງມັກມີໂຄງການຍ້ອມມຸງຢູ່ນຳ.

## VII). ດ້ານກະສິກຳ :

ພາກກະສິກຳ ປະກອບ ມີ 7 ຄຳຖາມ ຊຶ່ງຖາມເຖິງ ການປູກພືດຕ່າງໆ ໃນດິນຂອງຄົວເຮືອນຄອບຄອງ, ການນຳໃຊ້ຜົນຜະລິດດັ່ງກ່າວ ໄປຕາມແຕ່ລະເປົ້າໝາຍ.

ຄຳຖາມທີ່ 1 : ໃຫ້ເລືອກເອົາພືດຕົ້ນຕໍທີ່ປະຊາຊົນມັກປູກຢູ່ໃນບ້ານຈັກ 5 ຊະນິດ ຕາມລາຍການທີ່ໃຫ້ເລືອກ ແລ້ວຈົດກ່າຍເຂົ້າລະຫັດທີ່ໃຫ້ຕອບ ຕາມລຳດັບຄວາມສຳຄັນຂອງພືດແຕ່ລະຊະນິດ.

ຄຳຖາມທີ່ 2 : ເປົ້າໝາຍຕົ້ນຕໍຂອງຜົນຜະລິດ 5 ພືດດັ່ງກ່າວ ທີ່ໄດ້ຂາຍ ສ່ວນໃຫ່ຍຂາຍຢູ່ໃສ ? ໃຫ້ຖາມໝົດທຸກຄຳຖາມ ແລ້ວຈັດລຳດັບຄວາມສຳຄັນຂອງການຂາຍຜົນຜະລິດດັ່ງກ່າວ.

ຄຳຖາມທີ່ 3 : ໃນໄລຍະ 12 ເດືອນຜ່ານມາ, ປະຊາຊົນໃນບ້ານໂດຍສະເລ່ຍໄດ້ຂາດເຂົ້າກິນຈັກເດືອນ.

ຄຳຖາມທີ່ 4 : ໃນໄລຍະ 12 ເດືອນຜ່ານມາ, ປະຊາຊົນໃນບ້ານ ໄດ້ຮັບການແນະນຳທາງດ້ານວິຊາການ ກໍ່ຄືບັນຫາອື່ນໃນຂະແໜງກະສິກຳບໍ່ ຈາກພະນັກງານຂະແໜງກະສິກຳ ?

ຄຳຖາມທີ່ 5 : ບັນດາຫົວຂໍ້ ຫລືເປົ້າໝາຍໃນການແນະນຳ ນັ້ນຕົ້ນຕໍມີຫຍັງແດ່ ? ໂດຍໃຫ້ຈັດລຳດັບຄວາມສຳຄັນ ເອົາແຕ່ 2 ຄຳຕອບເທົ່ານັ້ນ.

ຄຳຖາມທີ່ 6 : ຢູ່ບ້ານມີໂຮງສີເຂົ້າບໍ່ ? ໃນການບໍລິການໃຫ້ປະຊາຊົນໃນບ້ານ ກໍຄືຮັບໃຊ້ຄົວເຮືອນຕົນເອງ.

ຄຳຖາມທີ່ 7 : ການຜະລິດກະສິກຳ ຂອງປະຊາຊົນໃນບ້ານນີ້ ສ່ວນໃຫ່ຍເຮັດແນວໃດ ? ໝາຍເຖິງເນື້ອທີ່ສ່ວນໃຫ່ນທີ່ປະຊາຊົນທຳການຜະລິດນັ້ນ ມີລັກສະນະແບບໃດ, ຄືທີ່ ຫລືມູນວຽນບໍ່, ຫລືອາດແມ່ນສ່ວນໃຫ່ຍແມ່ນເຮັດເລື່ອນລອຍໆ ໝາຍເຖິງປີນີ້ ຖ້າປ່ານີ້ ປີໜ້າຍ້າຍໄປຖາງປ່າບ່ອນອື່ນ.

**VIII). ແຮງງານ, ລາຄາການກໍ່ສ້າງ ແລະສະພາບອື່ນໆ :**

ພາກນີ້ ປະກອບມີ 14 ຄຳຖາມ ຊຶ່ງສ່ວນໃຫ່ຍຖາມເຖິງການນຳໃຊ້ແຮງງານ, ຄ່າຈ້າງ ແລະຄວາມອາດສາມາດບົ່ມຊ້ອນຂອງປະຊາຊົນໃນບ້ານ.

ຄຳຖາມທີ່ 1 : ຄ່າແຮງງານສຳຫລັບເຮັດວຽກກະສິກຳ ຢູ່ໃນບ້ານໄດ້ຈ່າຍກັນມື້ນຶ່ງເທົ່າໃດ ? ບໍ່ໃຫ້ສົມທຽບກັບບ້ານອື່ນ. ໃຫ້ເອົາລາຄາຕົວຈິງທີ່ປະຊາຊົນໃນບ້ານໍດ້ຈ້າງກັນ ໂດຍແຍກອອກເປັນແຕ່ລະຄຳຖາມ.

ຄຳຖາມທີ່ 2 : ຄ່າຈ້າງລະຫວ່າງກະສິກຳ ແລະວຽກອື່ນ ຕໍ່ວັນ ມີການຫລຸດລົ່ນກັນຫລາຍບໍ່? ໃຫ້ນາຍບ້ານສັງເກດ ແລະຕີຄາລາດ້ວຍຕົນເອງ.

ຄຳຖາມທີ່ 3 ແລະ 4 : ລາຄາເຂົ້າເປືອກ ເປັນ (ເຂົ້າໜຽວ ແລະເຂົ້າຈ້າວ) ທີ່ຂາຍຢູ່ກັບເຮືອນເຂົາເຈົ້າ ລາຄາຫລາຍປານໃດ ຕໍ່ກິໂລກລາມ.

ຄຳຖາມທີ່ 5 : ລາຄາເຂົ້າໜຽວທີ່ ຂາຍຢູ່ກັບຕະຫລາດໃນບ້ານຕົນເອງ ? ຖ້າບ້ານບໍ່ມີຕະຫລາດ ໃຫ້ຂີດວົງມົນອ້ອມ “1”. ຖ້າມີ ແມ່ນໃຫ້ແຍກເປັນແຕ່ລະປະເພດເຂົ້າ ເປັນກິໂລກລາມ.

ຄຳຖາມທີ່ 6 : ລາຄາເຂົ້າໜຽວທີ່ ຂາຍຢູ່ຕະຫລາດບ່ອນອື່ນ? ໃຫ້ແຍກເປັນແຕ່ລະປະເພດເຂົ້າ ລາຄາກີບຕໍ່ກິໂລກລາມ.

ຄຳຖາມທີ່ 7 : ລາຄາເຂົ້າຈ້າວທີ່ ຂາຍຢູ່ກັບຕະຫລາດໃນບ້ານຕົນເອງ ? ຖ້າບ້ານບໍ່ມີຕະຫລາດ ໃຫ້ຂີດວົງມົນອ້ອມ “1”. ຖ້າມີ ແມ່ນໃຫ້ແຍກເປັນແຕ່ລະປະເພດເຂົ້າ ເປັນກິໂລກລາມ.

ຄຳຖາມທີ່ 8 : ລາຄາເຂົ້າຈ້າວທີ່ ຂາຍຢູ່ຕະຫລາດບ່ອນອື່ນ? ໃຫ້ແຍກເປັນແຕ່ລະປະເພດເຂົ້າ ລາຄາກີບຕໍ່ກິໂລກລາມ.

ຄຳຖາມທີ່ 9 : ປະຊາຊົນໃນບ້ານນີ້ ມີບໍ່ ທີ່ໄປເຮັດວຽກອື່ນ ນອກຈາກກະສິກຳ ເປັນຕົ້ນ ເປັນກຳມະກອນກໍ່ສ້າງ, ຂັບລົດ, ຍູ້ລໍ້ ແລະອື່ນໆ.

ຄຳຖາມທີ່ 10 : ຄ່າແຮງງານ ຈ່າຍໃຫ້ກັນຕໍ່ວັນ ລະຫວ່າງຍິງຊາຍ ຫລາຍປານໃດ ສຳຫລັບຜູ້ໃຫ່ຍ ? ໃຫ້ຈົດກ່າຍເປັນເງິນ ແລະແຍກຕາມເພດ.

ຄຳຖາມທີ່ 11 : ໃນການຈ່າຍຄ່າແຮງງານລະຫວ່າງຍິງ-ຊາຍ ມີອັນແຕກຕາງກັນບໍ່ ?

ຄຳຖາມທີ່ 12 : ບັນຫາຫຍຸ້ງຍາກ ແລະຂໍ້ບົກຜ່ອງ ຫລືຂາດຫາຍ ຕໍ່ກັບປະຊາຊົນໃນບ້ານນີ້ ມີຫຍັງແດ່? ໃຫ້ຂີດວົງມົນອ້ອມຄຳຕອບທີ່ຖືກຕ້ອງ ສາມາດຕອບຫລາຍຄຳຕອບ.

ຄຳຖາມທີ່ 13 : ປະຈຸບັນບ້ານນີ້ ໄດ້ມີການກໍ່ສ້າງເຮືອນຢູ່ໃໝ່ຈັກຫລັງ ? ນັບທັງກຳລັງກໍ່ສ້າງ.

ຄຳຖາມທີ່ 14 : ປະຊາຊົນໃນບ້ານ ໄດ້ຕັດໄມ້ ເພື່ອເປັນຟືນ ຫລືເຮັດການກໍ່ສ້າງໃດນຶ່ງ ຊຶ່ງໃນການຕັດດັ່ງກ່າວພວກເຂົາໄດ້ປູກທົດແທນບໍ່?

## ວິທີຈົດກ່າຍຕາຕະລາງຄວາມທຸກຍາກ

### ➢ *ການສອບຖາມ ແລະຈົດກ່າຍເຂົ້າໃນ ຊ່ອງ 1- 14 ຂອງ ຕາຕະລາງ*

ຊ່ອງ 1: ແມ່ນເລກລຳດັບຄົວເຮືອນ

ຊ່ອງ 2: ຊື່ຫົວໜ້າຄົວເຮືອນ

ຊ່ອງ3: ຈຳນວນພົນໃນຄົວເຮືອນ ແມ່ນຫມາຍເຖິງສະມາຊິກຄົວເຮືອນ ທີ່ມີຫນ້າຕົວຈິງໃນປະຈຸບັນໃນ ນັ້ນຜູ້ຍິງຈັກຄົນ.

ຊ່ອງ 4: ລາຍໄດ້ທັງຫມົດປະຈຳປີ ຂອງຄົວເຮືອນ (12 ເດືອນ ຜ່ານມາ) ແມ່ນຫມາຍເຖິງລາຍໄດ້ຂອງສະມາຊິກທັງຫມົດທີ່ຢູ່ໃນຄົວເຮືອນລວມເຂົ້າກັນໃນ 1 ປີ ຊຶ່ງຄິດໄລ່ເປັນຫົວຫນ່ວຍເງິນກີບ. ລາຍໄດ້ແມ່ນຫມາຍເຖິງລາຍໄດ້ປົກກະຕິທີ່ໄດ້ຮັບຈາກການຜລິດແບບທຸລະກິດ,ຄ່າແຮງງານ, ເງິນເດືອນ ແລະດອກເບັ້ຍ ຕ່າງໆເທົ່ານັ້ນ. *ສ່ວນລາຍຮັບຈາກການຂາຍສິນຄ້າ/ຜລິດຕະພັນກະສິກຳ ຂອງຕົນເອງໃນບາງຄັ້ງຄາວ ແລະລາຍຮັບຈາກຄົນອື່ນໃຫ້ (ເງິນລູກຫລານ, ພໍ່ແມ່ ພີ່ນ້ອງ ຝາກ ມາໃຫ້ ) ແມ່ນ ບໍ່ໃຫ້ຈົດເຂົ້າໃນຊ່ອງນີ້.*

ຊ່ອງ 5: ລາຍໄດ້ສະເລັ່ຽ ຕໍ່ເດືອນ ຂອງຄົວເຮືອນ (ກີບ) ແມ່ນຫມາຍເຖິງລາຍໄດ້ຂອງສະມາຊິກທັງຫມົດທີ່ຢູ່ໃນຄົວເຮືອນ ຫານໃຫ້ 12 ເດືອນ ຫລືຈຳນວນເດືອນທີ່ໄດ້ເຮັດວຽກ.

ຊ່ອງທີ 6: ລາຍໄດ້ສະເລັ່ຍຕໍ່ຄົນຕໍ່ເດືອນ ເປັນກີບ ໂດຍການ ເອົາ ລາຍໄດ້ສະເລັ່ຍຕໍ່ເດືອນ ຂອງຄົວເຮືອນ (ຊ່ອງ 5) ຫານໃຫ້ ຈຳນວນພົນລວມໃນຄົວເຮືອນ (ຊ່ອງ 3).

ຊ່ອງ 7: ແມ່ນການແຍກ ລະດັບລາຍໄດ້ສະເລັ່ຍຕໍ່ຫົວຄົນ ຕໍ່ເດືອນ (ການຕີລາຄາ ຊ່ອງ 6) ແຍກຕາມຕົວເມືອງ ແລະຊົນນະບົດ.

ກ. ກໍລະນີ ໃນເຂດຕົວເມືອງ

ຖ້າຫາກວ່າ ຄົວເຮືອນໃດຫາກມີລາຍໄດ້ສະເລັ່ຍເທົ່າກັບ ຫລື ສູງກວ່າ 100 000 ກີບ ຕໍ່ຄົນ ຕໍ່ເດືອນ ແມ່ນຖືວ່າບໍ່ທຸກ ( ຈົ່ງຂຽນລະຫັດ 1 ໃສ່ໃນຫ້ອງດັ່ງກ່າວ)ຖ້າຕໍ່າກວ່າ 100 000 ກີບ ແມ່ນຖືວ່າ ທຸກໃນກໍລະນີນີ້ ແມ່ນ ໃຫ້ຂຽນລະຫັກ 0 ລົງໃສ່ຫ້ອງດັ່ງກ່າວ.

ຂ. ກໍລະນີ ໃນເຂດຊົນນະບົດ

- ຖ້າຫາກວ່າ ຄົວເຮືອນໃດຫາກມີລາຍໄດ້ສະເລັ່ຍເທົ່າກັບ ຫລື ສູງກວ່າ 82 000 ກີບ ຕໍ່ຄົນ ຕໍ່ເດືອນ ແມ່ນຖືວ່າບໍ່ທຸກ (ຈົ່ງຂຽນ 1 ໃສ່ໃນຫ້ອງດັ່ງກ່າວ)
- ຖ້າຕໍ່າກວ່າ 82 000 ກີບ ແມ່ນຖືວ່າ ທຸກໃນກໍລະນີນີ້ ແມ່ນຖືວ່າ ທຸກ ແລະໃຫ້ຂຽນ 0 ລົງໃສ່ຫ້ອງນີ້.

ຕົວຢ່າງ : ຄົວເຮືອນ ກ ຢູ່ໃນເຂດຊົນນະບົດ ມີສະພາບດັ່ງນີ້ :

- ມີຈໍານວນພົນທັງຫມົດ ຢູ່ 7 ຄົນ, ລາຍໄດ້ປະຈໍາເດືອນຂອງຄົວເຮືອນແມ່ນ 500 000 ກີບ ຕໍ່ເດືອນ.
- ລາຍໄດ້ສະເລັ່ຍຕໍ່ ຫົວຄົນ ຕໍ່ດືອນ ແມ່ນ 71 428 ກີບ( 500000/ 7= 71 428 ກີບ )

ໃນສະພາບດັ່ງກ່າວ ຄົວເຮືອນ ກ ຖືວ່າ ເປັນຄົວເຮືອນທີ່ທຸກຍາກ.

*ສິ່ງທີ່ຄວນເອົາໃຈໃສ່:* ຖ້າກໍລະນີ ຄໍາຕອບຊ່ອງ 7 ແມ່ນມີຄໍາຕອບ ຫມາຍລະຫັດ 1 ແມ່ນໃຫ້ຫມາຍຂີດ √ ຢູ່ຊ່ອງ 14 ແລະ ຂ້າມໄປຄອບຄົວຕໍ່ໄປເລີຍ. ແຕ່ ຖ້າກໍລະນີ ຄໍາຕອບຊ່ອງ 7 ແມ່ນ 0 ຊຶ່ງຫມາຍເຖິງ ວ່າ ລາຍໄດ້ສະເລັ່ຍຕໍ່ຄົນຕໍ່ເດືອນ ແມ່ນຕໍ່າກວ່າ 100 000 ກີບ ໃນເຂດຕົວເມືອງ ແລະ 82 000 ກີບ ໃນເຂດຊົນນະບົດ ແມ່ນໃຫ້ສືບຕໍ່ຖາມໃນຊ່ອງ 8.9.10.11.12.

ໃນກໍລະນີ ທີ່ຊ່ອງ 7 ຫາກມີຄ່າເທົ່າ 0 ແລະຄະແນນລວມຊ່ອງ 13 ຕໍ່າກວ່າ 5 ຜູ້ສອບຖາມຕ້ອງໄດ້ ສຶກສາກ່ອນຈຶ່ງຄ່ອຍຕັດສິນ ( ຫມາຍວ່າ ໃນກໍລະນີນີ້ ຄົວເຮືອນແມ່ນ ມີລາຍໄດ້ ແລະຊົມໃຊ້ຜົນຜະລິດຂອງຕົນເອງ). ຕົວຢ່າງ ໃນກໍລະນີ ທີ່ ຄົວເຮືອນ ກ. ຢູ່ເຂດຊົນນະບົດ ມີລາຍໄດ້ ສະເລັ່ຍຕໍ່ຄົນ ຕໍ່ເດືອນ ພຽງແຕ່ 30 000 ກີບ ແຕ່ລາວພັດເຮັດນາ ຊຶ່ງ ຜົນຜລິດ ( ເຂົ້າສານ) ສະເລັ່ຍຕໍ່ຫົວຄົນ ຊໍ້າພັດ ຕໍ່າກວ່າ 16 ກິໂລ ຕໍ່ຄົນຕໍ່ເດືອນ ( ສົມມຸດວ່າ ໄດ້ແຕ່ 10 ກິໂລ). ດັ່ງນັ້ນ ຜູ້ສອບຖາມຈະຕ້ອງໄດ້ ຖາມເບິ່ງວ່າລາຍໄດ້ດັ່ງກ່າວນັ້ນ ສາມາດຊື້ເຂົ້າມາເພີ້ມໃຫ້ກຸ້ມກິນ 16 ກິໂລຕໍ່ເດືອນຕໍ່ຄົນ ແລະສາມາດໄຊ້ຈ່າຍອື່ນໆ( ຕາມເງື່ອນໄຂໃນ (ຊ່ອງ 9-12). ຖ້າບໍ່ໄດ້ຕາມເງື່ອນໄຂ ທີ່ກໍານົດໄວ້ ແມ່ນ ຄົວເຮືອນ ທ້າວ ກ. ຖືວ່າແມ່ນຄົວເຮືອນທຸກ. ***(ໃນກໍລະນີນີ້ແມ່ນໃຫ້ ຖືເອົາ 5 ເງື່ອນໄຂ ເປັນ ການຕີລາຄາເລີຍ )***

ຊ່ອງ 8: ແມ່ນຖາມເຖິງຄວາມສາມາດມີເຂົ້າກິນຂອງຄົວເຮືອນ ( ຫມາຍວ່າ ລວມທັງຜລິດເອົາເອງ ຫລື ມີ ຄວາມສາມາດຊື້ເຂົ້າກິນ) ສະເລ່ຍແມ່ນ16 ກິໂລ ຕໍ່ຄົນຕໍ່ເດືອນ ( ບໍ່ຈໍາແນກ ເພດຍິງ ຫລືເພດຊາຍ, ຜູ້ໃຫ່ຍຫລື ເດັກນ້ອຍ ຫລືຜູ້ສູງອາຍຸ, ຄົນເຈັບ ...) ເປັນພື້ນຖານໃນການກໍານົດ.

ຖ້າຄໍາຕອບແມ່ນຫນ້ອຍກວ່າ 16 ກິໂກຣາມ ແມ່ນຂຽນຄໍາຕອບ 0 ແລະຖ້າໃນກໍລະນີ ຄໍາຕອບຫລາຍກວ່າ ຫລື ເທົ່າກັບ 16 ກິໂລກຣາມ ຕໍ່ຄົນ ຕໍເດືອນ ແມ່ນ ຂຽນຄໍາຕອບ 1.

ຊ່ອງ 9- 11: ແມ່ນການຖາມເຖິງ ຄ່າໄຊ້ຈ່າຍອື່ນໆເຊັ່ນ: ເຄື່ອງນຸ່ງຫົ່ມ, ທີ່ຢູ່ອາໃສຖາວອນ, ຄ່າຮຽນຂອງລູກ ແລະ ຊື້ຢາປົວພະຍາດ ຊຶ່ງບັນທຶກຢູ່ໃນຊ່ອງ 8 ເຖິງ ຊ່ອງ 11. ຖ້າໃນກໍລະນີ ຄໍາຕອບຂາດເຂີນ / ບໍ່ມີ ແມ່ນ ຂຽນ 0 ແລະກໍລະນີ ຄໍາຕອບ ພໍມີ ແມ່ນຂຽນ 1.

ທີ່ຢູ່ອາໃສທີ່ຖາວອນ ແມ່ນຫມາຍເຖິງ ເຮືອນທີ່ກໍ່ສ້າງດ້ວຍວັດສະດຸທີ່ແຫນ້ນຫນາພໍສົມຄວນ, ຮັບປະກັນຍາມຝົນ, ລົມ, ມີປະຕູ, ປ່ອງຢ້ຽມ ແລະສາມາດອາໃສຢູ່ໄດ້ ໃນໄລຍະຍາວນານພໍສົມຄວນ. ກໍລະນີ້ ຄົວເຮືອນໃດ

ຄົວເຮືອນຫນຶ່ງ ຫາກບໍ່ມີເຮືອນເປັນຂອງຕົນເອງ ແຕ່ມີຄວາມສາມາດເຊົ່າເຮືອນຢູ່ ແລະເຮືອນດັ່ງກ່າວມີສະພາບຄື ກ່າວມານັ້ນ ກໍຖືວ່າ ມີທີ່ຢູ່ອາໃສທີ່ຖາວອນ.

ເຄື່ອງນຸ່ງຫົ່ມ ແມ່ນເຄື່ອງນຸ່ງຫົ່ມທຳມະດາ ທີ່ມີສະພາບດີພໍສົມຄວນ ສາມາດນຸ່ງໄປຫັ້ນມານີ້ໄດ້. ແຕ່ບໍ່ ຫມາຍວ່າຈະເປັນເຄື່ອງນຸ່ງທີ່ຫລູຫລາທີ່ທັນກັບຍຸກສະໄຫມ. (ໃຫ້ຖືວ່າແມ່ນຄວາມຕ້ອງການທີ່ຈຳເປັນທີ່ສຸດ).

<u>ຊອ່ງ 13:</u> ແມ່ນ ການສັງລວມຂໍ້ມູນແຕ່ ຊ່ອງ 8 ເຖິງ ຊ່ອງ 11 ( ຊ່ອງ 8+9+11+12)

<u>ຊ່ອງ 14:</u> ແມ່ນການຕີລາຄາຄົວເຮືອນທຸກ ຫລື ບໍ່ທຸກ. ໃນການຕີລາຄາແມ່ນໃຫ້ເບິ່ງຄຳຕອບຊ່ອງ 7 ແລະ ຊ່ອງ 13

- ຖ້າ ຊ່ອງ 7 ມີຄ່າເທົ່າ 0 ແລະຊ່ອງ13 ຕ່ຳກວ່າ 5ແມ່ນຖືວ່າ ເປັນ ຄົວເຮືອນທຸກ, ໃຫ້ຫມາຍ ຕົນກາ (X) ໃສ່ ຊ່ອງ 14.
- ຖ້າ ຊ່ອງ 7 ມີຄ່າເທົ່າ 1 ແມ່ນຖືວ່າ ເປັນ ຄົວເຮືອນບໍ່ທຸກ, ໃຫ້ຫມາຍ ຕົນຕິກ (√) ໃສ່ຊ່ອງ14.
- ຖ້າຊ່ອງ 13 ມີຄ່າເທົ່າກັບ 5 ແມ່ນຖືວ່າເປັນຄົວເຮືອນບໍ່ທຸກ, ໃຫ້ຫມາຍ ຕົນກາ (√ ) ໃສ່ຊ່ອງ 14.

## ການແນະນຳວິທີຈົດກ່າຍການບັນທຶກການຊົມໃຊ້ ແລະໃຊ້ຈ່າຍປະຈຳວັນຂອງຄົວເຮືອນ

ນັກເດີນສຳຫລວດຕ້ອງລົງໄປຢ້ຽມຢາມບັນດາຄົວເຮືອນຕົວແທນທີ່ເລືອກໄດ້ ແລະຊ່ວຍເຫຼືອເຂົາເຈົ້າໃນການຈົດກ່າຍ. ຖ້າທ່ານບໍ່ແນ່ໃຈຕໍ່ລະຫັດຂອງກິດຈະກຳການໃຊ້ຈ່າຍ ແລະຊົມໃຊ້, ໃຫ້ທ່ານເບິ່ງຕົວຢ່າງ ເພື່ອເປັນການຊ່ວຍເຫຼືອ ທ່ານເອງ. ບັນທຶກການໃຊ້ຈ່າຍ ແລະຊົມໃຊ້ ປະຈຳວັນ ແມ່ນໝາຍຄວາມວ່າ ມາຊິກຂອງຄົວເຮືອນໄດ້ຊື້ສິ່ງຂອງຢ່າງໃດຢ່າງໜຶ່ງ, ຫຼືໄດ້ຊົມໃຊ້ຜະລິດຕະພັນຂອງ ( ພືດ, ສັດລ້ຽງ, ສັດປີກ, ປາ, ສັດປ່າ ຫຼື ເຄື່ອງປ່າຂອງດົງ ) ຫຼື ໄດ້ຈາກການຂາຍຜະລິດຕະພັນຂອງຕົນເອງ, ຈາກທຸລະກິດ, ຫຼື ການມອບໃຫ້ ແລະການໄດ້ຮັບຄືນສິ່ງຂອງຕ່າງໆ ແມ່ນໃຫ້ບັນທຶກເຂົ້າໝົດ.

***ຈະບັນທຶກອັນໃດ***

- ບັນທຶກການຊື້ສິ່ງຂອງຕ່າງໆ ມາຊົມໃຊ້ຢ່າງເປັນປົກກະຕິປະຈຳວັນ,
- ລາຍຮັບທັງໝົດ ແລະ ການຊົມໃຊ້ ຜະລິດຕະພັນຂອງຕົນເອງ ທີ່ເກີດຂຶ້ນໃນໜຶ່ງເດືອນ
- ການບັນທຶກ ຫົວໜ່ວຍແມ່ນເປັນ ( ມັດ, ກິໂລກຣາມ, ກ້ອນ, ຖົງ ...) ແລະ ຈຳນວນປະລິມານຂອງລາຍການ ສິ່ງຂອງ ແລະ ອາຫານນັ້ນ
- ບັນທຶກລາຍຮັບ ທັງໝົດຂອງທຸລະກິດຄົວເຮືອນ
- ບັນທຶກລາຍຮັບທັງໝົດຂອງຄົວເຮືອນ ນັບທັງວັດຖຸ ແລະເງິນສົດ
- ບໍ່ນັບພາສີ ຖ້າຊື້ຢູ່ຕ່າງປະເທດ
- ບັນທຶກສິ່ງທີ່ມອບໃຫ້ ຫຼື ໄດ້ຮັບ, ການແລກປ່ຽນ
- ທັງໝົດການໃຊ້ຈ່າຍ ແລະຊົມໃຊ້ ແມ່ນໄດ້ແບ່ງອອກເປັນສາມໝວດຄື: ສຳຫລັບການຊົມໃຊ້ຄົວເຮືອນ (ຄ), ສຳຫລັບກະສິກຳ, ການປ່າໄມ້ ແລະການປະມົງ (ກ) ແລະສຳຫລັບການທຸລະກິດຂອງຄົວເຮືອນ (ທ)
- ການບັນທຶກລາຍຮັບ ແລະ ໃຊ້ຈ່າຍທັງໝົດຂອງການກະສິກຳ, ການປ່າໄມ້, ການປະມົງ ເປັນທັງເງິນສົດ ແລະ ວັດຖຸສິ່ງຂອງ
- ການບັນທຶກລາຍຮັບ ແລະ ໃຊ້ຈ່າຍ ຂອງທຸລະກິດຄົວເຮືອນ ເປັນທັງເງິນສົດ ແລະວັດຖຸສິ່ງຂອງ
- ບັນທຶກລາຍຮັບທັງໝົດຂອງຄົວເຮືອນ ( ຄ່າຈ້າງ, ມອບໃຫ້ ແລະ ອື່ນໆ) ເປັນທັງເງິນສົດ ແລະ ວັດຖຸສິ່ງຂອງ
- ການໃຊ້ຈ່າຍສຳຫລັບຜະລິດຕະພັນ, ແມ່ນບັນທຶກ ຢູ່ໃນລາວ ຫຼື ຢູ່ຕ່າງປະເທດ
- ສຳຫລັບການຊື້ສິນເຊື່ອ, ແມ່ນບັນທຶກເອົາຈຳນວນມູນຄ່າທັງໝົດ ທີ່ໄດ້ມອບຮັບໃນເດືອນນັ້ນ
- ສຳຫລັບການສຳລະ, ບັນທຶກເອົາພຽງດອກເບັ້ຍເທົ່ານັ້ນ

**ການໃສ່ລະຫັດຂອງລາຍການບັນທຶກ**

ລະຫັດຂອງການໃຊ້ຈ່າຍ ແລະການຊົມໃຊ້ ທັງໝົດແມ່ນແບ່ງອອກເປັນສີ່ປະເພດແຕກຕ່າງກັນ:

1. ການໃຊ້ຈາຍ ແລະຊົມໃຊ້ ແມ່ນເປັນວັດຖຸສິ່ງຂອງ, ເປັນເງິນສົດ ຫຼື ເປັນການແລກປ່ຽນ

2. ບັນດາສິ່ນຄ້າ ຜະລິດຢູ່ໃນລາວ ແລະ ຢູ່ຕ່າງປະເທດ (ອີງຕາມການລາຍງານເຈົ້າຂອງ)
3. ການບັບທຶກແມ່ນອີງໃສ່ຈຸດປະສົງ : ເພື່ອການຊົມໃຊ້ຄົວເຮືອນ, ເພື່ອການກະສິກຳ ຫຼື ເພື່ອທຸລະກິດຄົວເຮືອນ
4. ການໃສ່ລະຫັດ ແມ່ນອີງຕາມລາຍການ ໃຊ້ຈ່າຍ ແລະ ຊົມໃຊ້ຂອງຄົວເຮືອນ

***ແມ່ນໃຜເປັນຜູ້ບັນທຶກ?***

ນັກເດີນສຳຫລວດ ເປັນຜູ້ຈົດກ່າຍບັນດາລາຍການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ເຂົ້າຕາຕະລາງ ແລະຕ້ອງຂຽນໃຫ້ຈະແຈ້ງສະອາດ ກ່ຽວກັບລາຍການນັ້ນ, ການບັນທຶກຫົວໜ່ວຍແມ່ນເປັນ ( ກິໂລກຣາມ, ມັດ, ກ້ອນ, ຖົງ ແລະ ....), ການໃຊ້ຈ່າຍ ຫຼື ການຊົມໃຊ້ຜະລິດຕະພັນຂອງຕົນເອງ ແມ່ນເປັນຈຳນວນ ແລະ ປະລິມານ, ມູນຄ່າຂອງການໃຊ້ຈ່າຍ ແລະ ການຊົມໃຊ້ ເຖິງຈະເປັນເງິນ, ເປັນວັດຖຸ ຫຼື ເປັນການແລກປ່ຽນ ແມ່ນໃຫ້ຄິດໄລ່ ແລ້ວປ່ຽນມາເປັນມູນຄ່າເງິນກີບ. (ກໍລະນີສະມາຊິກຄົວເຮືອນຈົດກ່າຍໃຫ້ໄດ້ ກໍ່ມອບໃຫ້ຄົວເຮືອນຊ່ວຍ ແຕ່ນັກເດີນສຳຫລວດຈະຕ້ອງມາກວດທຸກໆ ຕອນແລງ ເພື່ອແນະນຳ ແລະໃສ່ລະຫັດລາຍການໄປພ້ອມ).

ບັນດາລາຍການໃຊ້ຈ່າຍ ແລະ ຊົມໃຊ້ ນັ້ນ ມັນອາດເປັນເງິນສົດ ຫຼື ເປັນວັດຖຸ ຫຼືເປັນການແລກປ່ຽນ ຫົວໜ້າຄົວເຮືອນຕ້ອງໄດ້ຂີດວົງມົນອ້ອມລະຫັດ 1, 2 ຫຼື 3 ຕາມຄວາມຈິງ.

ນັກເດີນສຳຫລວດຈະເປັນຜູ້ກວດກາ ແລະ ເຮັດໃຫ້ຄົບຖ້ວນ ສຳຫລັບບັນດາລາຍການໃຊ້ຈ່າຍ, ການຊົມໃຊ້ຜະລິດຕະພັນຢູ່ໃນລາວ ຫຼື ສິນຄ້ານຳເຂົ້າຈາກຕ່າງປະເທດ ແລະຊີ້ແຈງຈຸດປະສົງຂອງການໃຊ້ຈ່າຍ ແລະຊົມໃຊ້ຂອງຄົວເຮືອນ. ພຽງແຕ່ທ່ານຂີດວົງມົນອ້ອມລະຫັດຄຳຕອບທີ່ຖືກຕ້ອງ ( 1, 2 ແລະ ກ, ຄ,ທ ) ພ້ອມດຽວກັນນັ້ນ ທ່ານຕ້ອງໃສ່ລະຫັດສຳຫລັບບັນດາລາຍການເຫຼົ່ານັ້ນ ໂດຍອີງໃສ່ບັນຊີລະຫັດຕ່າງໆທີ່ຕິດຄັດຢູ່ໃນເອກະສານສະບັບນີ້. ໃນພຶດຕິກຳຕົວຈິງ ສຳຫລັບການຊົມໃຊ້ຜະລິດຕະພັນຂອງຕົນເອງມີຄວາມຫຍຸ້ງຍາກ, ເພາະມີບັນຫາດ້ານລາຄາ, ກ່ຽວກັບຂໍ້ມູນດ້ານລາຄາ ທ່ານສາມາດເລືອກ ແລະນຳໃຊ້ລາຄາຢູ່ໃນທ້ອງຖິ່ນນັ້ນ ຫຼື ຢູ່ຕະຫລາດທີ່ໃກ້ຄຽງທີ່ສຸດ.




***ລະຫັດສຳຫລັບລາຍການຕ່າງມີຄື:***

- ສິນຄ້າທີ່ພົວພັນເຖິງການໃຊ້ຈ່າຍຂອງຄົວເຮືອນ ( ເປັນເງິນສົດ ແລະວັດຖຸ) ຈະແມ່ນລະຫັດແຕ່ 1 ເຖິງ 356 ຢູ່ໃນນີ້ ມີທັງການຊົມໃຊ້ພະລິດຕະພັນຂອງຕົນເອງ.
  - ສຳຫລັບການໃຊ້ຈ່າຍປະເພດອາຫານ ໃຫ້ເບິ່ງ ລະຫັດແຕ່ 1 ເຖິງ 116.
  - ສຳຫລັບການ ໃຊ້ຈ່າຍປະເພດເຄື່ອງດື່ມ ແລະຂອງມຶນເມົາ ໃຫ້ເບິ່ງ ລະຫັດແຕ່ 117 ເຖິງ 122.
  - ສຳຫລັບການ ໃຊ້ຈ່າຍປະເພດຢາສູບ ໃຫ້ເບິ່ງ ລະຫັດແຕ່ 123 ເຖິງ 126.

- ສຳຫລັບການຊົມໃຊ້ຜະລິດຕະພັນທີ່ຕົນເອງຜະລິດໄດ້,  ໃຫ້ເບິ່ງລະຫັດແມ່ນແຕ່ 127 ເຖິງ 155.
- ສຳຫລັບການ ໃຊ້ຈ່າຍປະເພດເຄື່ອງນຸ່ງຫົ່ມ ແລະເກີບ ໃຫ້ເບິ່ງ ລະຫັດແຕ່ 162 ເຖິງ 189.
- ສຳຫລັບການ ໃຊ້ຈ່າຍປະເພດເຄື່ອງໄຟຟ້າ, ນ້ຳປະປາ ແລະບຳລຸງຮັກສາເຮືອນ ໃຫ້ເບິ່ງ ລະຫັດແຕ່ 190 ເຖິງ 200.
- ສຳຫລັບການ ໃຊ້ຈ່າຍປະເພດເຄື່ອງເຟີນິເຈີ ເຄື່ອງຕົບແຕ່ງເຮືອນ ແລະການບຳລຸງຮັກສາ ໃຫ້ເບິ່ງ ລະຫັດ ແຕ່ 201 ເຖິງ 262.
- ສຳຫລັບການໃຊ້ຈ່າຍເພື່ອຮັກສາສຸຂະພາບ ໃຫ້ເບິ່ງ ລະຫັດແຕ່ 263 ເຖິງ 268.
- ສຳຫລັບການໃຊ້ຈ່າຍ ໂທລະຄົມຄົມມະນາຄົມ ໃຫ້ເບິ່ງ ລະຫັດແຕ່ 269 ເຖິງ 291.
- ສຳຫລັບການໃຊ້ຈ່າຍການການພັກຜ່ອນຢ່ອນອາລົມ ໃຫ້ເບິ່ງ ລະຫັດແຕ່ 292 ເຖິງ 317.
- ສຳຫລັບການໃຊ້ຈ່າຍການສຶກສາ ໃຫ້ເບິ່ງ ລະຫັດແຕ່ 318 ເຖິງ 326.
- ສຳຫລັບການໃຊ້ຈ່າຍໂຮງແຮມ ແລະການກິນດື່ມ ໃຫ້ເບິ່ງ ລະຫັດແຕ່ 327 ເຖິງ 329.
- ສຳຫລັບການໃຊ້ຈ່າຍສຳລັບເຄື່ອງໃຊ້ສ່ວນຕົວ ແລະການບໍລິການ ໃຫ້ເບິ່ງ ລະຫັດແຕ່ 330 ເຖິງ 356.

- ການໃຊ້ຈ່າຍທີ່ພົວພັນເຖິງລາຍຮັບ ແລະ ການສິ້ນເປືອງ  (ລາຍຈ່າຍ) ສຳຫລັບການກະສິກຳ, ການປ່າໄມ້ ແລະ ການປະມົງ ແມ່ນໃຊ້ລະຫັດແຕ່ 401 ເຖິງ 471.
  - ລະຫັດແຕ່ 401 ຫາ 421 ສຳລັບການຂາຍຂາຍຄືນ ຫລືແລກປ່ຽນວັດຖຸສິ່ງຂອງ.
  - ລະຫັດແຕ່ 451 ເຖິງ 471 ສຳຫລັບການໃຊ້ຈ່າຍ ແລະການແລກປ່ຽນ ຜະລິດຕະພັນຂອງຕົນເອງ.
- ການໃຊ້ຈ່າຍທີ່ພົວພັນເຖິງທຸລະກິດຂອງຄົວເຮືອນ, ລະຫັດແມ່ນແຕ່ 501 ເຖິງ 611.
  - ລະຫັດແຕ່ 501 ເຖິງ 512 ສຳຫລັບລາຍຮັບ.
  - ລະຫັດແຕ່ 551 ເຖິງ 566 ສຳຫລັບການໃຊ້ຈ່າຍ.
  - ການໃຊ້ຈ່າຍ ທີ່ກ່ຽວຂ້ອງກັບການລົງທືນ ທີ່ດິນ ແລະ ການກໍ່ສ້າງ ມີລະຫັດແຕ່ 601 ເຖິງ 611.

ຈົ່ງພະຍາຍາມບັນລະຍາຍ, ຊີ້ແຈງໃຫ້ລະອຽດ ກ່ຽວກັບຈຸດປະສົງໃນການຂອງການໃຊ້ຈ່າຍ ແລະຊົມໃຊ້ - ກວດກາຄືນອີກຄັ້ງໃນເມືອໄດ້ໃສ່ລະຫັດລົງໄປແລ້ວ. ຕາມທຳມະດາ ມັນສາມາດສັງເກດເຫັນໄດ້ຢ່າງງ່າຍໆ ລະ ຫວ່າງ ສາມຈຸດປະສົງຄື: ສຳຫລັບຄົວເຮືອນ, ສຳຫລັບກະສິກຳ ແລະ ສຳຫລັບທຸລະກິດ.

**<u>ການບັນທຶກຕົ້ນທືນ</u>**

ການຊື້ເຄື່ອງບາງຢ່າງຢູ່ໃນຄົວເຮືອນ ແມ່ນອີງໃສ່ຕົ້ນທືນ  ແລະ ສິ່ງຂອງເຫຼົ່ານັ້ນ ມັນອາດ ແມ່ນພາກສ່ວນໜຶ່ງຂອງການກະສິກຳ ຫຼື ການທຸລະກິດ.

ຖ້າສະມາຊິກຂອງຄົວເຮືອນໄດ້ຊື້ລົດຕຸກ - ຕຸກ, ອັນນີ້ ມັນແມ່ນເປັນການຊົມໃຊ້  ແລະ ເປັນທຸລະກິດການຂົນສົ່ງ. ມັນຈະໄດ້ຈົດເຂົ້າໃນລາຍການທີ 555 ແລະເປັນຕົ້ນທືນທາງທຸລະກິດ. ໃນຄະນະດຽວກັນນັ້ນ ມັນຍັງເປັນໄປໄດ້ທັງສອງຢ່າງ ຄື ສິນຄ້າຊົມໃຊ້ ແລະສິນຄ້າຕົ້ນທືນ. ລົດຄັນດັ່ງກ່າວ ສ່ວນໃຫ່ຍແລ້ວ ແມ່ນຊື້ມາເພື່ອຈຸດປະສົງທາງທຸລະກິດ ສະນັ້ນມັນຈຶ່ງຖືກຈົດເຂົ້າລາຍການ 555 ແລະເປັນຕົ້ນທືນທາງທຸລະກິດ.

ຍານພະຫານະ ຫຼື ເຄື່ອງຈັກອື່ນໆ ທີ່ມີ ຕົ້ນທຶນຫລາຍໆ ແລະໄດ້ນໍາໃຊ້ຢູ່ໃນການກະສິກໍາ ລະຫັດແມ່ນ 463. ເຄື່ອງມື ແລະອຸປະກອນທີ່ນ້ອຍກ່ວາ ລາຍການລະຫັດແມ່ນ 464 ເຖິງ 466 ສໍາລັບການກະສິກກໍາ ແລະ 556 ສໍາລັບທຸລະກິດຄົວເຮືອນ.

ເຄື່ອງເຟີນີເຈີທີ່ຊື້ສໍາລັບຈຸດປະສົງທຸລະກິດ ລະຫັດ ແມ່ນ 556. ອັນນີ້ແມ່ນອະທິບາຍໃຫ້ຄົວເຮືອນໃນເມື່ອທ່ານສໍາພາດເທື່ອສຸດທ້າຍ ແລະ ກວດກາຄືນການບັນທຶກປະຈໍາວັນ.

ໃນທຸລະກິດຕົນເອງ ເຂົາເຈົ້າສາມາດຂາຍຕູ້ນໍ້າກ້ອນເກົ່າຂອງເຂົາ ຫຼື ກໍ່ຊື້ອັນໃໝ່, ລາຍຮັບທີ່ໄດ້ຂາຍນັ້ນ ແມ່ນຈົດເຂົ້າໃນລາຍການລະຫັດ 511 ແລະສໍາຫລັບອັນໃໝ່ ແມ່ນລາຍການ ລະຫັດ 555.

## <u>ການບັນທຶກຂອງການຮັບ ແລະ ການມອບໃຫ້ຄົນອື່ນ ເປັນເງິນສົດ</u>

ການມອບໃຫ້ອາດເປັນສອງປະເພດ, ເປັນເງິນສົດ ຫຼື ເປັນວັດຖຸ. ຖ້າເປັນການມອບຮັບຜ່ານມາເປັນເງິນສົດແມ່ນໃຫ້ບັນທຶກເປັນເງິນສົດ. ຢ່າງໃດກໍ່ຕາມໃນຫລາຍໆເລື້ອງມັນອາດເປັນການຊົມໃຊ້ຂອງຄົວເຮືອນ, ແຕ່ວ່າມັນກໍ່ອາດເປັນການສະໜັບສະໜູນໃຫ້ການກະສິກໍາ ຫຼື ການທຸລະກິດຂອງຄົວເຮືອນອີກດ້ວຍ. ຖ້າຫາກນອກເໜືອຈາກຈຸດປະສົງທີ່ກ່າວມາຂ້າງເທິງແລ້ວ ມັນຈະເປັນການບັນທຶກຕາມຈຸດປະສົງຂອງຄົວເຮືອນ.

ຕົວຢ່າງ:

| ວັນທີ | ລາຍການ | ຫົວໜ່ວນ | ຈຳນວນ | ມູນຄ່າ | ຫົວໜ່ວຍມູນຄ່າ | .ເງິນສົດ<br>.ວັດຖຸ<br>.ແລກປ່ຽນ | ຈຸດປະສົງ:<br>. ຄົວເຮືອນ<br>. ກະສິກຳ<br>. ທຸລະກິດ | . ຜະລິດຢູ່ລາວ<br>. ຕ່າງປະເທດ | ລາຍການລະຫັດ |
|---|---|---|---|---|---|---|---|---|---|
| 1 | ໄດ້ຮັບ | | | 50.000 | | (1) 2 3 | ກ (ຄ) ທ | (1) 2 | 808 |
| 24 | ໄດ້ຮັບ | | | 95.000.000 | | (1) 2 3 | ກ ຄ (ທ) | 1 (2) | 809 |
| 30 | ມອບໃຫ້ຄົນອື່ນໄປຕ່າງປະເທດ | | | 30.000 | | (1) 2 3 | ກ (ຄ) ທ | (1) 2 | 355 |

ໃນເບື້ອງຕົ້ນຫົວໜ້າຄົວເຮືອນໄດ້ບອກວ່າ ພວກເຮົາໄດ້ຮັບເງິນສົດ 50.000 ກີບ ຈາກການເຮັດວຽກຢູ່ວຽງຈັນ. ມັນມີຄວາມສໍາຄັນຫລາຍໃນການບັນທຶກ “ ເງິນສົດ” ແລະ ການໃສ່ລະຫັດອັນແທ້ຈິງ. ໃນມື້ 24 ຄົວເຮືອນໄດ້ຮັບຈໍານວນເງິນທີ່ຫລາຍກ່ວາ ແລະ ຫົວໜ້າຄົວເຮືອນໄດ້ບອກວ່າ ວົງເງິນນີ້ ແມ່ນເພື່ອເປັນທຶນຮອນໃນການເຮັດທຸລະກິດ. ການບັນທຶກ ເປັນເງິນສົດ, ຈຸດປະສົງ (ທຸລະກິດ), ຈາກຕ່າງປະເທດ ພ້ອມການໃສ່ລະຫັດ ທີ່ເໝາະສົມ ບັນທຶກການໄດ້ຮັບ ຫຼື ການມອບໃຫ້ ແມ່ນຈະຕ້ອງໄດ້ສັງລວມ ຢູໃນການຢ້ຽມຢາມ ແລະ ສໍາພາດຄົວເຮືອນຄັ້ງສຸດທ້າຍ

**<u>ການໄດ້ຮັບ ແລະ ການມອບໃຫ້ ທີ່ເປັນວັດຖຸ</u>**

ຖ້າຄົວເຮືອນຊາວກະສິກອນໜຶ່ງ ໄດ້ເອົາເຂົ້າທີ່ຕົນເອງຜະລິດໄດ້ ມອບໃຫ້ຄົວເຮືອນອື່ນ ຫຼື ການມອບຮັບນັ້ນມັນເປັນການທົບແທນຄືນເຈົ້າຂອງດິນ , ການໃສ່ລະຫັດສຳຫລັບການມອບໃຫ້ ແມ່ນນອນຢູ່ພາກການມອບໃຫ້ຄົນອື່ນ, ສຳຫລັບຄົວເຮືອນທີ່ໄດ້ຮັບເຂົ້າມາ ແມ່ນໃຫ້ຈົດກ່າຍຄືກັນກັບແບບການຊື້

ເຂົ້າ ຫຼື ສິ່ງຂອງອື່ນໆ ທີ່ໄດ້ມອບໃຫ້ວັດ ແມ່ນບໍ່ບັນທຶກປະຈຳວັນ, ຫຼື ໃນເລື້ອງທີ່ຄົວເຮືອນໄດ້ຊື້ສິ່ງຂອງມາໄວ້ ແລ້ວເອົາມອບໃຫ້ຄົນອື່ນ ກໍ່ບໍ່ຈົດເຊັ່ນດຽວ, ພຽງແຕ່ວ່າການຊື້ເທື່ອທຳອິດ ຈະເປັນການບັນທຶກເທົ່ານັ້ນ.

| ມື້ | ລາຍການ | ຫົວໜ່ວນ | ຈຳນວນ | ມູນຄ່າ | ຫົວໜ່ວຍມູນຄ່າ | .ເງິນສົດ<br>.ວັດຖຸ<br>.ແລກປ່ຽນ | ຈຸດປະສົງ:<br>. ຄົວເຮືອນ<br>. ກະສິກຳ<br>. ທຸລະກິດ | . ຜະລິດຢູ່ລາວ<br>. ຕ່າງປະເທດ | ລາຍການລະຫັດ |
|---|---|---|---|---|---|---|---|---|---|
| 2 | ເອົາສິ່ງຂອງທີ່ຕົນຜະລິດໄດ້ໃຫ້ຄົນອື່ນ | ກິໂລກຣາມ | 50 | 100.000 | | 1 (2) 3 | ກ (ຄ) ທ | (1) 2 | 156 |
| 2 | ໄດ້ຮັບສິ່ງຂອງຈາກຄົນອື່ນ | ກິໂລກຣາມ | 50 | 100.000 | | 1 (2) 3 | ກ (ຄ) ທ | (1) 2 | 1 |

**<u>ການເອົາຜະລິດຕະພັນຈາກ ທຸລະກິດຂອງຕົນເອງມາຊົມໃຊ້</u>**

ຖ້າຄົວເຮືອນມີຮ້ານຂາຍເຄື່ອງ ແລະມີສະມາຊິກຂອງຄົວເຮືອນໄດ້ເອົາຜະລິດຕະພັນນັ້ນມາຊົມໃຊ້ ຫລືກິນ, ມູນຄ່າຂອງມັນຈະຖືກບັນທຶກເຂົ້າຄ້າຍຄືກັບການຂາຍ. ມັນນອນຢູ່ໃນລາຍການຂອງ “ ລາຍຮັບທຸລະກິດ “ ໃຫ້ຂຽນຊື່ “ ການຊົມໃຊ້ຜະລິດຕະພັນຕົນເອງ” ການໃຊ້ລະຫັດກໍ່ຈະໄດ້ໃສ່ເຊັ່ນກັນ.

**<u>ການບັນທຶກລາຍຮັບຈາກທຸລະກິດຄົວເຮືອນ.</u>**

ມີບາງຄົວເຮືອນໄດ້ເຮັດທຸລະກິດນ້ອຍເຊັ່ນ: ຄົວເຮືອນໜຶ່ງໄດ້ເຮັດຮ້ານຂາຍເຄື່ອງ ຫຼື ຮ້ານອາຫານ, ມັນຈະມີລາຍຮັບທຸກໆວັນ ແລະ ຕອນແລງຄົວເຮືອນນີ້ ຈະໄດ້ນັບ ແລະສະຫລູບລາຍໄດ້ຂອງຕົນ. ດ້ວຍເຫດນີ້ ຄົວເຮືອນຈະຕ້ອງໄດ້ລາຍງານ ແລະຈົດເຂົ້າໃນບັນທຶກປະຈຳວັນນີ້ : ຕົວຢ່າງ :

ລາຍໄດ້ຈາກທຸລະກິດອື່ນອາດຈະບໍ່ໄດ້ຮັບທຸກໆມື້, ກໍລະນີດັ່ງກ່າວ ແມ່ນບັນທຶກໃນເວລາ ຫລືມື້ທີ່ເຂົາເຈົ້າໄດ້ຮັບຕົວຈິງ.

## ລະຫັດສຳລັບການຊື້ (ຈ່າຍ) ປະເພດອາຫານ (1 ຮອດ 116)

| ລາຍການ | ລະຫັດ |
|---|---|
| I. ປະເພດອາຫານ | |
| II. ເຂົ້າ ແລະທາດແປ້ງ | |
| ເຂົ້າຫນຽວ | 1 |
| ເຂົ້າຈ້າວ | 2 |
| ສາລີເມັດ | 3 |
| ແປ້ງສາລີ | 4 |
| ແປ້ງເຂົ້າຈີ່ ແລະແປ້ງອື່ນໆ | 5 |
| ເຂົ້າຈີ່ອື່ນໆ | 6 |
| ເສັ້ນເຝີແຫ້ງ / ຫມີ່ແຫ້ງ | 7 |
| ເສັ້ນເຂົ້າປຸ້ນ | 8 |
| ເສັ້ນອື່ນໆ | 9 |
| ເຂົ້າຫນົມເຄັກ ແລະເຂົ້າຫນົມປັງ | 10 |
| ອື່ນໆ | 11 |
| III. ປະເພດ ຊີ້ນ | |
| ຊີ້ນຫມູ | 12 |
| ຊີ້ນ ງົວ, ຊີ້ນຄວາຍ | 13 |
| ຊີ້ນໄກ່ | 14 |
| ຊີ້ນ ເປັດ, ໄກ່ງວງ, ນົກອື່ນໆ | 15 |
| ໃສ້ກອກ | 16 |
| ຊີ້ນສັດປາ ( ລວມທຸກຊະນິດ) | 17 |
| ເຄື່ອງໃນສັດ | 18 |
| ຊີ້ນອື່ນໆ | 19 |
| ປະເພດ ປາ | |
| ປາສົດ | 20 |
| ປາກະປ໋ອງ | 21 |
| ປາແຊ່ແຂງ | 22 |
| ປາແຫ້ງ ແລະປາຢ້າງ | 23 |
| ກຸ້ງ, ປູ, ປາມຶກ ແລະອື່ນໆ | 24 |
| ປາແດກ, ປາສົ້ມ | 25 |
| ປາດອງ | 26 |
| ປາອື່ນໆ | 27 |

| ລາຍການ | ລະຫັດ |
|---|---|
| ປະເພດ ນົມ, ເນີຍ ແລະໄຂ່ | |
| ນົມປອ໋ງຂຸ້ນ | 28 |
| ນົມຝຸ່ນ | 29 |
| ນົມສົດ | 30 |
| ເນີຍ, ນ້ຳທີວກະທິ, ນົມສົ້ມ | 31 |
| ໄຂ່ | 32 |
| ອື່ນໆ | 33 |
| ປະເພດ ນ້ຳມັນພືດ ແລະນ້ຳມັນສັດ | |
| ນ້ຳມັນສັດ | 34 |
| ນ້ຳມັນພືດ | 35 |
| ນ້ຳມັນອື່ນໆ | 36 |
| ປະເພດ ຫມາກໄມ້ | |
| ຫມາກກ້ວຍ | 37 |
| ຫມາກຫຸ່ງ | 38 |
| ຫມາກກ້ຽງ | 39 |
| ຫມາກນັດ | 40 |
| ຫມາກນາວ | 41 |
| ຫມາກລຳໄຍ | 42 |
| ຫມາກພ້າວອອ່ນ | 43 |
| ຫມາກແຕ່ງຫອມ | 44 |
| ຫມາກພິລາ | 45 |
| ຫມາກຄາຍ | 46 |
| ຫມາກຍົມ | 47 |
| ຫມາກອາໂວກາໂດ ( Avocado ) | 48 |
| ຫມາກຊຽບ | 49 |
| ຫມາກສີດາ | 50 |
| ຫມາກຂາມຫວານ | 51 |
| ຫມາກທັນ | 52 |
| ຫມາກມີ້ | 53 |
| ຫມາກໄມ້ດອງ | 54 |
| ຫມາກໄມ້ອື່ນໆ | 55 |

| ລາຍການ | ລະຫັດ |
|---|---|
| ປະເພດ ຜັກທີ່ກິນໝາກ | |
| ໝາກໂມ | 56 |
| ໝາກເຜັດ | 57 |
| ໝາກແຕງກິ່ວ | 58 |
| ໝາກເຂືອ | 59 |
| ໝາກບວບ | 60 |
| ໝາກຟັກ | 61 |
| ໝາກອຶ | 62 |
| ໝາກເລັ່ນ | 63 |
| ໝາກອື່ນໆ | 64 |
| ປະເພດ ຜັກທີ່ກິນໃບອື່ນໆ | |
| ຜັກກະລຳປີ | 65 |
| ຜັກກາດຂາວ | 66 |
| ໃບໝາກອຶ ແລະຕະກຸນໃບໝາກອຶ | 67 |
| ຜັກກາດຂຽວ | 68 |
| ຜັກສະລັດ | 69 |
| ຜັກຫອມຫົ້ | 70 |
| ຜັກຊີ | 71 |
| ຜັກຫອມປ້ອມ | 72 |
| ຜັກແພວ | 73 |
| ຜັກບົ່ວລະພາ | 74 |
| ຜັກຫອມເປ ( ຜັກຫອມຈີນ ) | 75 |
| ຜັກຕັ້ງສ້າຍ | 76 |
| ຜັກຫຼຽມ | 77 |
| ຜັກບົ່ວ | 78 |
| ໝາກຖົ່ວຍາວ | 79 |
| ໜໍ່ໄມ້ | 80 |
| ຜັກທຶມ | 81 |
| ໝາກພິກໄທຂຽວ | 82 |
| ຜັກບົ້ງ | 83 |
| ຜັກອື່ນໆ | 84 |
| IV. ປະເພດພືດ ຕະກຸນຖົ່ວ | |
| ຖົ່ວຂຽວ | 85 |
| ພືດຖົ່ວເຊັ່ນ : ຖົ່ວດຳ,ຖົ່ວແດງ | 86 |
| ຖົ່ວອື່ນໆ | 87 |

| ລາຍການ | ລະຫັດ |
|---|---|
| ປະເພດ ໝາກໄມ້ຈຳພວກເປືອກແຂງ | |
| ໝາກພ້າວ | 88 |
| ໝາກຖົ່ວດິນ ແລະໝາກໄມ້ທີ່ມີກາບ ຢູ່ໃນດິນ | 89 |
| ອື່ນໆ | 90 |
| ປະເພດ ພືດກິນຮາກ ແລະຫົວ | |
| ມັນຝຣັ່ງ | 91 |
| ມັນດ້າງ | 92 |
| ມັນຕົ້ນ | 93 |
| ມັນເພົ້າ | 94 |
| ມັນຝຣັ່ງທອດ ແລະມັນທີ່ແປຮູບ | 95 |
| ມັນອື່ນໆ | 96 |
| ນ້ຳຕານ ແລະຂອງຫວານ | |
| ນ້ຳຕານ | 97 |
| ຂອງຫວານ | 98 |
| ນ້ຳເຜີ້ງ | 99 |
| ກະແລມ | 100 |
| ຂອງຫວານອື່ນໆ | 101 |
| ປະເພດ ກະເຟ, ຊາ ແລະອື່ນໆ | |
| ກາເຟ | 102 |
| ຊາ | 103 |
| ນ້ຳໄຊໂກແລດ, ຕົວຢ່າງໂອລ່ຽງ, ໂອວັນຕິນ,........... | 104 |
| ອື່ນໆ | 105 |
| ປະເພດ ອາຫານອື່ນໆ | |
| ເກືອ | 106 |
| ນ້ຳປາ | 107 |
| ນ້ຳໝາກເລັ່ນ | 108 |
| ນ້ຳສະອີ໋ວ | 109 |
| ເຄື່ອງເທດ ແລະເຄື່ອງປຸງອາຫານ | 110 |
| ແປ້ງ | 111 |
| ນ້ຳສົ້ມ | 112 |
| ອື່ນໆ ( ບອກແຈ້ງ ) | 113 |
| ປະເພດ ເຄື່ອງດື່ມທີ່ບໍ່ມີທາດມຶນເມົາ | |
| ນ້ຳໝາກໄມ້, ນ້ຳໝາກໄມ້ບົດ | 114 |
| ນ້ຳດື່ມໃສ່ກວດ ( ນ້ຳດື່ມບໍລິສຸດ ) | 115 |
| ນ້ຳຫວານອື່ນໆ ( ທີ່ບໍ່ມີທາດມຶນເມົາ ) | 116 |

## ລະຫັດສຳລັບການ ຊື້ (ຈ່າຍ) ປະເພດເຄື່ອງດື່ມ ແລະຂອງມຶນເມົາ (117 ຮອດ 126)

| ລາຍການ | ລະຫັດ |
|---|---|
| ປະເພດ ເຄື່ອງດື່ມທີ່ມີທາດມຶນເມົາ | |
| ເບຍ ( ຊື້ຈາກຮ້ານຂາຍ ) | 117 |
| ເບຍ ( ຊື້ດື່ມຢູ່ຮ້ານກິນດື່ມ ) | 118 |
| ເຫລົ້າລາວ ( ຊື້ຈາກຮ້ານຂາຍ ) | 119 |
| ເຫລົ້າລາວ ( ຊື້ດື່ມຢູ່ຮ້ານກິນດື່ມ ) | 120 |
| ເຫລົ້າອື່ນໆ ( ຊື້ຈາກຮ້ານຂາຍ ) | 121 |
| ເຫລົ້າອື່ນໆ ( ຊື້ດື່ມຢູ່ຮ້ານກິນດື່ມ ) | 122 |

| ລາຍການ | ລະຫັດ |
|---|---|
| ປະເພດ ຢາສູບ | |
| ຢາພັນ ( ສຳລັບພັນເປັນກອກ ) | 123 |
| ຢາຊອງ | 124 |
| ຢາເສັ້ນ | 125 |
| ຢາສູບອື່ນໆ | 126 |

## ລະຫັດສຳລັບການຊົມໃຊ້ຜະລິດຕະພັນທີ່ຕົນເອງຜະລິດໄດ້ (127 ຮອດ 155)

| ລາຍການ | ລະຫັດ |
|---|---|
| V. ການຊົມໃຊ້ເອງຜະລິດຕະພັນຂອງຕົນເອງ ຫລືເອົາໃຫ້ຄົນອື່ນ | |
| ເຂົ້າໜຽວ | 127 |
| ເຂົ້າຈ້າວ | 128 |
| ສາລີເມັດ | 129 |
| ພືດເປັນເມັດອື່ນໆ | 130 |
| ມັນຕົ້ນ | 131 |
| ມັນດ້າງ | 132 |
| ພືດກິນຮາກ ແລະຫົວອື່ນໆ | 133 |
| ຜັກທີ່ປູກ | 134 |
| ຜັກທີ່ຫາມາຈາກທຳມະຊາດ | 135 |
| ໝາກໄມ້ ທີ່ປູກ | 136 |
| ໝາກໄມ້ທີ່ຫາມາຈາກທຳມະຊາດ | 137 |
| ສັດປີກ ແລະຜະລິດຕະພັນຂອງສັດປີກ | 138 |
| ໝູຂອງຕົນເອງ ( ໝົດຕົວ ຫລືເປັນສ່ວນ ) | 139 |
| ງົວ, ຄວາຍຂອງຕົນເອງ ( ໝົດຕົວ ຫລືເປັນສ່ວນ ) | 140 |
| ແບ້ຂອງຕົນເອງ ( ໝົດຕົວ ຫລືເປັນສ່ວນ ) | 141 |

| ລາຍການ | ລະຫັດ |
|---|---|
| ສັດລ້ຽງອື່ນໆ ( ຕົວຢ່າງກະຕ່າຍ,.............) | 142 |
| ສັດປ່າ | 143 |
| ປາ ທີ່ລ້ຽງ | 144 |
| ປາ ທີ່ຫາມາຈາກທຳມະຊາດ | 145 |
| ກາເຟ | 146 |
| ຊາ | 147 |
| ໝາກພ້າວ | 148 |
| ໝາກຖົ່ວເຫລືອງ | 149 |
| ໝາກແໜ່ງ | 150 |
| ຫົວສີໄຄ | 151 |
| ໝາກ ຄ້ຽວ | 152 |
| ຂີງ | 153 |
| ພືດອຸດສະຫະກຳອື່ນໆ | 154 |
| ຜົນຜະລິດອື່ນໆຂອງຕົນເອງ ( ບອກແຈ້ງ ) | 155 |

## ລະຫັດສຳລັບການ ຊື້ (ຈ່າຍ) ປະເພດເຄື່ອງນຸ່ງຫົ່ມ ແລະເກີບ (162 ຮອດ 189)

| ລາຍການ | ລະຫັດ |
|---|---|
| ເຄື່ອງນຸ່ງຫົ່ມ ແລະເກີບ | |
| ເຄື່ອງນຸ່ງຜູ້ຊາຍ | |
| ສົ້ງຢີນ | 162 |
| ສົ້ງຂາຍາວອື່ນໆ | 163 |
| ເສື້ອໃຫຍ່ | 164 |
| ເຄື່ອງກິລາ | 165 |
| ຊຸດແວັດ | 166 |
| ເສື້ອຢືດບໍ່ມີຄໍ | 167 |
| ເສື້ອມີຄໍ | 168 |
| ເຄື່ອງນຸ່ງຊອນໃນ | 169 |
| ເຄື່ອງນຸ່ງອື່ນໆ | 170 |
| ເຄື່ອງນຸ່ງຜູ້ຍິງ | |
| ສິ້ນລາວ | 171 |
| ສິ້ນອື່ນໆ | 172 |
| ຊຸດ ( ເສື້ອໃຫຍ່ນຸ່ງຄູ່ກັບສິ້ນ ແລະສົ້ງ ) | 173 |
| ເສື້ອນອກ | 174 |
| ເສື້ອຢືດບໍ່ມີຄໍ | 175 |
| ສົ້ງຢີນ | 176 |
| ສົ້ງອື່ນໆ | 177 |
| ອື່ນໆ | 178 |

| ລາຍການ | ລະຫັດ |
|---|---|
| ເຄື່ອງນຸ່ງສຳລັບເດັກ | |
| ສົ້ງຂາສັ້ນ | 179 |
| ສົ້ງຂາຍາວ | 180 |
| ສິ້ນ | 181 |
| ເສື້ອຢືດບໍ່ມີຄໍ | 182 |
| ເສື້ອມີຄໍ | 183 |
| ກະໂປງ,ສິ້ນ | 184 |
| ເສື້ອເດັກຍິງ | 185 |
| ອື່ນໆ | 186 |
| **ຄ່າຕັດເຄື່ອງ** | 187 |
| VI. ເຄື່ອງນຸ່ງຫົ່ມ,ຜ້າແພ ສຳລັບຕັດເຄື່ອງ | 188 |
| VII. ເກີບ, ຖົງຕີນ | 189 |

## ລະຫັດສຳລັບການ ຊື້ (ຈ່າຍ) ປະເພດເຄື່ອງໄຟຟ້າ, ນ້ຳປະປາ ແລະບຳລຸງຮັກສາເຮືອນ (190 ຮອດ 200)

| ລາຍການ | ລະຫັດ |
|---|---|
| ໄຟຟ້າ, ນ້ຳປະປາ ແລະການບຳລຸງຮັກສາເຮືອນ | |
| ຄ່າເຊົ່າເຮືອນ ຫລືຫ້ອງແຖວ ( ປະກອບເຄືອງເຟີນີເຈີ້ ຫລືບໍ່ປະກອບ ) | 190 |
| ວັດຖຸອຸປະກອນສຳລັບສ້ອມແປງເຮືອນ / ຮັກສາເຮືອນ | 191 |
| ຄ່າແຮງງານສຳລັບສ້ອມແປງ / ບົວລະບັດຮັກສາເຮືອນ | 192 |
| ຖ້າແຍກບໍ່ໄດ້ແມ່ນເອົາລວມທັງແຮງງານ ແລະວັດຖຸ | 193 |
| ຄ່ານ້ຳປະປາ | 194 |
| ຄ່າໄຟຟ້າ | 195 |

| ລາຍການ | ລະຫັດ |
|---|---|
| ນ້ຳມັນກາດ | 196 |
| ຖ່ານຫີນ | 197 |
| ຟືນດັງໄຟ ( ຊື້ເອົາ ) | 198 |
| ຟືນດັງໄຟ ( ຜະລິດເອງ ຫລືຫາເອົາເອງ ) | 199 |
| ອື່ນໆ | 200 |

# ລະຫັດສຳລັບການ ຊື້ (ຈ່າຍ) ປະເພດເຄື່ອງເຟີນີເຈີ, ເຄື່ອງຕົບແຕ່ງເຮືອນ (201 ຮອດ 262)

| ລາຍການ | ລະຫັດ |
|---|---|
| **ເຟີນີເຈີ, ເຄື່ອງຕົບແຕ່ງເຮືອນ ແລະການບຳລຸງຮັກສາ** | |
| **ເຟີນີເຈີ** | |
| ຕຽງ | 201 |
| ໂຕະ ແລະຕັ່ງໂຊຟາ | 202 |
| ຕູ້ໃສ່ຈອກ | 203 |
| ຊຸດໂຕະກິນອາຫານ | 204 |
| ຊຸດຊາລົງ | 205 |
| ໂຕະ ແລະຕູ້ໃສ່ຖ້ວຍຊາມໃນຫ້ອງກິນເຂົ້າ | 206 |
| ຕັ່ງມ້ານັ່ງ (ຕັ່ງຍາວ) | 207 |
| ອື່ນໆ | 208 |
| **ສ້ອມແປງເຄື່ອງເຟີນີເຈີ** | |
| ສ້ອມແປງເຄື່ອງເຟີນີເຈີ | 209 |
| **ສາດ, ຜ້າພົມປູພື້ນ ແລະຜ້າປູ** | |
| ສາດ, ຜ້າພົມປູພື້ນ ແລະຜ້າປູ | 210 |
| VIII. ປະເພດ ເຄື່ອງຖັກແສ່ວ | |
| ຜ້າປູບ່ອນ | 211 |
| ຜ້າຫົ່ມ | 212 |
| ຜ້າເຊັດໂຕ | 213 |
| ຜ້າກັ້ງ | 214 |
| ຜ້າປູໂຕະ, ຜ້າເຊັດມື / ຜ້າເຊັດປາກ | 215 |
| ຜ້າອື່ນໆ | 216 |
| ຄ່າສອ້ມແຊມຜ້າດັ່ງກ່າວ | 217 |
| **ເຄື່ອງຕົບແຕ່ງເຮືອນ, ພົມປູພື້ນ,ຜ້າປູພື້ນອື່ນໆ ແລະຄ່າສ້ອມແປງເຄື່ອງດັ່ງກ່າວ** | |
| ພົມປູພື້ນ | 218 |
| ກະຕ່າ, ຂອງເຂ່ຍຂີ້ຢາ, ກະຕ່າໃສ່ເສື້ອຜ້າທີ່ຈະຊັກ | 219 |
| ໂຖປູກດອກໄມ້, ເຕົ້າປູກຕົ້ນໄມ້ | 220 |
| ດອກໄມ້, ໂຖໃສ່ດອກໄມ້ | 221 |
| ຄ່າສ້ອມແປງເຄື່ອງໃຊ້ສອຍດັ່ງກ່າວ | 222 |
| ດອກໄຟ, ຮູບພາບ | 223 |
| ອື່ນໆ | 224 |
| **ປະເພດ ເຄື່ອງໃຊ້ໃນຄົວເຮືອນ** | |
| ຫມໍ້ຫນື້ງເຂົ້າ | 225 |
| ຫມໍ້ຫຸງເຂົ້າໄຟຟ້າ | 226 |
| ຫມໍ້ຕົ້ມນ້ຳໄຟຟ້າ | 227 |
| ແອບເຂົ້າ | 228 |
| ຄຸຕັກນ້ຳ | 229 |
| ເຕົາໄຟບໍ່ມີເຕົາອົບ ( ເຕົາແກັດ, ເຕົາໄຟຟ້າ,...... ) | 230 |
| ຕູ້ເຢັນ / ຕູ້ນ້ຳກ້ອນ | 231 |
| ເຕົາລີດ ( ໃຊ້ໄຟຟ້າ, ບໍ່ໃຊ້ໄຟຟ້າ ) | 232 |
| ແອເຢັນ | 233 |
| ພັດລົມ | 234 |
| ຈັກຫຍິບ | 235 |
| ຈັກຊັກຜ້າ | 236 |
| ອື່ນໆ ( ບອກແຈ້ງ ) | 237 |
| ຄ່າສ້ອມແປງເຄື່ອງດັ່ງກ່າວ | 238 |

| ລາຍການ | ລະຫັດ |
|---|---|
| **ເຄື່ອງທີ່ເຮັດດ້ວຍແກ້ວ ແລະເຄື່ອງໃຊ້ໃນຄົວເຮືອນຕ່າງໆ** | |
| ມີດ, ພ້າ ( ມີດ, ບ່ວງ, ສ້ອມ ແລະອື່ນໆ ) | 239 |
| ເຄື່ອງທີ່ເຮັດດ້ວຍແກ້ວ ( ຈອກແກ້ວ, ຖ້ວຍແກ້ວ ແລະອື່ນໆ ) | 240 |
| ຈານ ແລະຈອກ | 241 |
| ຊຸດດື່ມນ້ຳຊາ | 242 |
| ຊຸດກິນອາຫານ (ຕົວຢ່າງ ຖ້ວຍ,ບ່ວງ,ສ້ອມ.....) | 243 |
| ອື່ນໆ | 244 |
| **ເຄື່ອງມື ແລະອຸປະກອນການສ້ອມແປງສຳລັບຄົວເຮືອນແລະສວນຄົວ** | |
| ອຸປະກອນສຳຫລັບເຮັດສວນ | 245 |
| ເຄື່ອງມືແລະອຸປະກອນອື່ນໆ | 246 |
| **ກິດຈະກຳຕ່າງໆໃນຄົວເຮືອນ** | |
| ສ້ອມແປງເຄື່ອງຄົວກິນ | 247 |
| ດອກໄຟ, ຫລອດໄຟ | 248 |
| ທຽນໄຂ | 249 |
| ໄຟສາຍ | 250 |
| ໄມ້ຖູເຮືອນ ແລະແປງຖູ | 251 |
| ໄມ້ຂີດໄຟ | 252 |
| ເຂັມ ແລະເຂັມຂັດ | 253 |
| ສີສະແລກ ( ເຟີນີເຈີ, ພື້ນເຮືອນ, ໂລຫະ ) | 254 |
| ແປງຖູເກີບ ແລະສີລາພັດເກີບ | 255 |
| ສະບູກ້ອນຊັກເຄື່ອງ | 256 |
| ຖ່ານໄຟສາຍ ແລະຖ່ານວິທະຍຸ | 257 |
| ເຊົ່າເຄື່ອງເຟີນີເຈີ ແລະເຄື່ອງເຮືອນອື່ນໆ | 258 |
| ເຄື່ອງໃຊ້ອື່ນໆໃນຄົວເຮືອນ | 259 |
| **ຄ່າບໍລິການພາຍໃນ** | |
| ຈ່າຍຄ່າແຮງງານໃຫ້ຄົນໃຊ້ເປັນວັດຖຸ | 260 |
| ຈ່າຍຄ່າແຮງງານໃຫ້ຄົນໃຊ້ເປັນເງິນສົດ | 261 |
| ຄ່າບໍລິການອື່ນໆຂອງຄົວເຮືອນ | 262 |

## ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບການຮັກສາສຸຂະພາບ (263 ຮອດ 268)

| ລາຍການ | ລະຫັດ |
|---|---|
| **ການຮັກສາສຸຂະພາບ** | |
| ຢາຕ່າງໆ | 263 |
| ຄ່າອຸປະກອນການແພດ | 264 |
| ຈ່າຍຄ່າທຳນຽມ ແລະບໍລິການດ້ານການແພດ | 265 |
| ຄ່າໃຊ້ຈ່າຍໃນການເດີນທາງແລະການກິນຢູ່ ສຳລັບໄປປິ່ນປົວ | 266 |
| ຈ່າຍຄ່າປະກັນໄພດ້ານການຮັກສາສຸຂະພາບ | 267 |
| ອື່ນໆ | 268 |

## ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບດ້ານໂທລະຄົມມະນາຄົມ (269 ຮອດ 291)

| ລາຍການ | ລະຫັດ |
|---|---|
| **ຄົມມະນາຄົມຂົນສົ່ງ** | |
| **ການຊື້ພາຫະນະ** | |
| ລົດໃຫຍ່ ແລະລົດບັນທຸກ | 269 |
| ລົດຈັກ | 270 |
| ລົດຖີບ | 271 |
| ອື່ນໆ ( ບອກແຈ້ງ ) | 272 |
| **ກິດຈະກຳກ່ຽວກັບອຸປະກອນການຂົນສົ່ງຂອງສ່ວນບຸກຄົນ** | |
| ຢາງນອກ ແລະຢາງໃນ | 273 |
| ເຄື່ອງອາໄຫລ່ ແລະເຄື່ອງປະກອບລົດລວມທັງໝໍ້ໄຟ | 274 |
| ຄ່າສ້ອມແປງລົດ | 275 |
| ນ້ຳມັນກາຊ່ວນ | 276 |
| ນ້ຳມັນແອັດຊັງ | 277 |
| ນ້ຳມັນເຄື່ອງ ແລະນ້ຳມັນອື່ນໆ | 278 |
| ຄ່າບໍລິການລົດ | 279 |
| ຄ່າຕ່າງໆກ່ຽວກັບລົດ | 280 |

| ລາຍການ | ລະຫັດ |
|---|---|
| **ການໃຊ້ບໍລິການທາງດ້ານຄົມມະນາຄົມ** | |
| ຄ່າລົດເມ (ບໍ່ລວມຄ່າ ລົດໂຮງຮຽນ ) | 281 |
| ຄ່າ ຕັກຊີ ແລະຕຸກຕຸກ | 282 |
| ຄ່າເຮືອ | 283 |
| ຄ່າປີ້ຍົນ ພາຍໃນ | 284 |
| ຄ່າປີ້ຍົນ ໄປຕ່າງປະເທດ | 285 |
| ຄ່າຂົນສົ່ງສິນຄ້າ | 286 |
| ອື່ນໆ | 287 |
| **ໂທລະຄົມ ມະນາຄົມ** | |
| ຄ່າໄປສະນີ | 288 |
| ຄ່າໂທລະສັບ (ຕັ້ງໂຕະ ) | 289 |
| ຄ່າໂທລະສັບມືຖື | 290 |
| ໂທລະເລກ ແລະໂທລະສານ | 291 |

## ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບການພັກຜ່ອນຍ່ອນອາລົມ (292 ຮອດ 317)

| ລາຍການ | ລະຫັດ |
|---|---|
| **ການພັກພ່ອນຍ່ອນອາລົມ** | |
| **ເຄື່ອງຫລິ້ນ ແລະອາໄລ່ ລວມທັງການສ້ອມແປງເຄື່ອງຫລິ້ນ** | |
| ວິທະຍຸ ຫລື ເທັບ, ວີຊີດີ, ເຄື່ອງຫລິ້ນ ດີວີດີ | 292 |
| ໂທລະພາບ ເປັນຊຸດ | 293 |
| ຈານດາວທຽມ | 294 |
| ເຄື່ອງຫລິ້ນວີດີໂອ | 295 |
| ກ້ອງຖ່າຍຮູບ | 296 |
| ເຄື່ອງຫລິ້ນດົນຕີຣ | 297 |
| ວິທະຍຸສື່ສານ | 298 |
| ໂທລະສັບ ເປັນຊຸດ | 299 |
| ຄອມພິວເຕີ | 300 |
| ຄ່າສ້ອມແປງເຄື່ອງຫລິ້ນເຊັ່ນເທັບ, ຊີດີ, ວີຊີດີ, ດີວີດີ | 301 |
| ຟີມ ແລະການລ້າງຟີມ | 302 |
| ອຸປະກອນອື່ນໆ | 303 |
| ເຄື່ອງປະກອບ ແລະອາໄຫລ່ ຂອງເຄື່ອງຫລິ້ນດັ່ງກ່າວ | 304 |
| ການສ້ອມແປງເຄື່ອງຫລິ້ນດັ່ງກ່າວ | 305 |

| ລາຍການ | ລະຫັດ |
|---|---|
| **ຄ່າບໍລິການໃນການພັກຜ່ອນຍ່ອນອາລົມ** | |
| ຄ່າປີ້ຊົມຮູບເງົາ / ລະຄອນ | 306 |
| ຈ່າຍຄ່າສອນກິລາ ແລະອື່ນໆ | 307 |
| ຫວຍ | 308 |
| ຄ່າເຊົ່າມ້ວນວີດີໂອ | 309 |
| ສັດຕະວະແພດ ແລະການບໍລິການອື່ນສຳລັບລຽ້ງສັດ | 310 |
| ພິທີທາງສາດສະໜາ | 311 |
| ການໃຊ້ຈ່າຍໃນການພັກຜ່ອນ ແລະການເຄື່ອນໄຫວດ້ານວັດທະນະທຳອື່ນໆ | 312 |
| **ໜັງສືພິມ, ປື້ມອ່ານ ແລະເຄື່ອງຂຽນ** | |
| ປື້ມ | 313 |
| ວາລະສານ ແລະໜັງສືພິມ | 314 |
| ບິກ, ປາກກາ ແລະສໍດຳ | 315 |
| ເຄື່ອງຂຽນອື່ນໆ | 316 |
| IX. ການທ່ອງທ່ຽວ | |
| X. **ຄ່າໃຊ້ຈ່າຍໃນການທ່ອງທ່ຽວ** | 317 |

## ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບການສຶກສາ (318 ຮອດ 326)

| ລາຍການ | ລະຫັດ |
|---|---|
| **ການສຶກສາ** | |
| ຄ່າທຳນຽມໂຮງຮຽນ ( ບໍ່ລວມ ຄ່າອາຫານ, ເຄື່ອງດື່ມ ແລະທີ່ພັກ ) | 318 |
| ຄ່າຮຽນເພີ້ມ | 319 |
| ເຄື່ອງແບບນັກຮຽນ ( ນັບທັງເກີບ ) | 320 |
| ເຄື່ອງນຸ່ງຫລິ້ນກິລາຂອງນັກຮຽນ | 321 |
| ຈ່າຍຄ່າອຸປະກອນການຮຽນ | 322 |
| ຄ່າທຳນຽມຜ່ານແດນ | 323 |
| ການປະກອບສ່ວນໃຫ້ໂຮງຮຽນ ເປັນເງິນສົດ | 324 |
| ການປະກອບສ່ວນໃຫ້ໂຮງຮຽນ ເປັນວັດຖຸ | 325 |
| ການໃຊ້ຈ່າຍໃນການສຶກສາອື່ນໆ | 326 |

## ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບໂຮງແຮມ ແລະການກິນດື່ມ (327 ຮອດ 329)

| ລາຍການ | ລະຫັດ |
|---|---|
| **ຮ້ານອາຫານ ແລະໂຮງແຮມ** | |
| XI. ຮ້ານອາຫານ ແລະຮ້ານກິນດື່ມ | |
| ກິນອາຫານ ຫລືເຄື່ອງດື່ມຢູ່ໃນຮ້ານອາຫານ | 327 |
| ຊື້ອາຫານ ຫລືເຄື່ອງດື່ມມາຈາກຮ້ານອາຫານ | 328 |
| **ໂຮງແຮມ** | |
| ການໃຊ້ຈ່າຍໃນໂຮງແຮມ | 329 |

## ລະຫັດສຳລັບການ ຊື້ (ຈ່າຍ) ສຳຫລັບເຄື່ອງໃຊ້ສ່ວນຕົວ ແລະການບໍລິການ (330 ຮອດ 356)

| ລາຍການ | ລະຫັດ |
|---|---|
| **ເຄື່ອງໃຊ້ສ່ວນຕົວ ແລະການບໍລິການ** | |
| **ການບໍລິການສ່ວນຕົວ** | |
| ຄ່າຕັດຜົມ / ຄ່າເຮັດຜົມ | 330 |
| ຄ່າເສີມສວຍ , ອາບອົບນວດ ແລະອື່ນໆ | 331 |
| **ເຄື່ອງໃຊ້ສ່ວນຕົວ** | |
| ສະບູອາບນ້ຳ | 332 |
| ຢາສະຜົມ | 333 |
| ເຈ້ຍອານາໄມ | 334 |
| ຜ້າອ້ອມເດັກນ້ອຍ | 335 |
| ຄຣີມທາຜິວໜັງ | 336 |
| ຟອຍຖູແຂ້ວ | 337 |
| ຢາສີແຂ້ວ | 338 |
| ແປ້ງຫອມ | 339 |
| ເຄື່ອງໃຊ້ພາຍໃນຫ້ອງນ້ຳອື່ນໆ | 340 |

| ລາຍການ | ລະຫັດ |
|---|---|
| **ເຄື່ອງເອ້ສ່ວນຕົວ** | |
| ໂມງ | 341 |
| ເພັດ,ພອຍ,ແຫວນ ແລະວັດຖຸມີຄ່າ | 342 |
| ຈ່າຍຄ່ອມແປງເຄື່ອງດັ່ງກ່າວ | 343 |
| ເຄື່ອງໃຊ້ສຳລັບການທ່ອງທ່ຽວ | 344 |
| ຄັນຫົ່ມ | 345 |
| ເຄື່ອງໃຊ້ສ່ວນຕົວອື່ນໆ | 346 |
| **ການບໍລິການຂອງສະຖາບັນການເງິນ ແລະກົດຫມາຍຕ່າງໆ** | |
| ຄ່າທຳນຽມບໍລິການດ້ານກົດຫມາຍ ແລະຄ່າປັບໃໝເປັນເງິນສົດ | 347 |
| ຄ່າທຳນຽມບໍລິການດ້ານກົດຫມາຍ ແລະຄ່າປັບໃໝເປັນວັດຖຸ | 348 |
| ດອກເບ້ຍ | 349 |
| ບໍລິການຂອງສະຖາບັນການເງິນອື່ນໆ | 350 |
| **ການບໍລິການອື່ນໆ** | |
| ຄ່າທຳນຽມຂອງສະມາຊິກຂອງສະມາຄົມ | 351 |
| ຄ່າສີເຂົ້າ | 352 |
| ການປະກອບສ່ວນເຂົ້ານຳສາດສະໜາເປັນເງິນສົດ | 353 |
| ສົ່ງເງິນສົດໃຫ້ຄົນອື່ນທີ່ບໍ່ແມ່ນສະມາຊິກຂອງຄົວເຮືອນ | 354 |
| ອື່ນໆ ( ບອກແຈ້ງ ) | 356 |

## ວິທີຈົດກ່າຍແບບສອບຖາມສໍາລັບຄົວເຮືອນ.

- ໜ້າປົກ :

**ລະຫັດທີ່ຕັ້ງ** :

**ແຂວງ:** ໃຫ້ຂຽນຊື່ ແຂວງ ແລະໃສ່ລະຫັດຕາມບັນຊີທີ່ ສູນສະຖິຕິໄດ້ກໍານົດ ໃຫ້.

**ເມືອງ:** ໃຫ້ຂຽນຊື່ ເມືອງ ແລະໃສ່ລະຫັດຕາມບັນຊີທີ່ ສູນສະຖິຕິໄດ້ກໍານົດ ໃຫ້.

**ບ້ານ:** ໃຫ້ຂຽນຊື່ ບ້ານ ແລະໃສ່ລະຫັດຕາມບັນຊີທີ່ ສູນສະຖິຕິໄດ້ກໍານົດ ໃຫ້.

**ເລກທີ່ຄົວເຮືອນ:** ແມ່ນໝາຍເຖິງເລກທີ່ຄົວເຮືອນຕົວແທນຊຶ່ງນັກເດີນສໍາຫລວດໄດ້ຄັດເລືອກ ໂດຍໃຊ້ວິທີການເລືອກຕົວແທນ ຕາມການແນະນໍາຂອງ ສູນສະຖິຕິແຫ່ງຊາດ, ຕາມປົກກະຕິແລ້ວບ້ານໜຶ່ງຈະມີຄົວເຮືອນຕົວແທນບໍ່ກາຍ 15 ຄົວເຮືອນ, ສະນັ້ນ ເລກລໍາດັບຄົວເຮືອນຈະມີແຕ່ 01-15 ເທົ່ານັ້ນ.

**ເຂດສໍາຫລວດ:** ຈະມີ 3 ປະເພດເຂດສໍາຫລວດ, ເຂດຕົວເມືອງ ແລະຊົນນະບົດມີເສັ້ນທາງເຂົ້າເຖິງ ແລະຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ. ໃຫ້ຂຽນລະຫັດ 1 ຖ້າບ້ານນັ້ນແມ່ນເຂດ ຕົວເມືອງ, ຂຽນລະຫັດ 2 ຖ້າບ້ານນັ້ນແມ່ນບ້ານຊົນນະບົດ ມີເສັ້ນທາງເຂົ້າເຖິງ ແລະຂຽນລະຫັດ 3 ຖ້າບ້ານນັ້ນແມ່ນບ້ານຊົນນະບົດບໍ່ມີເສັ້ນທາງເຂົ້າເຖິງ. ການກໍານົດເຂດຕົວເມືອງ ຫລືເຂດຊົນນະບົດ ແມ່ນໃຫ້ອີງໃສ່ນິຍາມທີ່ ສູນສະຖິຕິແຫ່ງຊາດໄດ້ກໍານົດໃຫ້.

**ວັນທີ່ສໍາພາດ:** ໃຫ້ຂຽນວັນທີ່ ເລີ່ມຕົ້ນສໍາພາດເທື່ອທໍາອິດ.

**ເດືອນສໍາພາດ:** ໃຫ້ຂຽນເດືອນທີ່ທ່ານກໍາລັງປະຕິບັດການສໍາຫລວດຢູ່.

**ຊື່ຜູ້ຖືກສໍາພາດ:** ໃຫ້ຂຽນຊື່ຜູ້ທີ່ທ່ານສໍາພາດ, ຜູ້ທີ່ຖືກສໍາພາດຈະຕ້ອງແມ່ນຫົວໜ້າຄົວເຮືອນ ຫລືຜູ້ໃຫຍ່ທີ່ກໍາສະພາບຂອງຄົວເຮືອນໄດ້ ແລະສາມາດໃຫ້ຂໍ້ມູນຕ່າງໆ ກ່ຽວກັບຄົວເຮືອນໄດ້ຢ່າງຊັດເຈນ.

**ຊື່ນັກເດີນສໍາຫຼວດ:** ໃຫ້ຂຽນຊື່ຂອງທ່ານ ໃນນາມນັກເດີນສໍາຫລວດໃສ່ ໃນເວລາທ່ານສໍາພາດຄັ້ງທໍາອິດ.

ສໍາລັບຊື່ນັກກວດກາຢູ່ພາກສະໜາມ ແລະນັກກວດກາຢູ່ຫ້ອງການ, ນັກກວດກາຈະເປັນຜູ້ຂຽນໃສ່ເອງໃນເວລາເຂົາເຈົ້າກວດກາແບບສອບຖາມ.

## *ພາກທີ່ I: ສ່ວນປະກອບຂອງຄົວເຮືອນ.*

ພາກທີ່ 1 ນີ້ ປະກອບມີ 8 ຄຳຖາມ (ບໍ່ລວມເອົາເລກລຳດັບຂອງຄົວເຮືອນ) ເນື້ອໃນແຕ່ລະຄຳຖາມປະກອບມີດັ່ງນີ້ :

**ເລກລຳດັບ:** ໃຫ້ຂຽນເລກລຳດັບຂອງສະມາຊິກທີ່ຢູ່ເປັນປົກກະຕິໃນຄົວເຮືອນ 1, 2, 3, ... ເລກດັ່ງກ່າວ ແມ່ນໃຫ້ຖືວ່າແມ່ນເລກປະຈຳຕົວຂອງແຕ່ລະສະມາຊິກໃນຄົວເຮືອນນີ້ ຊຶ່ງ ຈະນຳໃຊ້ເຂົ້າໃນບາງຄຳຖາມ ທີ່ຖາມເຖິງແຕ່ລະຄົນ.

*ສະມາຊິກໃນຄົວເຮືອນ ໝາຍເຖິງທຸກຄົນທີ່ດຳລົງຊີວິດເປັນປະຈຳໃນຄົວເຮືອນນີ້ ຈົນຮອດ ມື້ສຳຫລວດ. ປຶ້ມສຳມະໂນຄົວຈະເປັນບ່ອນອີງທີ່ດີອັນນຶ່ງ. ສະນັ້ນ ນັກເດີນສຳຫລວດຕ້ອງຂໍເບິ່ງປຶ້ມສຳມະໂນຄົວຂອງຄົວເຮືອນນີ້ກ່ອນ ຈຶ່ງກຳນົດໄດ້ວ່າຈະມີຈັກຄົນໃນຄົວເຮືອນນີ້.*

**ຄຳຖາມ 1:** ຂຽນລາຍຊື່ສະມາຊິກທີ່ຢູ່ເປັນປົກກະຕິໃນຄົວເຮືອນ, ການຂຽນຊື່ແມ່ນໃຫ້ເລີ້ມຕົ້ນດ້ວຍຫົວໜ້າຄົວເຮືອນກ່ອນ ຫລັງຈາກນັ້ນໃຫ້ຂຽນຊື່ເມຍ/ຜົວ ຂອງຫົວໜ້າຄົວເຮືອນ, ຖັດມາໃຫ້ຂຽນຊື່ຜູ້ທີ່ມີອາຍຸຫລາຍກ່ອນ ແລະອາຍຸນ້ອຍລົງມາຕາມລຳດັບຕໍ່ໆໄປ. ໃນການຂຽນຊື່ແຕ່ລະຄົນ ແມ່ນໃຫ້ຂຽນທ້າວ ຫລືນາງໃສ່ທາງໜ້າຂອງຊື່ ເພື່ອເປັນການຢັ້ງຢືນ ວ່າຜູ້ນັ້ນ ແມ່ນເພດຍິງ ຫລືເພດຊາຍ ແລະ **<u>ໃຫ້ກວດໃສ່ກັບຄຳຖາມທີ່ 3 ຂອງພາກນີ້.</u>**

**ຄຳຖາມ 2:** ທ່ານມີສາຍພົວພັນແນວໃດກັບຫົວໜ້າຄົວເຮືອນ ?
ໃຫ້ທ່ານຂຽນລະຫັດຂອງສະມາຊິກແຕ່ລະຄົນທີ່ມີສາຍພົວພັນກັບຫົວໜ້າຄົວເຮືອນ ຊຶ່ງມີຄຳຕອບໄວ້ໃຫ້ທ່ານເລືອກຕາມຄວາມເໝາະສົມ. ລະຫັດດັ່ງກ່າວ ແມ່ນໄດ້ກຳນົດ ໄວ້ໃນໃບສອບຖາມແລ້ວ.

**ຄຳຖາມ 3:** ເພດ ? ໝາຍເຖິງ ເພດຂອງຜູ້ທີ່ຖືກຖາມເຖິງ ວ່າເປັນເພດຊາຍ ຫລືຍິງ ໃຫ້ກວດໃສ່ກັບຄຳຖາມທີ່ 1 ເພື່ອເບິ່ງວ່າຜູ້ນັ້ນແມ່ນຂຽນ "ທ້າວ" ຫລື "ນາງ". **<u>ໃຫ້ກວດຄືນໃສ່ ຄຳຖາມທີ່ 1</u>**

**ຄຳຖາມ 4:** ທ່ານ ເກີດເມື່ອ ວັນທີ ເດືອນ ແລະປີໃດ ?
ໃຫ້ຂຽນວັນທີ, ເດືອນ, ປີ ເກີດ ທີ່ແທ້ຈິງໃສ່, ຖ້າບໍ່ຈື່ ຫລືບໍ່ຮູ້ ນັກເດີນສຳຫລວດຕ້ອງໃຊ້ຄວາມພະຍາຍາມເພື່ອເຮັດແນວໃດໃຫ້ຮູ້ ເດືອນ ແລະປີເກີດ ຂອງແຕ່ລະຄົນຢູ່ໃນຄົວເຮືອນ. ວິທີການ:

1. ໃຫ້ທຽບໄລຍະຫ່າງອາຍຸຂອງອ້າຍ ຫລືເອື້ອຍ ໃສ່ລາວ
2. ທຽບໃສ່ຄົນລຸນດຽວໃນບ້ານນັ້ນ
3. ທຽບໃສ່ປີຂອງລາວ (ຊວດ, ສະລຸ...) **<u>ເບິ່ງຕາຕະລາງຊ້ອນທ້າຍຂອງປຶ້ມຄູ່ມືນີ້.</u>**
4. ທຽບໃສ່ເຫດການ ຫລືປະກົດການສຳຄັນທີ່ເກີດຂື້ນ ເຊັ່ນ: ນ້ຳຖ້ວມ, ສັດຕາຍຫລາຍ ຫລືເຫດການອື່ນໆ

**ຄຳຖາມ 5:** ປັດຈຸບັນທ່ານອາຍຸໄດ້ຈັກປີ? ຄຳຖາມນີ້ ແມ່ນໃຫ້ຄິດໄລ່ອາຍຸເຕັມຂອງຜູ້ກ່ຽວດັ່ງນີ້ :

1. ເອົາວັນເດືອນປີສຳພາດ ລົບ ໃຫ້ວັນເດືອນປີເກີດ.

ຕົວຢ່າງ : ລາວເກີດເມື່ອວັນທີ 10/3/1985 ແລະນັກເດີນສຳຫລວດໄປສຳພາດລາວໃນວັນທີ 15/5/2007 ຖາມວ່າອາຍຸເຕັມລາວ ແມ່ນຈັກປີ ?

| | | |
|---|---|---|
| 15 | 5 | 2007 |
| 10 | 3 | 1985 |
| 05 | 10 | 22 |

ເຫັນວ່າຜູ້ນີ້ ມີອາຍຸ 22 ປີ 10 ເດືອນ ກັບ 5 ວັນ ສ່ວນອາຍຸເຕັມລາວ ແມ່ນ 22 ປີ.

2. ຖ້າອາຍຸຕ່ຳກວ່າ 1 ປີ ໃຫ້ຂຽນ "0"

**ຄຳຖາມ 6:** ສະພາບສົມລົດ ? ໃຫ້ຖາມສະເພາະຄົນທີ່ມີອາຍຸ 15 ປີຂື້ນໄປ, ໃນຊ່ອງນີ້ມີ 4 ຄຳຕອບໃຫ້ເລືອກ, ໃຫ້ຂຽນ "1" ສຳລັບຜູ້ທີ່ບໍ່ເຄີຍແຕ່ງງານ, ໃຫ້ຂຽນລະຫັດ "2" ສຳລັບຜູ້ທີ່ແຕ່ງງານ, ໃຫ້ຂຽນລະຫັດ "3" ສຳລັບຜູ້ທີ່ຢ່າຮ້າງ ແລະໃຫ້ຂຽນລະຫັດ "4" ສຳລັບຜູ້ທີ່ເປັນໝ້າຍ.

ຄຳຖາມ 7: ທ່ານແມ່ນຊົນເຜົ່າໃດ ? ໃຫ້ບັນທຶກລະຫັດຊົນເຜົ່າ ໂດຍອີງໃສ່ບັນຊີຊົນເຜົ່າທີ່ ສູນສະຖິຕິແຫ່ງຊາດມີໃຫ້. ບັນຊີນີ້ ແມ່ນໄດ້ຮັບການຮັບຮອງຈາກ ສູນກາງແນວລາວສ້າງຊາດແລ້ວ. ບັນຊີລາຍຊື່ເຜົ່າແມ່ນໄດ້ຄັດຕິດໃນໃບສອບຖາມ ແລະ**<u>ຢູ່ໃນເອກກະສານຊ້ອນທ້າຍຂອງປື້ມຄູ່ມືນີ້ ເພື່ອກວດເບິ່ງວ່າຜູ້ກ່ຽວໄດ້ຕອບຊື່ຊົນເຜົ່າສ່ວນນ້ອຍ ທີ່ຂື້ນກັບກຸ່ມເຜົ່າໃດແທ້ກ່ອນຈະຈົດເຂົ້າໃບສອບຖາມ.</u>**

## *ພາກທີ່ II: ພໍ່/ແມ່.*

**ເລກລຳດັບ:** ໃຫ້ຂຽນເລກລຳດັບຂອງສະມາຊິກທີ່ຢູ່ເປັນປົກກະຕິໃນຄົວເຮືອນ 1, 2, 3, ... ເລກດັ່ງກ່າວ ແມ່ນໃຫ້ຖືວ່າແມ່ນເລກປະຈຳຕົວຂອງແຕ່ລະສະມາຊິກໃນຄົວເຮືອນນີ້ ຊຶ່ງ ຈະໄດ້ນຳໃຊ້ເຂົ້າໃນບາງຄຳຖາມທີ່ຖາມເຖິງແຕ່ລະຄົນ.

**ຄຳຖາມ 1:** ມີພໍ່ຄີງຂອງທ່ານອາໃສຢູ່ໃນຄົວເຮືອນນີ້ບໍ່ ? ພໍ່ຄີງແມ່ນໝາຍເຖິງພໍ່ທີ່ສ້າງຕົນມາ ບໍ່ແມ່ນບໍ່ພໍ່ລ້ຽງຫລືພໍ່ນ້າ.

1. ໃຫ້ບັນທຶກລະຫັດ "1" ຖ້າມີພໍ່ຄີງອາໃສຢູ່ໃນຄົວເຮືອນ ແລ້ວຖາມຕໍ່ຄຳຖາມ 2,
2. ໃຫ້ບັນທຶກລະຫັດ "2" ຖ້າພໍ່ຄີງບໍ່ໄດ້ອາໃສຢູ່ໃນຄົວເຮືອນນີ້ ແລ້ວຂ້າມໄປຫາ ຄຳຖາມ 3.

**ຄຳຖາມ 2:** ເລກທີ່ພໍ່ຄີງ ? ໝາຍເຖິງເລກປະຈຳຕົວ (ເລກລຳດັບໃນພາກ I) ໃຫ້ບັນທຶກເລກທີ່ພໍ່ ແລ້ວຂ້າມໄປຫາຊ່ອງ 4.

**ຄຳຖາມ 3:** ພໍ່ຄີງຂອງທ່ານຍັງມີຊີວິດຢູ່ບໍ່ ? ໃຫ້ກວດເບິ່ງຄວາມສອດຄ່ອງຖ້າຄຳຖາມ "1" ມີຄຳຕອບເປັນ "2" ໝາຍວ່າ ຄຳຖາມນີ້ຕ້ອງມີຄຳຕອບ

1. ໃຫ້ບັນທຶກລະຫັດ "1" ຖ້າພໍ່ຄີງຍັງມີຊີວິດຢູ່,
2. ໃຫ້ບັນທຶກ "2" ຖ້າພໍ່ຄີງຕາຍແລ້ວ.

**ຄຳຖາມ 4:** ພໍ່ຄີງຂອງທ່ານເຄີຍເຂົ້າໂຮງຮຽນບໍ່ ? ຄຳຖາມນີ້ ແມ່ນຖາມເຖີງພໍ່ທຸກຄົນ ບໍ່ວ່າເພິ່ນໄດ້ເສຍຊີວິດແລ້ວ ຫລືຍັງມີຊີວິດຢູ່ກໍ່ຕາມ. ແຕ່ເພື່ອຄວາມສຸພາບ ແລະບໍ່ແຕະຕ້ອງເຖີງຮີດຄອງປະເພນີຂອງເຂົາເຈົ້າ, ໃນກໍລະນີພໍ່ເຂົາເຈົ້າເສຍຊີວິແລ້ວນັ້ນ, ນັກເດີນສຳຫລວດຕ້ອງໄດ້ຂໍອາໄພໂທດນຳເຂົາເຈົ້າເສຍກ່ອນ ຖ້າບໍ່ມີບັນຫາຫຍັງ ແລະຄົວເຮືອນກໍ່ຈີງໃຈຕອບ ກໍສືບຕໍ່ຖາມ. ຖ້າກົງກັນຂ້າມກັນ ນັກເດີນສຳຫລວດກໍ່ບໍ່ຄວນຖາມຕໍ່ ແຕ່ບັນທຶກໄວ້ໃນບົດລາຍງານຂອງຕົນຄັກແນ່. ຂໍ້ມູນນີ້ ມີຄວາມສຳຄັນຫລາຍສຳຫລັບການປະເມີນ ແລະວິໃຈທີ່ກ່ຽວພັນກັບຄວາມທຸກຍາກຂອງປະຊາຊົນ.

**ຄຳຖາມ 5:** ພໍ່ຄີງຂອງທ່ານຮຽນຈົບຊັ້ນໃດ ແລະຫ້ອງໃດ ?
ໃຫ້ບັນທຶກຊັ້ນ ແລະຫ້ອງທີ່ຮຽນຈົບສົມບູນ. ***ຕົວຢ່າງ:*** ລາວຮຽນຈົບຫ້ອງ ມໍ 3, ໃຫ້ບັນທຶກລະຫັດ "2" ໃສ່ຫ້ອງ"ຊັ້ນ" ແລະໃຫ້ບັນທຶກລະຫັດ "3" ໃສ່ຫ້ອງ "ຫ້ອງ".

**ຄຳຖາມ 6:** ມີແມ່ຄີງຂອງທ່ານອາໃສຢູ່ໃນຄົວເຮືອນນີ້ບໍ່ ? ແມ່ຄີງໝາຍເຖີງແມ່ ທີ່ເກີດເຮົາອອກມາ, ບໍ່ແມ່ນແມ່ນ້າ ຫລືແມ່ລ້ຽງ.

1. ໃຫ້ບັນທຶກລະຫັດ "1" ຖ້າມີແມ່ຄີງອາໃສຢູ່ໃນຄົວເຮືອນ,
2. ໃຫ້ບັນທຶກລະຫັດ "2" ຖ້າແມ່ຄີງບໍ່ໄດ້ອາໃສຢູ່ໃນຄົວເຮືອນນີ້ ແລະຂ້າມໄປຫາ ຄຳຖາມ 8.

**ຄຳຖາມ 7:** ເລກທີ່ແມ່ຄີງ ?
ໃຫ້ບັນທຶກເລກທີ່ແມ່ຄີງໂດຍໃຫ້ເບີ່ງເລກລຳດັບຢູ່ ***ພາກ I*** ແລ້ວຂ້າມໄປຫາຄຳຖາມທີ່ 9.

**ຄຳຖາມ 8:** ແມ່ຄີງຂອງທ່ານຍັງມີຊີວິດຢູ່ບໍ່ ? ໃຫ້ກວດເບີ່ງຄວາມສອດຄ່ອງຖ້າຄຳຖາມທີ 6 ມີຄຳຕອບເປັນ "2" ໝາຍວ່າ ຄຳຖາມນີ້ຕ້ອງມີຄຳຕອບ

1. ໃຫ້ບັນທຶກລະຫັດ "1" ຖ້າແມ່ຄີງຍັງມີຊີວິດຢູ່,
2. ໃຫ້ບັນທຶກ "2" ຖ້າແມ່ຄີງຕາຍແລ້ວ.

ສຳຫລັບ **ຄຳຖາມ 9 ແລະ ຄຳຖາມ 10:** ແມ່ນໃຫ້ຖາມແບບດຽວກັນກັບຄຳຖາມ 4 ແລະຄຳຖາມ 5 ຂອງພໍ່.

## *ພາກທີ່ III : ການສຶກສາ ( ສຳພາດຄັ້ງທຳອິດ ) ສຳລັບຄົນທີ່ມີອາຍຸ 6 ປີ ຂຶ້ນໄປ.*

**ເລກລຳດັບ :** ໃຫ້ຂຽນເລກລຳດັບຂອງສະມາຊິກທີ່ຢູ່ເປັນປົກກະຕິໃນຄົວເຮືອນ 1, 2, 3... ແລ້ວຖາມໄປເທື່ອລະຄົນ. ນັກເດີນສຳຫລວດຕ້ອງເອົາໃຈໃສ່ຖາມໄປແຕ່ລະຄົນສຳຫລັບຜູ້ໃຫ່ຍ.

**ຄຳຖາມ 1:** ທ່ານ (ຊື່) ສາມາດອ່ານໜັງສືໄດ້ບໍ່ ? ຄຳຖາມນີ້ ແມ່ນຍາກຖາມຜູ້ຕອບນັ້ນ ອ່ານໜັງສືລາວໄດ້ ບໍ່, ນັກເດີນສຳຫລວດອາດເອົາ ເອກະສານ ຫລືປື້ມຄູ່ມືຂອງທ່ານນັ້ນ ໃຫ້ລາວ ອ່ານໃຫ້ຟັງ ເພື່ອພິຈາລະນາ ວ່າລາວສາມາດອ່ານໄດ້ດີ ຫລືຍັງອ່ານໄດ້ຍາກຢູ່.

**ຄຳຖາມ 2:** ທ່ານສາມາດຂຽນໜັງສືໄດ້ບໍ່ ? ຄຳຖາມນີ້ ກໍ່ເຊັ່ນກັນ ໃຫ້ຜູ້ຕອບລອງຂຽນໜັງສືລາວ ໃຫ້ເບີ່ງຈັກປະໂຍກນື່ງ ເຊັ່ນ : "ຂ້າພະເຈົ້າມີລູກຫລາຍຄົນ, ແຕ່ລະຄົນກຳລັງຮຽນໜັງສື"

**ຄຳຖາມ 3:** ທ່ານເຄີຍເຂົ້າໂຮງຮຽນບໍ່ ? ໝາຍເຖິງ ໃນຊ່ວງໄລຍະໃດນື່ງຂອງຊີວິດລາວ ໄດ້ໄປລົງທະບຽນເຂົ້າໂຮງຮຽນ ແລະໄດ້ຮຽນໜັງສື. ເຂົ້າໂຮງຮຽນ ໝາຍເຖິງໂຮງຮຽນ ທີ່ໄດ້ມີການຮຽນ ແລະສອນເປັນພາສາລາວ. ສ່ວນການເຂົ້າໂຮງຮຽນທີ່ເປັນພາສາຕ່າງປະເທດ ແລະບໍ່ຢູ່ເມືອງລາວ ແມ່ນບໍ່ຖືວ່າ ໄດ້ເຂົ້າໂຮງຮຽນ.

**ຄຳຖາມ 4:** ເພາະຫຍັງທ່ານບໍ່ເຄີຍເຂົ້າໂຮງຮຽນ ? ໃນຊ່ອງນີ້ມີ 9 ຄຳຕອບໃຫ້ທ່ານເລືອກ, ໃຫ້ທ່ານເລືອກເອົາຄຳຕອບທີ່ເໝາະສົມ ແລະເປັນສາຍເຫດຕົ້ນຕໍທີ່ບໍ່ໄດ້ເຂົ້າໂຮງຮຽນ ແລະຫລັງຈາກນັ້ນໃຫ້ຂ້າມໄປຫາບຸກ ຄົນຕໍ່ໄປ.

**ຄຳຖາມ 5:** ກ່ອນເຂົ້າຮຽນປະຖົມທ່ານໄດ້ເຂົ້າຮຽນອະນຸບານກ່ອນບໍ່ ? ໃຫ້ບັນທຶກລະຫັດ "1" ຖ້າໄດ້ເຂົ້າຮຽນອະນຸບານກ່ອນ ແລະໃຫ້ບັນທຶກລະຫັດ "2" ຖ້າບໍ່ໄດ້ເຂົ້າຮຽນອະນຸບານກ່ອນ.

**ຄຳຖາມ 6:** ປະຈຸບັນນີ້ ທ່ານຍັງເຂົ້າໂຮງຮຽນບໍ່ ? ໝາຍວ່າ ລາວກຳລັງຮຽນຢູ່ ຫລືລາວກຳລັງພັກພາກຮຽນກໍ່ໃຫ້ຖືວ່າຍັງເຂົ້າໂຮງຮຽນ.

**ຄຳຖາມ 7 :** ທ່ານ (ຊື່..) ກຳລັງ ຫລືໄດ້ຮຽນຢູ່ລະດັບ ແລະຊັ້ນໃດໃນສົກຮຽນນີ້ ຫລືສົກປີຜ່ານມາ ?

**ຄຳຖາມ 8 :** ໂຮງຮຽນທີ່ທ່ານ (ຊື່..) ໄດ້ເຂົ້າຄັ້ງລ້າສຸດ ແມ່ນໂຮງຮຽນປະເພດໃດ ?

**ຄຳຖາມ 9 :** ຄຳຖາມນີ້ ແມ່ນຖາມແຕ່ຜູ້ທີ່ມີອາຍຸ 6 ຫາ 11 ປີ ເທົ່ານັ້ນ, ຖ້າອາຍຸ 12 ປີ ຂື້ນໄປ ແມ່ນໃຫ້ຂ້າມໄປຖາມຄຳຖາມທີ 10 ເລີຍ. ຄຳຖາມນີ້ ແມ່ນຖາມເຖິງສາຍເຫດຂອງເດັກ ເປັນຫຍັງຈື່ງບໍ່ໄປເຂົ້າໂຮງຮຽນ. ຈະຊ່ວຍໃຫ້ເຮົາຮູ້ເຫດຜົນໄດ້.

**ຄຳຖາມ 10 :** ປີໃດທ່ານ (ຊື່..) ໄດ້ເລີ້ມເຂົ້າຮຽນຊັ້ນ ປໍ 1. ກໍລະນີເດັກຢູ່ ປໍ 1 ຫລາຍປີ ແມ່ນໃຫ້ນັບເອົາປີທຳອິດ.

**ຄຳຖາມ 11:** ທ່ານຮຽນ (ຊື່..) ຈົບຊັ້ນ ແລະຫ້ອງໃດ ສູງສຸດໃນຊີວິດຂອງທ່ານ ?

**ຄຳຖາມ 12 :** ທ່ານ (ຊື່..) ຮຽນຈົບຊັ້ນປະຖົມແລ້ວເປັນຫຍັງບໍ່ຮຽນຕໍ່ ?

**ຄຳຖາມ 14:** ໃນສົກຮຽນ ຜ່ານມາ ຄົວເຮືອນຂອງທ່ານໃຊ້ຈ່າຍເຂົ້າໃນການສຶກສາຫຼາຍປານໃດ ?

<u>ໃນຊ່ອງນີ້ຈະມີ 8 ຊ່ອງຍ່ອຍ, ໃຫ້ທ່ານບັນທຶກຄ່າໃຊ້ຈ່າຍສຳລັບການສຶກສາໃນໄລຍະ ສົກຮຽນຜ່ານມາ ຂອງສະມາຊິກແຕ່ລະຄົນໃນຄົວເຮືອນຕາມແຕ່ລະຊ່ອງຍ່ອຍ (ຊ່ອງ a-g), ສຳລັບຊ່ອງ h ແມ່ນຜົນລວມແຕ່ຊ່ອງ a-g.</u> ກໍລະນີ ຜູ້ປົກຄອງບໍ່ສາມາດແຍກອອກເປັນແຕ່ລະລາຍການໄດ້ ກໍ່ໃຫ້ຈົດເຂົ້າ ໃນຂໍ້ h ຄ່າໃຊ້ຈ່າຍທັງໝົດເລີຍ. ການໃຊ້ຈ່າຍນີ້ ໃຫ້ປະເມີນມູນຄ່າທີ່ຄົວເຮືອນຈ່າຍເປັນວັດຖຸອອກເປັນກີບນຳ ເຊັ່ນວ່າ ຄົວເຮືອນຈ່າຍເປັນເຂົ້າສານໃຫ້ຜູ້ກ່ຽວເອົາໄປກິນຢູ່ໂຮງຮຽນ ແລະອື່ນໆ.

**ຄຳຖາມ 15:** ມີໃຜບໍ່ ? ທີ່ບໍ່ແມ່ນສະມາຊິກໃນຄົວເຮືອນ ໄດ້ຈ່າຍຄ່າການສຶກສາໃຫ່ທ່ານ (ຊື່..) ໃນໄລຍະ 12 ເດືອນ ຜ່ານມາ ?

ໃຫ້ບັນທຶກລະຫັດ "1" ຖ້າມີ ແລະໃຫ້ບັນທຶກລະຫັດ "2" ຖ້າບໍ່ມີ ແລ້ວໃຫ້ຂ້າມໄປຫາ ຊ່ອງ 17

**ຄຳຖາມ 16:** ບຸກຄົນດັ່ງກ່າວເຖິງໃນຄຳຖາມ 15 ນັ້ນ, ໄດ້ຈ່າຍຄ່າການສຶກສາໃຫ່ທ່ານ (ຊື່..) ຫລາຍປານໃດໃນໄລຍະ 12 ເດືອນ ຜ່ານມາ ?

**ຄຳຖາມ 17:** ໄລຍະທາງຈາກບ້ານຂອງທ່ານໄປຫາໂຮງຮຽນ ຈັກກິໂລແມັດ ?

ໃຫ້ບັນທຶກໄລຍະທາງຈາກບ້ານໄປຫາໂຮງຮຽນເປັນ ກິໂລແມັດ, ຖ້າໄລຍະທາງບໍ່ເຖິງ 1 ກິໂລແມັດ ໃຫ້ບັນທຶກ “0”

**ຄຳຖາມ 18:** ທ່ານໃຊ້ເວລາດົນປານໃດ ເພື່ອໄປເຖິງໂຮງຮຽນຂອງທ່ານ ?

ໃຫ້ບັນທຶກເວລາທີ່ໃຊ້ໃນການເດີນທາງຈາກບ້ານໄປເຖິງໂຮງຮຽນ ຈັກຊົ່ວໂມງ ແລະຈັກນາທີ, ຕົວຢ່າງ: 1 ຊົ່ວໂມງ ກັບ 15 ນາທີ ໃຫ້ຂຽນ 1 ໃສ່ຊ່ອງຊົ່ວໂມງ ແລະຂຽນ 15 ໃສ່ຊ່ອງນາທີ.

**<u>ກໍລະນີໃຊ້ເວລາພຽງແຕ່ 30 ນາທີ ໃຫ້ຂຽນ 0 ໃສ່ຊ່ອງຊົ່ວໂມງ ແລະຂຽນ 30 ໃສ່ຊ່ອງນາທີ.</u>**

**ຄຳຖາມ 19:** ທ່ານໄປໂຮງຮຽນດ້ວຍຫຍັງ ?

ໃນຊ່ອງນີ້ມີ 9 ຄຳຕອບໃຫ້ເລືອກ, ໃນກໍລະນີ ມີບາງຄົນອາດໄປໂຮງຮຽນດ້ວຍຫລາຍວິທີ, ໃຫ້ເລືອກເອົາວິທີ ທີ່ລາວໃຊ້ເດີນທາງໄປໂຮງຮຽນຫລາຍກວ່າໝູ່.

**ຄຳຖາມ 20:** ທ່ານມີປຶ້ມແບບຮຽນຄົບຊຸດບໍ່ເພື່ອໃຊ້ໃນການຮຽນຂອງທ່ານ ? ປຶ້ມແບບຮຽນ ແມ່ນໝາຍເຖິງ ປຶ້ມອ່ານ, ປຶ້ມສອນ ແລະຄູ່ມືການຮຽນເຕັກນິກຕ່າງໆ..

ໃນຊ່ອງນີ້ມີ 3 ຄຳຕອບໃຫ້ເລືອກ, ໃຫ້ບັນທຶກລະຫັດ “1” ຖ້າມີປຶ້ມແບບຮຽນຄົບຊຸດ ໃຫ້ບັນທຶກລະຫັດ “2” ຖ້າມີປຶ້ມແບບຮຽນບໍ່ຄົບຊຸດ ແລະໃຫ້ບັນທຶກ “3” ຖ້າບໍ່ມີປຶ້ມແບບຮຽນ.

**ຄຳຖາມ 21:** ທ່ານມີປຶ້ມແບບຮຽນຮ່ວມກັບຄົນອື່ນບໍ່ ຫລືທ່ານໃຊ້ພຽງແຕ່ຄົນດຽວ ?

ໃຫ້ບັນທຶກລະຫັດ “1” ຖ້າໃຊ້ປຶ້ມແບບຮຽນພຽງແຕ່ຄົນດຽວ ແລະໃຫ້ບັນທຶກລະຫັດ “2” ຖ້າໃຊ້ປຶ້ມແບບຮຽນຮ່ວມກັບຄົນອື່ນ. ໃຫ້ບັນທຶກລະຫັດ “3” ຖ້າບບໍ່ໄດ້ໃຊ້ປຶ້ມແບບຮຽນ.

**ຄຳຖາມ 22:** ໃນອາທິດໜຶ່ງທ່ານເຮັດວຽກບ້ານຈັກຊົ່ວໂມງ ?

ວຽກບ້ານແມ່ນໝາຍເຖິງ ບົດຝຶກຫັດ ຫລືວຽກອື່ນໆ ທີ່ກ່ຽວກັບການສຶກສາ, ບໍ່ແມ່ນວຽກທີ່ກ່ຽວກັບຄົວເຮືອນ. ໃຫ້ບັນທຶກຈຳນວນຊົ່ວໂມງທັງໝົດ ທີ່ໄດ້ເຮັດວຽກບ້ານ ໃນອາທິດໜຶ່ງ.

**ຄຳຖາມ 23:** ປັດຈຸບັນທ່ານ (ຊື່..) ເຂົ້າໂຮງຮຽນຢູ່ບໍ່ ?

ໃຫ້ບັນທຶກລະຫັດ “1” ຖ້າປັດຈຸບັນຍັງເຂົ້າໂຮງຮຽນຢູ່ ແລະໃຫ້ບັນທຶກລະຫັດ “2” ຖ້າປັດຈຸບັນບໍ່ໄດ້ເຂົ້າໂຮງຮຽນ ແລ້ວໃຫ້ໄປຫາຄົນຕໍ່ໄປ.

**ຄຳຖາມ 24:** ໃນ 7 ມື້ ຜ່ານມາ ໂຮງຮຽນຂອງທ່ານ (ຊື່..) ເປີດຮຽນຈັກມື້ ?

ໃຫ້ບັນທຶກຈຳນວນມື້ ທີ່ໂຮງຮຽນໄດ້ເປີດຮຽນ, ຖ້າໃນ 7 ມື້ ຜ່ານມາ ໂຮງຮຽນບໍ່ໄດ້ເປີດຮຽນ ແມ່ນໃຫ້ບັນທຶກ “0” ແລ້ວໃຫ້ຂ້າມໄປຫາຄົນຕໍ່ໄປ.

**ຄຳຖາມ 25:** ໃນ 7 ມື້ ຜ່ານມາ ທ່ານ (ຊື່..) ໄປໂຮງຮຽນຈັກມື້ ?

ໃຫ້ບັນທຶກຈຳນວນມື້ ທີ່ໄດ້ໄປໂຮງຮຽນຕົວຈິງໃນ 7 ມື້ ຜ່ານມາ.

**ຄຳຖາມ 26:** ຖ້າໃນ 7 ມື້ ຜ່ານມາ ທ່ານ (ຊື່..) ໄດ້ຂາດຮຽນແມ່ນຍ້ອນເຫດຜົນຫຍັງ ?

## *ພາກທີ່ IV: ແຮງງານ ( ສຳພາດອາທິດທຳອິດ ).*

### *IV:1. ແຮງງານໃນໄລຍະ 7 ມື້ ຜ່ານມາ.*

ໃຫ້ຂຽນຄືນຊື່ຂອງຜູ້ທີ່ມີອາຍຸ 10 ປີ ຂື້ນໄປໃສ່ຊ່ອງນີ້ ຕາມເລກລຳດັບຂອງສະມາຊິກທີ່ຢູ່ໃນພາກທີ່ 1.

**<u>* ເຮັດວຽກໃຫ້ຕົນເອງ ຫລືນາຍຈ້າງ :</u>**
- ເຮັດນາ/ໄຮ່, ສວນ...ຂອງຕົນເອງ
- ລ້ຽງສັດ ຂອງຕົນເອງ
- ລ້ຽງປາ/ຫາປາ
- ຕັກນ້ຳ
- ຫາຟືນ
- ວຽກກ່ຽວກັບປ່າໄມ້ຂອງຕົນເອງ
- ວຽກກໍ່ສ້າງຂອງຕົນເອງ
- ວຽກບ້ານອື່ນຂອງຕົນເອງ ເຊັ່ນ : ອະນາໄມ,ເບິ່ງເດັກນ້ອຍ
- ທຸລະກິດຕົນເອງ(ໃຫ້ຂຽນກິດຈະກຳຂອງທຸລະກິດໃຫ້ລະອຽດ)

<u>*ລູກຈ້າງ</u>
- ເຮັດວຽກກະສິກຳໃຫ້ຄົນອື່ນ
- ພະນັກງານລັດ
- ກຳມະກອນເຮັດວຽກເອະຊົນ ແລະກຳມະກອນລັດວິສະຫະກິດ

(ໃຫ້ຂຽນແຈ້ງວ່າແມ່ນກິດຈະກຳທັງທີ່ເຮັດ)

<u>* ປະເພດກິດຈະກຳທຸລະກິດຕົນເອງ ແລະຂະແໜງ ເອກະຊົນ ແລະ ລັດວິສະຫະກິດມີດັ່ງນີ້:</u>

ຂາຍຜົນຜະລິດຕົນເອງຢູ່ຕະຫລາດ
ຕຳຫູກ/ທໍຜ້າ
ຖັກແສ່ວ
ຈັກສານ (ກະບຸງ, ກະຕ່າ...)
ຊ່າງຕີເຫລັກ
ຊ່າງຕີຄຳ/ເງິນ
ຊ່າງຕັດຜົມ, ແລະອື່ນໆ

**ຄຳຖາມ 1:** ໃນໄລຍະ 7ມື້ ຜ່ານມາ ທ່ານ (ຊື່..)ໄດ້ເຮັດວຽກທຸລະກິດໃຫ້ຕົນເອງ ຫລືເຮັດໃຫ້ຄົວເຮືອນ ນີ້ບໍ່ ?

**ຄຳຖາມ 2:** ໃນໄລຍະ 7 ມື້ ຜ່ານມາ ທ່ານໄດ້ເຮັດວຽກກະສິກຳໃຫ້ຕົນເອງ ຫລືເຮັດໃຫ້ຄົວເຮືອນນີ້ບໍ່ ? ວຽກກະສິກຳ ແມ່ນໝາຍເຖິງວຽກໄຮ່ການນາ, ວຽກລ້ຽງສັດ, ວຽກປູກຝັງ ແລະວຽກອື່ນໆທີ່ກ່ຽວພັນກັບກະສິກຳ. ຄຳຖາມນີ້ ແມ່ນເຮັດວຽກກະສິກຳຂອງຕົນເອງເປັນເຈົ້າຂອງ ຫລືເຮັດໃຫ້ສະມາຊິກຜູ້ໃດຜູ້ນື່ງ ໃນຄົວເຮືອນຂອງຕົນ.

**ຄຳຖາມ 3:** ໃນໄລຍະ 7 ມື້ ຜ່ານມາ ທ່ານ (ຊື່..) ໄດ້ເຮັດວຽກໃຫ້ໃຜຜູ້ໜຶ່ງບໍ່ ? ຊຶ່ງບໍ່ໄດ້ຢູ່ໃນຄົວເຮືອນນີ້ ແມ່ນໝາຍເຖິງການເຮັດວຽກໃຫ້ຄົນອື່ນ ທີ່ໄດ້ຮັບຄ່າຈ້າງ ເຊັ່ນ : ເຮັດວຽກໃຫ້ລັດ, ເອກະຊົນ, ວິສະຫະກິດ ແລະໂຮງຈັກໂຮງງານ ຫລືອື່ນໆ.

**ຄຳຖາມ** 4: ແມ່ນຄຳຖາມ ໃຫ້ກວດຄຳຕອບໃນຄຳຖາມ 1, 2 ແລະ 3, ຖ້າມີຄຳຖາມໃດໜຶ່ງ ຖືກບັນທຶກລະຫັດຄຳຕອບ “1” ໃຫ້ບັນທຶກລະຫັດ “1” ໃສ່ຊ່ອງນີ້ ແລ້ວຂ້າມໄປຫາພາກ IV2 ໂລດ. ກໍລະນີ ທັງ 3

ຄຳຖາມ (1,2,3) ມີລະຫັດຄຳຕອບ “2” ໃຫ້ບັນທຶກລະຫັດ “2” ໃສ່ຊ່ອງນີ້ ແລ້ວໃຫ້ຖາມຊ່ອງ 5 ຕໍ່ໄປ.

**ຄຳຖາມ 5:** ທ່ານ (ຊື່..) ມີວຽກເຮັດງານທຳແບບຖາວອນບໍ່, ເຖິງແມ່ນວ່າໃນ 7 ມື້ ຜ່ານມາ ບໍ່ໄດ້ເຮັດວຽກກໍຕາມ ? ໝາຍວ່າຊວ່ງໄລຍະ 7 ວັນຜູ້ກ່ຽວອາດລາພັກການ, ຫລືມີວຽກຈຳເປັນບໍ່ໄປເຮັດວຽກ ກໍ່ຍັງຖືວ່າລາວມີວຽກເຮັດງານທຳ.

**ຄຳຖາມ 6 :** ໃນໄລຍະ 7 ມື້ ຜ່ານມາ ທ່ານ (ຊື່..) ໄດ້ຊອກວຽກເຮັດ ຫລືກຳລັງລໍຖ້າເຮັດວຽກບໍ່ ? ເຊັ່ນວ່າ ຫາກໍຈົບ ການຮຽນວິຊາສະເພາະໃດນຶ່ງ ຫລືຈົບມັດທະຍົມ ແລະກຳລັງຊອກວຽກເຮັດຢູ່ ກໍລະນີນີ້ ນີ້ຖືວ່າ “ແມ່ນ”. ບາງກໍລະນີຜູ້ ກ່ຽວຫາກໍ່ຈົບແຕ່ບໍ່ທັນຍາກຊອກເຮັດວຽກເທື່ອ ໃນກໍລະນີນີ້ ແມ່ນໃຫ້ຖືວ່າ “ບໍ່ແມ່ນ”.

**ຄຳຖາມ 7:** ຍ້ອນເຫດຜົນຫຍັງ ທ່ານຈຶ່ງບໍ່ໄດ້ເຮັດວຽກ ໃນໄລຍະ 7 ມື້ ຜ່ານມາ ?
ໃນຊ່ອງນີ້ມີ 8 ຄຳຕອບໃຫ້ເລືອກ, ຈົ່ງບັນທຶກລະຫັດຄຳຕອບຕາມຄວາມເໝາະສົມ ຊຶ່ງມີໄວ້ໃຫ້ເລືອກໃນແບບສອບຖາມ.

## *IV2. ການເຮັດວຽກໃນໄລຍະ 7 ມື້ ຜ່ານມາ.*

ໃຫ້ຂຽນຄືນຊື່ຂອງສະມາຊິກຂອງຄົວເຮືອນຜູ້ທີ່ມີອາຍຸ 10 ປີ ຂຶ້ນໄປ ພ້ອມດ້ວຍເລກລຳດັບຂອງລາວ. ບາງຄົນອາດຈະໄດ້ຂຽນຢູ່ຫລາຍແຖວ ຖ້າຫາກວ່າໄດ້ເຮັດຫລາຍວຽກ ໃນໄລຍະ 7 ມື້ ຜ່ານມາ.

**ຄຳຖາມ 1:** ໃນໄລຍະ 7 ມື້ ຜ່ານມາ ທ່ານໄດ້ເຮັດວຽກຫຍັງ ?
ໃຫ້ຂຽນວຽກທີ່ລາວໄດ້ເຮັດແຕ່ລະວຽກໃນໄລຍະ 7 ມື ທີ່ຜ່ານມາ ຢ່າງລະອຽດ, ແຖວໜຶ່ງແມ່ນໃຊ້ສຳລັບຂຽນວຽກໜຶ່ງ, ຖ້າເຮັດຫລາຍວຽກຕ້ອງໄດ້ໃຊ້ຫລາຍແຖວ.

*ຕົວຢ່າງ:* ທ້າວ ສີ , ເລກລຳດັບ 1, ໃນ 7 ມື້ ຜ່ານມາ ລາວໄດ້ກ່ຽວເຂົ້າ, ຂັບລົດຈຳໂບ້, ແປງລົດ. ວິທີຈົດກ່າຍເຂົ້າ ຊ່ອງ ກ ແລະ ຊ່ອງ 1:
ສຳລັບລະຫັດຂະແໜງເສດຖະກິດ ນັກເດີນສຳຫລວດບໍ່ຕ້ອງຂຽນຫຍັງໃສ່, ຈະມາໃສ່ຢູ່ທີ່ ສູນສະຖິຕິແຫ່ງຊາດ.

**ຄຳຖາມ 2:** ໃນໄລຍະ 7 ມື້ ຜ່ານມາ ທ່ານ (ຊື່..) ໄດ້ເຮັດວຽກນີ້ຈັກມື້ ? ໃຫ້ບັນທຶກຈຳນວນມື້ ທີ່ໄດ້ເຮັດໃນແຕ່ລະວຽກໃນໄລຍະ 7 ມື້ ທີ່ຜ່ານມາ. ຜົນບວກຈຳນວນມື້ຂອງຜູ້ນຶ່ງ ແມ່ນຈະບໍ່ກາຍ 7 ວັນ.

**ຄຳຖາມ 3:** ໃນໄລຍະ 7 ມື້ ຜ່ານມາ ທ່ານໄດ້ເຮັດວຽກນີ້ຈັກຊົ່ວໂມງ ? ໃຫ້ບັນທຶກຈຳນວນຊົ່ວໂມງທີ່ໄດ້ເຮັດແຕ່ລະວຽກ ໃນໄລຍະ 7 ມື້ ທີ່ຜ່ານມາ. ສຳຫລັບຄຳຖາມນີ້ ຖ້າໃຜຜູ້ນຶ່ງຫາກເຮັດວຽກກາຍ **70 ຊົ່ວໂມງ**

**ຕໍ່ອາທິດ ນັກເດີນສຳຫລວດຕ້ອງຖາມຄືນໃຫ້ລະອຽດ** ເນື່ອງຈາກວ່າ ເຮັດວຽກຫລາຍໂພດ ມື້ນຶ່ງຮອດ 10 ຊົ່ວໂມງ.

## *IV3. ກິດຈະກຳ ໃນໄລຍະ 12 ເດືອນ ຜ່ານມາ.*

ຖາມທຸກສະມາຊິກໃນຄົວເຮືອນນີ້ຜູ້ ທີ່ມີອາຍຸ 10 ຂື້ນໄປ. **ໃຫ້ນັກເດີນສຳຫລວດກວດຄືນ ຜົນບວກຂອງຄຳຖາມ 1 ບວກກັບຄຳຖາມ 3 ແມ່ນບໍ່ໃຫ້ຫລຸດ ແລະບໍ່ໃຫ້ກາຍ 12 ເດືອນ.**

**ຄຳຖາມ 1:** ໃນໄລຍະ 12 ເດືອນ ຜ່ານມາ ທ່ານໄດ້ເຮັດກິດຈະກຳດັ່ງຕໍ່ໄປນີ້ບໍ່ ?
ໃນຊ່ອງນີ້ຈະມີ 7 ຊ່ອງຍ່ອຍ ຄື :

ຊ່ອງ a: ເຮັດວຽກ ? ໝາຍເຖິງເປັນລູກຈ້າງ, ນາຍຈ້າງ, ເຮັດວຽກໃຫ້ຕົນເອງ, ເຮັດວຽກໃຫ້ຄົວເຮືອນ ໂດຍບໍ່ມີຄ່າຈ້າງ ແຕ່ບໍ່ແມ່ນວຽກກະສິກຳ. ຖ້າບໍ່ໄດ້ເຮັດໃຫ້ບັນທຶກ “0” ຖ້າໄດ້ເຮັດ ໃຫ້ບັນທຶກຈຳນວນເດືອນ ໄດ້ເຮັດຈັກເດືອນ ? ນິຍາມ ແລະບາງຂໍ້ກຳນົດໄດ້ຢູ່ໃນບ໊ອກໜ້າທີ່ 15 ຂອງປື້ມຄູ່ມືຫົວນີ້.

ຊ່ອງ b: ເຮັດວຽກກະສິກຳ ລວມທັງການປະມົງ ແລະປ່າໄມ້ ?

ຊ່ອງ c: ຫວ່າງງານ ຫລືລໍຖ້າເຮັດວຽກ ? ໝາຍເຖິງບຸກຄົນຜູ້ໃດຜູ້ນຶ່ງ ໄດ້ຊອກວຽກເຮັດງານທຳ ໂດຍອາດຈະໄດ້ຍື່ນເອກກະສານ ເພື່ອເຂົ້າສະມັກງານ ຫລືກຳລັງຕິດຕໍ່ນຳໝູ່ເພື່ອນ ພີ່ນ້ອງ ເພື່ອຈະຂໍເຂົ້າເຮັດວຽກນັ້ນ ແມ່ນຖືວ່າຫວ່າງງານ ຫລືລໍຖ້າວຽກ.

ຊ່ອງ d: ນັກຮຽນ ? ໝາຍເຖິງ ຜູ້ໃດນຶ່ງກຳລັງຮຽນໜັງສື ຢູ່ໂຮງຮຽນ ຫລືສະຖາບັນການສຶກສາໃດນຶ່ງກໍຖືວ່າແມ່ນນັກຮຽນ.

ຊ່ອງ e: ເຮັດວຽກເຮືອນ/ດູແລເດັກນ້ອຍ ? ກໍລະນີນີ້ ບໍ່ແມ່ນຫວ່າງງານ ແມ່ນໜ້າທີ່ລາວທີ່ຈະຕ້ອງ ຮັບຜິດຊອບວຽກບ້ານ ການເຮືອນ ຫລືລາວເຮົາມັກເອີ້ນແມ່ນ “ແມ່ເຮືອນ”.

ຊ່ອງ f: ບຳນານ/ເຖົ້າແກ່ ? ແມ່ນໝາຍເຖິງ ບຸກຄົນໃດນຶ່ງ ທີ່ມີອາຍຸກະສຽນສູງ ກາຍ 70 ປີ ຂື້ນເມື່ອ ແລະໄດ້ອອກບຳນານ ຢູ່ເຮືອນລ້າໆ ຜູ້ກ່ຽວອາດເຮັດວຽກກ໊ອກໆແກ໊ກໆ ຕາມບ້ານຕາມເຮືອນ ຫລືສານໄມ້ສານຕ໊ອກທຳມະດາຮັບໃຊ້ຄົວເຮືອນ. ໃນກໍລະນີ ຜູ້ໃດນຶ່ງອອກບຳນານວຽກນີ້ ແຕ່ພັດໄປ ເຮັດວຽກອື່ນ ທີ່ມີຄ່າຈ້າງແຮງງານ ຫລືເຮັດທຸລະກິດຂອງຕົນເອງ ແມ່ນບໍ່ຖືວ່າ ເຖົ້າແກ່ ຫລືອອກບຳນານ ເຖິງແມ່ນວ່າລາວມີອາຍຸຮອດ 70 ປີກໍ່ຕາມ.

ຊ່ອງ g: ເຈັບປ່ວຍດົນ ? ໝາຍເຖິງ ຜູ້ໃດນຶ່ງເຈັບປ່ວຍເປັນເວລາຫລາຍເດືອນ ທີ່ບໍ່ສາມາດອອກ ແຮງງານໄດ້ ເຖິງແມ່ນວ່າ ລາວສາມາດເດີນໄປມາໄດ້ຢູ່ ແຕ່ຍັງບໍ່ສາມາດເຮັດວຽກໜັກ ຫລືຊ່ວຍຕົນເອງໄດ້ເປັນປົກກະຕິ.

**ຄຳຖາມ 2:** ໃນໄລຍະ 12 ເດືອນ ຜ່ານມາ ທ່ານ (ຊື່..) ໄດ້ບວດບໍ່ ? ຖ້າໄດ້ບວດໃຫ້ບັນທຶກລະຫັດ “1”, ຖ້າບໍ່ໄດ້ບວດໃຫ້ບັນທຶກລະຫັດ “2” ແລ້ວໄປຫາຄົນຕໍ່ໄປ.

**ຄຳຖາມ 3:** ກໍລະນີໄດ້ບວດ ໃຫ້ຖາມວ່າ ໃນໄລຍະ 12 ເດືອນ ຜ່ານມາ ທ່ານ (ຊື່..) ໄດ້ບວດຈັກມື້ ? ໃຫ້ບັນທຶກຈຳນວນມື້ທີ່ໄດ້ບວດໃນໄລຍະ 12 ເດືອນ ທີ່ຜ່ານມາ.

## *ພາກ V : ການໄດ້ຮັບເຄາະຮ້າຍ*

ຄຳຖາມ 1: ໃນ 12 ເດືອນ ຜ່ານມາ, ສະມາຊິກໃນຄົວເຮືອນຂອງທ່ານ ມີໃຜ ບໍ່ ? ໄດ້ຮັບເຄາະຮ້າຍຈາກການປຸ້ນ, ງັດແງະ ຫລືຂະໂມຍສິ່ງຂອງໃດນຶ່ງ ຊື່ງອາດຈະຢູ່ພາຍໃນບ້ານເຮືອນ ຫລືນອກເຮືອນກ

ຄຳຖາມ 2: ໄດ້ຮັບເຄາະຮ້າຍປະເພດໃດ ? ຄຳຖາມນີ້ແມ່ນຢາກຮູ້ວ່າຄົວເຮືອນນີ້ໄດ້ຮັບເຄາະຮ້າຍຍ້ອນຫັຽງ. ຂີດວົງອ້ອມເອົາຄຳຕອບທີ່ເໝາະສົມ, ສາມາດໝາຍໄດ້ຫລາຍຄຳຕອບ.

ຄຳຖາມ 3: ໃນເວລາທ່ານ (ຊື່..)ໄດ້ຮັບເຄາະຮ້າຍໃດນື່ງ ທ່ານໄດ້ລາຍງານໃຫ້ອົງການຈັດຕັ້ງໃດໜຶ່ງບໍ່ ? ໃຫ້ບັນທຶກລະຫັດຄຳຕອບທີ່ເໝາະສົມພຽງຄຳຕອບດຽວ, 1=ລາຍງານ, 2=ບໍ່ໄດ້ລາຍງານ, ຖ້າບໍ່ໄດ້ລາຍງານ ແມ່ນຂ້າມໄປຫາຄຳຖາມ 6.

ຄຳຖາມ 4: ທ່ານລາຍງານໃຫ້ອົງການຈັດຕັ້ງໃດເປັນຕົ້ນຕໍ ? ໃຫ້ບັນທຶກລະຫັດຄຳຕອບທີ່ເໝາະສົມພຽງຄຳຕອບດຽວ.

ຄຳຖາມ 5: ຜົນຈາກການລາຍງານມານັ້ນ. ບັນຫາ ຫລືເລື່ອງຂອງທ່ານ ໄດ້ມີການດຳເນີນຄະດີບໍ່ ?

ຄຳຖາມ 6: ໃນ 12 ເດືອນ ຜ່ານມາສະມາຊິກໃນຄົວເຮືອນຂອງທ່ານ ມີໃຜບໍ່ ? ໄດ້ຮັບຄວາມຮຸນແຮງ ? ຄວາມຮຸນແຮງ ໝາຍເຖິງ ມີສະພາບອັນໃດອັນນື່ງ ທີ່ບໍ່ດີ ກະທົບກະເທືອນ ເຖິງສະມາຊິກຄົນໃດຄົນນື່ງ ກວມລວມເອົາທັງ ກາຍ, ວາຈາ ແລະໃຈ.

ຄຳຖາມ 7: ຖ້າໄດ້ຮັບຄວາມຮຸນແຮງນັ້ນ, ຖາມຕໍ່ວ່າແມ່ນຄວາມຮຸນແຮງປະເພດໃດ ? ຊື່ງມີ 3 ຄຳຕອບໃຫ້ເລືອກ.

**ຄຳຖາມ 8:** ຜູ້ໄດ້ຮັບເຄາະຮ້າຍດັ່ງກ່າວ ແມ່ນເປັນເພດຊາຍ ຫຼື ຍິງ ?

**ຄຳຖາມ 9:** ທ່ານໄດ້ລາຍງານໃຫ້ອົງການຈັດຕັ້ງໃດໜຶ່ງຮູ້ບໍ່ ? ກ່ຽວກັບສະພາບດັ່ງກ່າວ.

**ຄຳຖາມ 10:** ຖ້າໄດ້ລາຍງານ, ທ່ານລາຍງານໃຫ້ອົງການຈັດຕັ້ງໃດຕໍ່ກັບບັນຫາທີ່ທ່ານໄດ້ພົບເຈົ້ ຄັ້ງລ້າສຸດ ?

**ຄຳຖາມ 11:** ແລະໄດ້ມີການດຳເນີນຄະດີບໍ່ ? ກ່ຽວກັບບັນຫາຂອງທ່ານ ຄັ້ງລ້າສຸດນັ້ນ.

**ຄຳຖາມ 12:** ການໄດ້ຮັບຄວາມຮຸນແຮງ ແມ່ນໄດ້ຮັບຈາກໃຜ ? ໃຫ້ເລືອກພຽງຄຳຕອບດຽວ,1=ຄົນບໍ່ຮູ້ຈັກກັນ, 2 = ຄົນຮູ້ຈັກກັນ.

# ການສຳພາດອາທິດທີ່ສອງ

***ພາກທີ VI: ໂພສະນາການ***

ກ່ອນຈະຖາມໃນພາກນີ້ໃຫ້ທ່ານຈົດກ່າຍລາຍຊື່ສະມາຊິກຄົວເຮືອນຜູ້ທີ່ຢູ່ປົກກະຕິທັງໝົດຄືນຈາກພາກທີ I. ໂດຍຂຽນຊື່ຕາມແຖວນອນໃນແບບໃບສອບຖາມ.

ຄຳຖາມ 1: ມື້ວານນີ້ທ່ານກິນເຂົ້າໜຽວຫລາຍປານໃດ?
ເວລາຖາມນັກເດີນສຳຫລວດຕ້ອງເອົາຮູບປັ້ນເຂົ້າໜຽວໃຫ້ເບິ່ງເພື່ອໃຫ້ຜູ້ຕອບມີຄວາມສະດວກໃນການຄາດຄະເນ (**<u>ເຂົ້າປັ້ນນີ້ ປະມານ 100 ກຼາມ)</u>** ໃຫ້ຂຽນຄຳຕອບຈຳນວນປັ້ນເຂົ້າຂອງແຕ່ລະຄົນໃສ່ບ່ອນຈ້ຳເມັດຕາມລາຍຊື່ໃຫ້ຖືກຕ້ອງ. ການຖາມແມ່ນໃຫ້ຖາມໄປແຕ່ລະຊ່ວງເວລາທີ່ໄດ້ກຳນົດໄວ້, ກໍລະນີສະມາຊິກຜູ້ໃດໜຶ່ງບໍ່ໄດ້ກິນເຂົ້າເຊົ້າ ຫລື ທ່ຽງ... ໃຫ້ຂຽນ "00" ຫລື ມີສະມາຊິກບາງຄົນບໍ່ສາມາດສຳພາດໃນໄລຍະການສຳຫລວດອາທິດທີ 2 ນີ້ແມ່ນໃຫ້ຂຽນ"99" ໝາຍຄວາມວ່າບໍ່ມີຄຳຕອບ. ຫລັງຈາກນັ້ນໃຫ້ລວມຈຳນວນປັ້ນເຂົ້າທັງໝົດທີ່ແຕ່ລະຄົນໄດ້ກິນໃນມື້ໜຶ່ງໃສ່ແຕ່ລະຊ່ອງໃຫ້ຖືກຕ້ອງ.

ຄຳຖາມ 2: ມື້ວານນີ້ທ່ານກິນເຂົ້າຈ້າວຫລາຍປານໃດ? ເວລາຖາມນັກເດີນສຳຫລວດຕ້ອງເອົາຮູບຈານເຂົ້າຈ້າວໃຫ້ເບິ່ງ ເພື່ອໃຫ້ຜູ້ຕອບມີຄວາມສະດວກໃນການຄາດຄະເນ (**<u>ເຂົ້າຈານນີ້ ປະມານ 100 ກຼາມ)</u>** ການແມ່ນຖາມແບບດຽວກັນກັບຄຳຖາມທີ່ 1.

ຄຳຖາມ 3: ຕາມປົກກະຕິແລ້ວ ຄົວເຮືອນຂອງທ່ານກິນຊີ້ນຈັກກິໂລຕໍ່ 1 ອາທິດ? ຊີ້ນແມ່ນລວມທຸກປະເພດຊີ້ນເຊັ່ນ: ງົວ, ຄວາຍ, ໝູ, ເປັດ, ໄກ່, ກົບ, ຂຽດແລະ ອື່ນໆ ຫລືເອີ້ນອີກວ່າ "ທາດໂປຼຕີນ" ທີ່ຄົວເຮືອນທ່ານໄດ້ກິນໃນ 1 ອາທິດຜ່ານມາ. ໃຫ້ຂຽນຈຳນວນຊີ້ນທີ່ໄດ້ກິນໃສ່ຫ້ອງທີ່ກຳນົດ, ຖ້າບໍ່ໄດ້ກິນແມ່ນໃຫ້ຂຽນ "00".

ຄຳຖາມ 3 (ຕໍ່): ຕາມປົກກະຕິແລ້ວ ຄົວເຮືອນຂອງທ່ານກິນປາຈັກກິໂລຕໍ່ 1 ອາທິດ? ປາແມ່ນລວມທຸກປະເພດປາທີ່ຄົວເຮືອນທ່ານໄດ້ກິນໃນ 1 ອາທິດຜ່ານມາ (ຍົກເວັ້ນປາແດກທີ່ໃຊ້ຕຳແຈ່ວປຸງປະສົມອາຫານອື່ນ). ໃຫ້ຂຽນຈຳນວນກິໂລປາທີ່ໄດ້ກິນໃສ່ຫ້ອງທີ່ກຳນົດ. ຖ້າບໍ່ໄດ້ກິນແມ່ນໃຫ້ຂຽນ "00".

ຄຳຖາມ 4 : ຕາມປົກກະຕິແລ້ວ ຄົວເຮືອນຂອງທ່ານກິນຜັກຈັກກິໂລຕໍ່ 1 ອາທິດ? ຜັກ ແມ່ນໝາຍເຖິງຜັກທຸກຊະນິດ ລວມທັງກິນຮາກ ແລະໃບ.

ຄຳຖາມ 4 (ຕໍ່): ຕາມປົກກະຕິແລ້ວ ຄົວເຮືອນຂອງທ່ານກິນໝາກໄມ້ຈັກກິໂລຕໍ່ 1 ອາທິດ? ໝາກໄມ້ ແມ່ນໝາຍເຖິງ ໝາກໄມ້ ທຸກຊະນິດ ທີ່ສ່ວນໃຫ່ຍກິນເປັນຂອງຫວານ ແລະເປັນອາຫານຫວ່າງ.

## *ພາກທີ VIII: ເຄື່ອງໃຊ້ຍາວນານ ຂອງຄົວເຮືອນ (ສຳພາດອາທິດທີ 2 ).*

ພາກນີ້ແມ່ນຢາກຮູ້ວ່າຄົວເຮືອນມີເຄື່ອງໃຊ້ຍາວນານຊະນິດໃດແດ່, ເປັນຕົ້ນແມ່ນອຸປະກອນຮັບໃຊ້ໃນຊີວິດປະຈຳວັນ, ການຄົມມະນາຄົມ ແລະສື່ສານຕ່າງໆ, ນອກຈາກນັ້ນຍັງຢາກຮູ້ເຖິງສິ່ງຂອງເຫລົ່ານັ້ນທາງຄົວເຮືອນໄດ້ນຳໃຊ້ເຂົ້າໃນເຮັດທຸລະກິດມີອັດຕາສ່ວນເທົ່າໃດ. ນອກນັ້ນ ກໍ່ຍັງຢາກຮູ້ວ່າ ສິ່ງຂອງທີ່ຄົວເຮືອນ ຂອງທ່ານໃຊ້ຢູ່ປະຈຸບັນນີ້ ມີຈຳນວນເທົ່າໃດເປັນຂອງຕົນເອງ ແລະມີຈຳນວນເທົ່າໃດ ທີ່ໄດ້ໃຊ້ລ້າ.

| |
|---|
| *ນັກເດີນສຳຫລວດ ຄວນສັງເກດເບິ່ງສະພາບຄົວເຮືອນ ແລ້ວຈຶ່ງຖາມຄຳຖາມໄປແຕ່ລະໝວດທີ່ມີໃນແບບສອບຖາມຕາມຄວາມເໝາະສົມ.* |

ຄຳຖາມ1: ຄົວເຮືອນ ຂອງທ່ານມີເຄື່ອງໃຊ້ດັ່ງຕໍ່ໄປນີ້ບໍ່? ນັກເດີນສຳຫລວດອ່ານແຕ່ລະລາຍການໃຫ້ຄົວເຮືອນຟັງ ກໍລະນີ ຄົວເຮືອນຕອບວ່າມີ ຈຶ່ງຖາມຕໍ່ມີຈັກອັນ ຫລືຈັກຕອນ ຈາກນັ້ນ ຈຶ່ງຖາມຕໍ່ວ່າຈຳນວນທີ່ຄົວເຮືອນມີນັ້ນ. ມີຈຳນວນຈັກອັນ ທີ່ເປັນຂອງຄົວເຮືອນເອງ ແລ້ວຈຶ່ງຂຽນຈຳນວນລົງໃສ່ບ່ອນທີ່ກຳນົດໄວ້.

ຄຳຖາມ2: ກໍລະນີ ຖ້າທ່ານຕ້ອງການຂາຍວັດຖຸນີ້ຄາດວ່າຈະຂາຍໄດ້ເທົ່າໃດ? ໃຫ້ຂຽນ ມູນຄ່າຂອງວັດຖຸເຫລົ່ານັ້ນເປັນເງິນກີບ, ຖ້າການຕີລາຄາມູນຄ່າເປັນເງິນສະກຸນອື່ນ ແມ່ນໃຫ້ເອົາອີງໃສ່ອັດຕາແລກປ່ຽນໃນມື້ສຳພາດ.

## *ພາກທີ IX: ສະພາບທີ່ຢູ່ອາໃສ ຂອງຄົວເຮືອນ*

ຄຳຖາມ1: ທ່ານມີກຳມະສິດຕໍ່ຄົວເຮືອນນີ້ຄືແນວໃດ? ໃຫ້ບັນທຶກລະຫັດຄຳຕອບດຽວເທົ່ານັ້ນ, 1=ເປັນເຈົ້າຂອງ, 2=ເປັນຜູ້ເຊົ່າ, 3=ຢູ່ລ້າ. ກໍລະນີອື່ນໆ ແມ່ນບັນທຶກລະຫັດ (4=ອື່ນໆ) ແມ່ນໃຫ້ຂຽນບອກແຈ້ງເຖິງຮູບແບບກຳມະສິດ.

ຄຳຖາມ2: ຖ້າມີໃຜຜູ້ໜຶ່ງຕ້ອງການເຊົ່າເຮືອນຂອງທ່ານ, ທ່ານຈະຄິດໄລ່ຄ່າເຊົ່າປີໜຶ່ງເທົ່າໃດ?
ທຸກຮູບແບບກຳມະສິດ ຢູ່ໃນຄຳຖາມ 1 ແມ່ນໃຫ້ທ່ານຖາມຄ່າເຊົ່າເຮືອນດັ່ງກ່າວ ສະເລ່ຍ1ປີ ຈັກກີບ ແລ້ວ ໃຫ້ບັນທຶກມູນຄ່າເປັນຕົວເລກສາກົນໃສ່, ຖ້າຜູ້ຕອບຫາກບອກເປັນເງິນຕາຕ່າງປະເທດແມ່ນໃຫ້ປ່ຽນມາເປັນເງິນກີບຖືກເທົ່າໃດ. ກໍລະນີ ຜູ້ຕອບບໍ່ສາມາດຄາດຄະເນມູນຄ່າການເຊົ່າ, ນັກເດີນສຳຫລວດອາດຖາມ ມູນຄ່າເຮືອນໃກ້ຄຽງທີ່ມີລັກສະນະແບບດຽວກັນໃຫ້ຜູ້ຕອບຕີລາຄາເຮືອນນັ້ນ ທຽບໃສ່ເຮືອນລາວເອງ ເພື່ອຊ່ວຍໃຫ້ລາວ ຄາດຄະເນມູນຄ່າການເຊົ່າ.

ຄຳຖາມ 3: ເຮືອນຂອງທ່ານ ແອ້ມດ້ວຍຫຍັງເປັນຕົ້ນຕໍ? ສຳຫລັບຄຳຖາມນີ້ ນັກເດີນສຳຫລວດຕ້ອງສັງ ເກດເອງ. ກໍລະນີ ມີຫລາຍວັດສະດຸແອ້ມຢູ່ນັ້ນ ໃຫ້ເບິ່ງວ່າ ອັນໃດແອ້ມຕົ້ນຕໍ ແມ່ນໃຫ້ເອົາອັນນັ້ນ.

ຄຳຖາມ 4: ເຮືອນຂອງທ່ານ ມຸງດ້ວຍຫຍັງເປັນຕົ້ນຕໍ ? ກໍລະນີນີ້ ກໍໃຫ້ສັງເກດຄືຄຳຖາມ 1

ຄຳຖາມ 5: ເຮືອນຂອງທ່ານ ປູດ້ວຍຫຍັງເປັນຕົ້ນຕໍ ? ກໍລະນີນີ້ ກໍໃຫ້ສັງເກດຄືຄຳຖາມ 1

ຄຳຖາມ 6: ເຮືອນຫລັງນີ້ ໄດ້ປຸກສ້າງມາດົນປານໃດແລ້ວ? ກໍລະນີມີການຕໍ່ເຕີມ, ສ້ອມແປງ ແຕ່ຍັງຮັກສາຮູບເກົ່າຢູ່ ກໍ່ໃຫ້ນັບແຕ່ເລີ້ມປຸກສ້າງທຳອິດ. ກົງກັນຂ້າມຖ້າ ທ້າງອອກ ແລ້ວປຸກໃໝ່ ແມ່ນໃຫ້ເລີ້ມນັບເຮືອນທີ່ໄດ້ປຸກໃໝ່ເລີຍ. ໃຫ້ບັນທຶກຈຳນວນ ປີ ແລະເດືອນ ໃສ່ບ່ອນທີ່ ຊ່ອງລະຫັດຄຳຕອບ. ກໍລະນີ ຍັງບໍ່ທັນເຖິງປີ ແມ່ນຂຽນ “00” ແລະໃຫ້ຂຽນຈຳນວນເດືອນ.

ຄຳຖາມ 7: ເຮືອນຂອງທ່ານມີເນື້ອທີ່ຊັ້ນລຸ່ມ ຫລາຍປານໃດ?
ເນື້ອທີ່ນີ້ແມ່ນບໍ່ນັບເອົາດິນ ແຕ່ເປັນເນື້ອທີ່ຂອງຫລັງເຮືອນທີ່ຢູ່ອາໃສ. ເນື້ອທີ່ຢູ່ອາໃສໝາຍເຖິງເນື້ອທີ່ຢູ່ແທ້, ບໍ່ນັບບ່ອນມ້ຽນເຄື່ອງ, ສາງ, ໂຮງລົດ, ຫ້ອງນ້ຳ, ເຮືອນຄົວ, ເລົ້າເຂົ້າ. ການບັນທຶກຂໍ້ມູນ ແມ່ນໃຫ້ໄລ່ເປັນແມັດມົນທົນ. *ກໍລະນີພິເສດຫ້ອງນ້ຳ ແລະເຮືອນຄົວຢູ່ໃນແມ່ນໃຫ້ນັບເຂົ້າ.* ກໍລະນີເຮືອນຫລາຍຊັ້ນ ແມ່ນໃຫ້ນັບເອົາແຕ່ຊັ້ນລຸ່ມເທົ່ານັ້ນ.

ຄຳຖາມ 7b: ເຮືອນຂອງທ່ານ ມີຈັກຫ້ອງ ? ຫ້ອງ ແມ່ນໝາຍເຖິງ ມີການອ້ອມດ້ວຍສິ່ງໃດສິ່ງນຶ່ງ ແລະມີທາງອອກເຂົ້າສະເພາະ. ສຳຫລັບຄຳຖາມນີ້ ແມ່ນຍົກເວັ້ນຫ້ອງທີ່ເຮັດເປັນເຮືອນຄົວເທົ່ານັ້ນ ນອກນັ້ນແມ່ນນັບເອົາໝົດ.

ຄຳຖາມ 8: ແຫລ່ງນ້ຳດື່ມຕົ້ນຕໍ ຂອງຄົວເຮືອນທ່ານໃນລະດູຝົນແມ່ນເອົາມາຈາກໃສ?
ໃຫ້ບັນທຶກເອົາລະຫັດຄຳຕອບທີ່ເໝາະສົມພຽງຄຳຕອບດຽວ, ຊຶ່ງເປັນແຫລ່ງນ້ຳຕົ້ນຕໍກວ່າໝູ່ທີ່ຄົວເຮືອນນັ້ນໃຊ້ດື່ມໃນລະດູຝົນ. ກໍລະນີອື່ນໆ ແມ່ນໃຫ້ຂຽນບອກແຈ້ງ.

ຄຳຖາມ 9: ໄລຍະທາງໄປຫາແຫລ່ງນ້ຳດື່ມໃນລະດູຝົນມີໄລຍະທາງໄກປານໃດ? ໃຫ້ຄິດໄລ່ເປັນແມັດ.
ຖ້າຢູ່ພາຍໃນເຮືອນ ຫລືແປະກັບແຄມເຮືອນ ແມ່ນຂຽນ “0”.

ຄຳຖາມ10: ແຫລ່ງນ້ຳດື່ມຕົ້ນຕໍ ຂອງຄົວເຮືອນທ່ານໃນລະດູແລ້ງແມ່ນເອົາມາຈາກໃສ?
ໃຫ້ບັນທຶກເອົາລະຫັດຄຳຕອບທີ່ເໝາະສົມພຽງຄຳຕອບດຽວ, ຊຶ່ງເປັນແຫລ່ງນ້ຳຕົ້ນຕໍກວ່າໝູ່ທີ່ຄົວເຮືອນນັ້ນໃຊ້ດື່ມລະດູແລ້ງ. ກໍລະນີອື່ນໆ ແມ່ນໃຫ້ຂຽນບອກແຈ້ງ.

ຄຳຖາມ11: ໄລຍະທາງໄປຫາແຫລ່ງນ້ຳດື່ມໃນລະດູແລ້ງມີໄລຍະທາງໄກປານໃດ?
ໃຫ້ບັນທຶກເປັນຈຳນວນແມັດ ຖ້າຢູ່ພາຍໃນເຮືອນ ຫລືແປະກັບແຄມເຮືອນ ແມ່ນຂຽນ “0”.

ຄຳຖາມ12: ສ້ວຍຖ່າຍ (ວິດ) ຕົ້ນຕໍທີ່ຄົວເຮືອນ ຂອງທ່ານໃຊ້ແມ່ນປະເພດໃດ? ກໍລະນີໃຊ້ນຳຄົວເຮືອນອື່ນກໍຖືວ່າແມ່ນໄດ້ໃຊ້ຄືກັນ.

+ ວິດຊັກໂຄກ : ວິດຊຶມທັນສະໄໝທີ່ມີລະບົບລ້າງ ແລະມີການກໍ່ສ້າງໄດ້ມາດຕະຖານ ຂອງຫລັກການກໍ່ສ້າງມີລະບົບກັ່ນຕອງ.

+ ວິດຊຶມ : ວິດຊຶມທີ່ຕ້ອງຕັກນ້ຳລ້າງເອງ ແຕ່ກໍ່ ສ້າງ ໄດ້ມາດຕະຖານວິດຊຶມທີ່ມີລະບົບກັ່ນຕອງ.

+ ວິດຂຸດຂຸມ (ວິດແຫ້ງ): ວິດທີ່ຂຸດຂຸມ ແລ້ວເອົາທີວວິດໃສ່ ແອ້ມຝາ ແລະບໍ່ມີລະບົບຊືມ ໂດຍການກັ້ນຕອງຂອງວິດ ແລະບໍ່ໄດ້ໃຊ້ນໍ້າລ້າງ.

+ ວິດອື່ນໆ : ນອກຈາກທີ່ໄດ້ລະບຸໄວ້ ແມ່ນນອນຢູ່ໃນວິດອື່ນໆ

+ ບໍ່ມີວິດ : ແມ່ນຖ່າຍຕາມດົງຕາມປ່າ, ຫ້ວຍຫ້ອງໜອງບຶງ.

ຄໍາຖາມ 13: ເຮືອນຄົວ ທີ່ຄົວເຮືອນທ່ານໃຊ້ແຕ່ງຢູ່ຄົວກິນຕົ້ນຕໍ ແມ່ນຕັ້ງຢູ່ໃສ ?

ຄໍາຖາມ 14: ພະລັງງານຕົ້ນຕໍທີ່ຄົວເຮືອນໃຊ້ສໍາຫລັບແຕ່ງກິນ ແມ່ນຫຍັງ?

ຄໍາຖາມ 15: ພະລັງງານຕົ້ນຕໍທີ່ຄົວເຮືອນໃຊ້ສໍາຫລັບແສງສະຫວ່າງ ຂອງຄົວເຮືອນທ່ານ ແມ່ນຫຍັງ?

- ໝໍ້ໄຟ ໝາຍເຖິງ ໝໍ້ໄຟ ທີ່ເອົາໄປສາກແຕ່ອາທິດ ຫລືໃຊ້ເກັບໄຟ ຈາກແສງອາທິດໃນຕອນກາງເວັນ ແລະໃຊ້ໄຟດັ່ງກ່າວໃນຕອນກາງຄືນ.
- ສໍາຫລັບໄຟຟ້າທີ່ໄດ້ ນໍ້າຕົກຂະໜາດນ້ອຍນັ້ນ ແມ່ນຈັດເຂົ້າບ່ອນອື່ນໆ ແລະໃຫ້ຂຽນບອກແຈ້ງຕື່ມ ເພາະວ່າອາດຈະມີຫລາຍຮູບແບບຕ່າງກັນ.

## *ພາກທີ X : ກິດຈະກໍາກໍ່ສ້າງໃນ 12 ເດືອນຜ່ານມາ ( ສໍາພາດອາທິດທີ 2 )*

ສໍາຫລັບພາກນີ້ແມ່ນຈະຖາມເຖິງກິດຈະກໍາການກໍ່ສ້າງຕ່າງໆທີ່ຄົວເຮືອນນີ້ໄດ້ດໍາເນີນ ໃນໄລຍະ 1 ປີຜ່ານມາ, ນັບທັງການກໍ່ສ້າງໃໝ່, ສ້ອມແປງ ແລະຂະຫຍາຍ, ຢາກຮູ້ເຖິງແຮງງານ, ຄ່າຈ້າງ ແລະມູນຄ່າການກໍ່ສ້າງ. ສໍາຫລັບການກໍ່ສ້າງສະຖານທີ ຫລືອາຄານສໍາຫລັບກະສິກໍາ ແລະທຸລະກິດໃດນຶ່ງ ຕ້ອງມີມູນຄ່າເລີ້ມແຕ່ ນຶ່ງແສນກີບຂຶ້ນໄປ ຈຶ່ງຈົດນັບເຂົ້າໃນກູ່ມນີ້.

| ປີ ແລະເດືອນຂອງການສໍາພາດ | ກິດຈະກໍາການກໍ່ສ້າງລວມມີ : |
|---|---|
| ເດືອນ 4 (ເມສາ), ປີ 2007 | - ເຮືອນທັງໝົດສ້າງແລ້ວ ແຕ່ ເດືອນ 3 (ມີນາ), ປີ 2006.<br>- ເຮືອນໄດ້ສ້າງສໍາເລັດແຕ່ເດືອນ 3 (ມີນາ) ປີ 2006 ຮອດເດືອນ 4 (ເມສາ) ປີ 2007<br>- ທຸກເຮືອນທີ່ໄດ້ເລີ່ມຢູ່ແຕ່ສ້າງຍັງບໍ່ທັນແລ້ວ |
| ເດືອນ 5 (ພຶດສະພາ) ປີ 2007 | - ທຸກໆ ເຮືອນສ້າງສໍາເລັດຮອດເດືອນ 4 (ເມສາ) ປີ 2006<br>- ທຸກໆເຮືອນທີ່ສ້າງສໍາເລັດແລ້ວແຕ່ເດືອນ 4 (ເມສາ) ປີ 2006 ຫາ ເດືອນ 5 (ພຶດສະພາ)ປີ 2007<br>- ທຸກເຮືອນທີ່ໄດ້ເລີ້ມຢູ່ແຕ່ສ້າງຍັງບໍ່ທັນແລ້ວ |

ຄໍາຖາມ 1a: ໃນ 12 ເດືອນຜ່ານມາ ຄົວເຮືອນທ່ານມີໃຜບໍ່ໄດ້ສໍາເລັດ ຫລືເລີ້ມຕົ້ນກໍ່ສ້າງເຮືອນ ອາຄານໃດໜຶ່ງ? ຄໍາຖາມນີ້ແມ່ນຢາກຮູ້ພຽງແຕ່ວ່າໃນ 1 ປີຜ່ານມາໄດ້ມີການກໍ່ສ້າງເຮືອນ ຫລື ອາຄານໃດນຶ່ງບໍ່, ກໍ່ສ້າງສະຖານທີ່ກະສິກໍາ, ກໍ່ສ້າງສະຖານທີ່ທຸລະກິດ. *(ຄໍາຖາມນີ້ແມ່ນລວມເອົາການຂະຫຍາຍ ແລະສ້ອມແປງ).*

ຄຳຖາມ 1b: ໃຫ້ຈັດລຽງລຳດັບ ກິດຈະກຳກໍ່ສ້າງໂດຍເລີ້ມຈາກ ການກໍ່ສ້າງເຮືອນຢູ່, ສະຖານທີກະສິກຳ ແລະ ສະຖານທີທຸລະກິດຕາມລຳດັບ.

ຄຳຖາມ 1c: ຄຳຖາມນີ້ ແມ່ນຖາມຈຸດປະສົງຂອງການກໍ່ສ້າງ ແມ່ນໃຊ້ເພື່ອເຮັດຫຍັງ ? ຊື່ງມີ 3 ຄຳຕອບ ໃຫ້ເລືອກ.

ຄຳຖາມ 2 : ປະເພດຂອງການກໍ່ສ້າງ ? ໝາຍເຖິງ ການກໍ່ສ້າງທີ່ພວມ ຫລືສຳເລັດໃນ 12 ເດືອນຜ່ານມານີ້ ແມ່ນມີລັກສະນະແນວໃດ ? ເຊັ່ນ:ຕໍ່ເຕີມເຮືອນ ຫລືຕໍ່ເຕີມຮ້ານຂາຍເຄື່ອງຍ່ອຍ ຫລືປຸກຄອກໄກ່ ໃໝ່ ຫລືສ້ອມແປງຖຽງນາໃໝ່ ແລະອື່ນໆ.

ຄຳຖາມ 3: ການກໍ່ສ້າງໄດ້ເລີ້ມຕົ້ນ ໃນປີໃດ ແລະເດືອນໃດ? ໃຫ້ບັນທຶກປີ ແລະເດືອນ ເລີ້ມຕົ້ນການກໍ່ສ້າງໃສ່ ຫ້ອງປີ ແລະເດືອນ. ຕົວຢ່າງ: ເຮືອນລາວເລີ້ມປຸກສ້າງໃນເດືອນ 3 ປີ 2006 ແລະມາສຳເລັດ ຢູ່ໃນເດືອນ 7 ປີ 2007. ຫລືກຳລັງປຸກສ້າງຮ້ານຂາຍເຄື່ອງ ໃນເດືອນ 5 ປີ 2007 ຍັງບໍ່ຮູ້ວ່າ ເດືອນໃດຈະສຳເລັດ. ວິທີການຈົດກໍ່ແມ່ນຈົດເດືອນທີ່ຄົວເຮືອນເລີ້ມຕົ້ນກໍ່ສ້າງ.

ຄຳຖາມ 4: ປີໃດ ແລະເດືອນໃດ ອາຄານ/ເຮືອນສຳເລັດ ພ້ອມໃຫ້ຄົນມາຢູ່ ຫລືສາມາດເລີ້ມທຸລະກິດໄດ້ ? ໃຫ້ບັນທຶກ ປີ ແລະເດືອນ ທີ່ຄົວເຮືອນທ່ານເລີ້ມໄປຢູ່ໃສ່ ຢູ່ທຳອິດ. ຖ້າບໍ່ທັນສຳເລັດການກໍ່ສ້າງ ໃຫ້ ຂຽນ "00" ສຳລັບ ປີ ແລະເດືອນ.

ຄຳຖາມ 5: ແມ່ນໃຜເປັນຜູ້ກໍ່ສ້າງເຮືອນ/ອາຄານ? ໃນຄຳຖາມນີ້ມີ 5 ຄຳຕອບໃຫ້ເລືອກ, ໃຫ້ບັນທຶກເອົາຄຳ ຕອບທີ່ເໝາະສົມ, ກໍລະນີອື່ນໆແມ່ນໃຫ້ຂຽນບອກແຈ້ງ.

ຄຳຖາມ 6: ທ່ານໃຊ້ຈ່າຍຄ່າແຮງງານຫລາຍປານໃດ? ໃຫ້ລວມເອົາຄ່າແຮງງານທີ່ໄດ້ໃຊ້ຈ່າຍທັງໝົດນັບແຕ່ກໍ່ ສ້າງຈົນເຖິງປະຈຸບັນ. ໝາຍວ່າ ຖ້າການກໍ່ສ້າງຍັງບໍ່ທັນແລ້ວ ກໍ່ໃຫ້ຄິດໄລ່ການໃຊ້ຈ່າຍແຮງງານ ຮອດມື້ສຳຫລວດ. ການບັນທຶກແມ່ນເປັນເງິນກີບ. ຖ້າຫາກຈ່າຍເປັນວັດຖຸ ແມ່ນໃຫ້ຕີລາຄາມູນຄ່າ ເປັນເງິນກີບເຊັ່ນກັນ.

ຄຳຖາມ 7: ທ່ານໃຊ້ຈ່າຍຄ່າວັດສະດຸກໍ່ສ້າງ ຫລາຍປານໃດ? ໃຫ້ລວມເອົາຄ່າໃຊ້ຈ່າຍວັດສະດຸກໍ່ສ້າງທັງໝົດ ນັບແຕ່ກໍ່ສ້າງຈົນເຖິງປະຈຸບັນ (ສຳເລັດ). ຄ້າຍຄືກັນກັບຄຳຖາມ 6.

ຄຳຖາມ 8: ຖ້າບໍ່ສາມາດແຍກການໃຊ້ຈ່າຍຄ່າແຮງງານ ແລະ ວັດສະດຸກໍ່ສ້າງ? ໃຫ້ບັນທຶກມູນຄ່າໃຊ້ຈ່າຍທັງ ໝົດຫຼາຍປານໃດ ? ເປັນເງິນກີບ. **ຄຳຖາມ 8 = ຄຳຖາມ 6 + ຄຳຖາມ 7**

ຄຳຖາມ 9: ຖ້າມີສະມາຊິກໃນຄົວເຮືອນໃຊ້ແຮງງານ ຂອງລາວໃນການກໍ່ສ້າງ ໃຫ້ພະຍາຍາມຄາດຄະເນມູນ ຄ່າຄືກັນກັບຈ້າງຄົນອື່ນມາກໍ່ສ້າງໃຫ້? ໃຫ້ຄາດຄະເນມູນຄ່າແຮງງານທັງໝົດທີ່ສະມາຊິກແຕ່ລະ ຄົນໃນຄົວເຮືອນໄດ້ເຮັດຄືກັນກັບຈ້າງຄົນອື່ນ ແລ້ວຂຽນຈຳນວນເງິນລວມທັງໝົດເປັນເງິນກີບໃສ່. ກໍລະນີສະມາຊິກຄົວເຮືອນບໍ່ໄດ້ເຮັດແມ່ນໃຫ້ຂຽນ “0” ໃສ່.

ຄຳຖາມ10: *ຖ້າເຮືອນກໍ່ສ້າງຍັງບໍ່ທັນສຳເລັດ:* ຄາດຄະເນວ່າຈົນສຳເລັດການກໍ່ສ້າງ ທ່ານຈະໃຊ້ຈ່າຍຫລາຍປານໃດ? ກໍລະນີເຮືອນ/ອາຄານທີ່ກຳລັງສ້າງຢູ່ ແມ່ນໃຫ້ຄາດຄະເນມູນຄ່າທີ່ຈະຕ້ອງໃຊ້ຈ່າຍຕື່ມທັງໝົດມີເທົ່າໃດ, ລວມທັງ ວັດສະດຸ ແລະຄ່າແຮງງານ.

ຄຳຖາມ 11: ທ່ານໃຊ້ຈ່າຍຄ່າວັດສະດຸກໍ່ສ້າງຫລາຍປານໃດ ໃນການສ້ອມແປງ ຫລືຂະຫຍາຍເຮືອນ?
ໃຫ້ລວມເອົາຄ່າໃຊ້ຈ່າຍວັດສະດຸກໍ່ສ້າງທັງໝົດ ໃນການສ້ອມແປງ ຫລືຂະຫຍາຍເຮືອນ. ກໍລະນີບໍ່ສາມາດແຍກໄດ້ແມ່ນໃຫ້ປະຫວ່າງໄວ້ ແລວ້ໄປຖາມຄຳຖາມ 13.

ຄຳຖາມ12: ທ່ານໃຊ້ຈ່າຍຄ່າແຮງງານຫລາຍປານໃດ ໃນການສ້ອມແປງ ຫລືຂະຫຍາຍເຮືອນ?
ໃຫ້ລວມເອົາຄ່າແຮງງານທີ່ໄດ້ຈ່າຍທັງໝົດໃນການສ້ອມແປງ ຫລື ຂະຫຍາຍເຮືອນ, ການຈົດກ່າຍແມ່ນເປັນເງິນກີບ. ຖ້າຫາກຈ່າຍຄ່າແຮງງານເປັນວັດຖຸ ແມ່ນໃຫ້ຕີລາຄາມູນເປັນເງິນ. (ຖ້າບໍ່ສາມາດແຍກໄດ້ໃຫ້ຖາມຄຳຖາມ 13 ).

ຄຳຖາມ13: ທ່ານຈະໃຊ້ຈ່າຍຄ່າແຮງງານ ແລະວັດສະດຸກໍ່ສ້າງຫລາຍປານໃດໃນການສ້ອມແປງ ແລະຂະຫຍາຍເຮືອນ? ໃຫ້ຄິດໄລ່ມູນຄ່າລວມທັງໝົດສຳລັບການໃຊ້ຈ່າຍເຂົ້າໃນການສ້ອມແປງ ແລະຂະຫຍາຍເຮືອນ, ໝາຍຄວາມວ່າທັງຄ່າແຮງງານ, ວັດສະດຸ ແລະຄ່າສິ້ນເປືອງຕ່າງໆລວມເຂົ້າກັນ ໃຫ້ຂຽນເປັນເງິນກີບ.

# ການສຳພາດອາທິດທີ່ສາມ

## *XI) ທຸລະກິດຂອງຄົວເຮືອນ ( ສຳພາດໃນອາທິດທີ 3 )*

## XI.1 ຫົວໜ່ວຍທຸລະກິດທີ່ບໍ່ແມ່ນທຸລະກິດກະສິກຳ

ບັນດານິຍາມ ແລະຂໍ້ກຳນົດໄດ້ຂຽນໄວ້ໃນໜ້າທີ່ 28 ຂອງໃບສອບຖາມ. ກະລຸນາອ່ານໃຫ້ລະອຽດເພື່ອສ້າງຄວາມເຂົ້າໃຈຕື່ມ.

ຄຳຖາມ 1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງ ທ່ານ ໄດ້ດຳເນີນທຸລະກິດ ໃດໜຶ່ງບໍ່ ທີ່ບໍ່ ແມ່ນທຸລະກິດກະສິກຳ ? ການດຳເນີນທຸລະກິດ ໝາຍເຖິງຜູ້ໃດຜູ້ນຶ່ງທີ່ເປັນສະມາຊິກຂອງຄົວເຮືອນທ່ານ ໄດ້ດຳເນີນທຸລະກິດໃດນຶ່ງກໍ່ໃຫ້ຈົດເຂົ້າຕາມລຳດັບ.

ຄຳຖາມ 2. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງ ທ່ານ ໄດ້ດຳເນີນທຸລະກິດ ຫຍັງແດ່ ? ໝາຍເຖິງທຸລະກິດທີ່ກຳລັງເຮັດຢູ່ເຊິ່ງບໍ່ແມ່ນທຸລະກິດ ກະສິກຳ, ໃຫ້ຂຽນກິດຈະກຳລະອຽດຂອງທຸລະກິດທີ່ເຮັດຢູ່ນັ້ນ ຕົວຢ່າງ :

- ຊື່ແມ່ນ: ບໍລິສັດດາວເຮືອງ, ກິດຈະກຳຂອງບໍລິສັດນີ້ແມ່ນ ຂາອອກ-ຂາເຂົ້າ. ສະນັ້ນຂຽນໃນຊ່ອງນີ້ “ບໍລິສັດດາວເຮືອງ ຂາອອກ-ຂາເຂົ້າ”
- ຊື່ແມ່ນ: ຮ້ານປ້າຈັນ, ກິດຈະກຳຂອງຮ້ານ ແມ່ນຂາຍເຝີ. ສະນັ້ນ ຕ້ອງຂຽນວ່າ “ຮ້ານປ້າຈັນ ຂາຍເຝີ”

| |
|---|
| *ສ່ວນລະຫັດຂະແໜງເສດຖະກິດ ໃຫ້ນັກເດີນສຳຫລວດເບິ່ງຕາມກູ່ມ/ໝວດລະຫັດ ທີ່ມີໃນໜ້າທີ 29 ຂອງປຶ້ມໃບສອບຖາມ.* |

ຄຳຖາມ 3. ແມ່ນໃຜເປັນຜູ້ຮັບຜິດຊອບ ໃນການດຳເນີນທຸລະກິດເຫຼົ່ານີ້ ? ໝາຍເຖິງສະມາຊິກ ໃນຄົວເຮືອນຂອງທ່ານ ຜູ້ໃດເປັນຜູ້ຮັບຜິດຊອບຕົ້ນຕໍໃນແຕ່ລະວັນຂອງແຕ່ລະກິດຈະກຳ ແມ່ນໃຫ້ຂຽນຜູ້ນັ້ນໃສ່ພ້ອມທັງເລກລະຫັດຂອງລາວ. **<u>ສຳຫລັບເລກລະຫັດບຸກຄົນ ແມ່ນໃຫ້ກວດຄືນເລກລຳດັບ ໃນພາກທີ່ 1.</u>**

## XI.2 ການດຳເນີນທຸລະກິດ

*ສຳຫລັບລຳດັບຂອງທຸລະກິດ ແມ່ນໃຫ້ຖືກລຳດັບດຽວກັນກັບພາກ XI.1 ໃນຄຳຖາມ 2.*

ຄຳຖາມ 1. ຄົວເຮືອນຂອງທ່ານດຳເນີນທຸລະກິດນີ້ໄດ້ດົນປານໃດແລ້ວ ? ໝາຍເຖິງການດຳເນີນທຸລະກິດ ນີ້ໄດ້ຈັກປີ ແລະເດືອນແລ້ວ, ການຂຽນຄຳຕອບແມ່ນໃຫ້ບັນທຶກ ຈຳນວນປີ ແລະເດືອນ .

– ກໍລະນີ ຫາກໍ່ດຳເນີນໄດ້ບໍ່ທັນເຖິງປີ ຢູ່ຊ່ອງປີໃຫ້ຂຽນ "00" ສ່ວນເດືອນແມ່ນໃຫ້ຈຳນວນເດືອນ ເຕັມທີ່ໄດ້ດຳເນີນທຸລະກິດ

ຄຳຖາມ 2. ຄົວເຮືອນຂອງທ່ານດຳເນີນ ທຸລະກິດເຫຼົ່ານີ້ ຢູ່ໃສ ? ໝາຍເຖິງສະຖານທີ່ ທີ່ທຳທຸລະກິດ, ເຊິ່ງມີ 7 ຄຳຕອບໃຫ້ເລືອກ,

ຄຳຖາມ 3. ປັດຈຸບັນນີ້ກຳມະກອນທີ່ບໍ່ແມ່ນສະມະຊິກຂອງຄົວເຮືອນທ່ານ ມີຫຼາຍປານໃດ ທີ່ດຳເນີນ ທຸລະກິດເຫຼົ່ານີ້ ?

- ໝາຍເຖິງຈຳນວນກຳມະກອນທີທ່ານໄດ້ຈ່າຍຄ່າຈ້າງ (ແຮງງານ)ໃຫ້ອາດເປັນລາຍວັນ ຫລື ລາຍເດືອນກໍ່ຕາມ, ແມ່ນມີຫຼາຍປານໃດ, ໃຫ້ບັນທຶກເປັນຈຳນວນຄົນໃສ່.

ຄຳຖາມ 4. ທຸລະກິດ ໄດ້ນີ້ ມີສະມະຊິກຂອງ ຜູ້ໃດໜຶ່ງບໍ່ ? ໃນຄົວເຮືອນທ່ານ ທີເຮັດວຽກເອົາຄ່າແຮງງານ ?

ຄຳຖາມ 5. ປັດຈຸບັນນີ້ ມີສະມະຊິກຂອງ ຄົວເຮືອນ ຫຼາຍປານໃດ ທີ່ດຳເນີນ ທຸລະກິດເຫຼົ່ານີ້ ເປັນປົກກະຕິ ?

- ໝາຍເຖິງ ສະມາຊິກ ໃນຄົວເຮືອນທີ່ໄດ້ດຳເນີນທຸລະກິດ ເປັນປົກກະຕິ ມີຈຳນວນເທົ່າໃດ. ເປັນປົກກະຕິຈະໝາຍເຖິງເຮັດເປັນປະຈຳ ຫຼືວຽກສ່ວນໃຫ່ຽທີ່ລາວເຮັດ. ບຸກຄົນເຫລົ່ານີ້ ແມ່ນບໍ່ໄດ້ຮັບຄ່າຈ້າງ ຫລືຄ່າແຮງງານ.

ຄຳຖາມ 6. ໃນໄລຍະ 12 ເດືອນຜ່ານມາ ທຸລະກິດເຫລົ່ານີ້ ໄດ້ດຳເນີນເປັນເວລາຈັກເດືອນ ? ຖ້າໄດ້ດຳເນີນ ໃຫ້ບັນທຶກຈຳນວນ ເດືອນທີ່ໄດ້ ເຮັດທຸລະກິດນັ້ນ.

ຄຳຖາມ 7. ໂດຍສະເລັ່ຽແລ້ວ ທ່ານຂາຍຜະລິດຕະພັນເຫຼົ່ານີ້ໄດ້ຫຼາຍປານໃດ ຕໍ່ ເດືອນ ? ໃຫ້ຄິດໄລ່ເປັນຈຳນວນເງິນກີບ.

## XII ກະສິກຳ ( ສຳພາດອາທິດທີ 3 ).

### XII:1 . ການນຳໃຊ້ດິນ

ດິນກະສິກຳ ແມ່ນປະກອບມີດິນໄຮ່, ດິນນາ, ດິນສວນ, ດິນປູກຫຍ້າ, ດິນປ່າໄມ້, ດິນປະເປັນເຮື້ອ ໄດ້ 4 ປີລົງມາ, ດິນລ້ຽງສັດ. ບັນດາດິນເຫລົ່ານີ້ ແຕ່ລະຕອນຕ້ອງມີເນື້ອທີ 200 ຕາແມັດຂື້ນໄປ (10 ມ x 20 ມ). ໃຫ້ຈັດລຽງລຳດັບຂອງຕອນດິນແຕ່ໃຫ່ຍຫານ້ອຍ.

ຄຳຖາມ 1. ໃນລະດູການຜະລິດທີ່ຜ່ານມາ ສະມາຊິກໃນຄົວເຮືອນຂອງ ທ່ານມີໃຜບໍ່? ທີ່ ມີດິນກະສິກຳ ຫຼື ໄດ້ດຳເນີນການຜະລິດກະສິກຳໃດໜຶ່ງ ?

ຄຳຖາມ 2. ກະລຸນາບອກແຕ່ລະຕອນດິນ ທີ່ຄົວເຮືອນ ທ່ານໄດ້ເຮັດການຜະລິດ ໃນລະດູການ ທີ່ຜ່ານມາ ?

ຄຳຖາມ 3. ດິນຕອນນີ້ມີເນື້ອທີ່ຫຼາຍປານໃດ ? ຈຸດປະສົງເພື່ອຢາກຮູ້ເນື້ອ ທີ່ຂອງ ແຕ່ລະຕອນດິນທີ່ຄົວເຮືອນ ທ່ານໄດ້ເຮັດການຜະລິດ ໃນລະດູຜ່ານມາ ມີເທົ່າໃດ? ນັກເດີນສຳຫລວດພະຍາຍາມຄິດໄລ່ ໃຫ້ເປັນຫົວໜ່ວຍເຮັກຕາ (1 ເຮັກຕາ = 10 000 ຕາແມັດ = 6 ໄຮ່ 2 ງານ)

ຄຳຖາມ 4. ແມ່ນດິນກະສິກຳປະເພດໃດ ? ຈຸດປະສົງແມ່ນຢາກຮູ້ປະເພດຂອງຕອນດິນທີ່ທ່ານໄດ້ເຮັດການຜະລິດໃນລະດູທີ່ຜ່ານມາ.

ຄຳຖາມ 5. ຖ້າແມ່ນດິນປະເຊື້ອຍ້ອນຫຍັງ ? ຖ້າວ່າຄຳຖາມ 4 ແມ່ນ ຕອບເລກ 2 ( ດິນປະເປັນເຊື້ອ) ໃຫ້ສືບຕໍ່ຖາມຄຳຖາມນີ້ ເຖິງສາຍເຫດທີ່ປະເປັນເຊື້ອ.

ຄຳຖາມ 6. ແຕ່ລະຕອນດິນ ຄົວເຮືອນຂອງທ່ານໄດ້ນຳໃຊ້ລະດູໃດແດ່ ? ໃຫ້ກວດກາຄືນແຕ່ລະຕອນດິນ ໃຫ້ຈະແຈ້ງ.

ຄຳຖາມ 7. ໃນລະດູແລ້ງທີ່ຜ່ານມາ ດິນຕອນນີ້ໄດ້ຮັບຊົນລະປະທານບໍ່ ? ໃຫ້ນັກເດີນສຳຫລວດຖາມໄປເປັນແຕ່ລະຕອນດິນຖ້າຄຳຕອບວ່າໄດ້ຮັບແມ່ນໃຫ້ຂຽນເອົາເລກ 1 , ຖ້າຄຳຕອບວ່າບໍ່ໄດ້ຮັບແມ່ນໃຫ້ຂຽນເອົາເລກ 2 .

ຄຳຖາມ 7. ກຳມະສິດຕໍ່ດິນຕອນນີ້ຄືແນວໃດ ? ໝາຍເຖິງກຳມະສິດຕໍ່ດິນຕອນນີ້ຄືແນວໃດ ? ຖ້າເປັນເຈົ້າຂອງ ຫລືໄດ້ນຳໃຊ້ລ້າ ໃຫ້ຂຽນໝາຍເລກ 1, ຖ້າເປັນຜູ້ເຊົ່າ ໃຫ້ຂຽນໝາຍເລກ 2 .

## *XII:2 ການປູກພືດແລະການເກັບກ່ຽວຜົນຜະລິດ ໃນລະດູທີ່ຜ່ານມາ.*

ນັກເດີນສຳຫລວດ ຕ້ອງອ່ານແຕ່ລະລາຍການພືດໃຫ້ຜູ້ຕອບຟັງຕາມລຳດັບ. ຖ້າຄົວເຮືອນຕອບວ່າ "ໄດ້ປູກ" ນັກເດີນສຳຫລວດຕ້ອງຖາມຕໍ່ວ່າ ພືດທີ່ລາວປູກນັ້ນ ຈຸດປະສົງເພື່ອຫຍັງເປັນຕົ້ນຕໍ ? ປູກເພື່ອຂາຍ ຫລືປູກເພື່ອກິນ ແລະຂີດວົງມົນອ້ອມໜົດທຸກຄຳຕອບ. ຖ້າຄົວເຮືອນບໍ່ໄດ້ປູກຕ້ອງຂີດອ້ອມເລກ 3.

## *XII:3 ການປູກພືດ ແລະການເກັບກ່ຽວຜົນຜະລິດ ໃນລະດູທີ່ຜ່ານມາ.*

ນັກເດີນສຳຫລວດຕ້ອງຂຽນ ເລກທີ່ຕອນດິນ ຄືກັນກັບເລກທີຕອນດິນທີ່ໄດ້ກຳນົດໄວ້ໃນພາກ XII.1. ວິທີການຈົດກ່າຍ ແມ່ນເລີ້ມຈາກການປູກເຂົ້າ. ການປູກເຂົ້ານີ້ ແມ່ນຢູ່ເລກທີຕອນດິນໃດ ແລະ

**ໃຫ້ກວດກາ :**

- ບັນດາພືດທີ່ຈະຈົດເຂົ້າໃນຄຳຖາມນີ້ ຕ້ອງກວດໃສ່ ພາກ XII.2 ທີ່ມີຄຳຕອບ 1 ຫລື 2 ໝາຍວ່າ ຄົວເຮືອນໄດ້ປູກພືດນີ້ ເພື່ອຂາຍ ຫລືປູກເພື່ອກິນຈຶ່ງຈົດກ່າຍລາຍຊື່ພືກເຂົ້າພາກນີ້.
- ຕົວຢ່າງ 1: ຕອນດິນທີ 1 ບອກວ່າປູກເຂົ້າໜຽວໃນພາກ XII.2 ແຕ່ໃນຄຳຖາມ 4 ຂອງພາກ XII.1 ພັດ ແມ່ນ ດິນສຳຫລັບປູກຕົ້ນໄມ້ກິນໝາກ.
- ຕົວຢ່າງ 2: ໃຫ້ກວດກາເບິ່ງອີກ ໃນພາກ XII.2 ຂີດວົງມົນອ້ອມ 2 ວ່າແມ່ນລະດູຝົນ, ນັກເດີນສຳຫລວດ ຕ້ອງກວດເບິ່ງຄຳຖາມ 6 ຂອງພາກ XII.1 ໄດ້ບອກຫຍັງ ? ຖ້າຕອບວ່າໃຊ້ລະດູແລ້ງຢ່າງດຽວ ນັກເດີນສຳຫລວດ ຕ້ອງ ຖາມຄົວເຮືອນຄືນໃໝ່ໃຫ້ຈະແຈ້ງ.
- ຖ້າຄຳຖາມທີ່ 1 ຕອບວ່າແມ່ນລະດູຝົນ, ຄຳຖາມທີ່ 2 ຕ້ອງແມ່ນລະດູແລ້ງຂອງລະດູຜ່ານມາ.
  - ຕົວຢ່າງ 1: ຖ້ານັກເດີນສຳຫລວດໄປສຳພາດເດືອນ 7 ປີ 2007 ໝາຍວ່າ ລະດູແລ້ງຜ່ານມາ ແມ່ນລະຫວ່າງ ເດືອນ 11 ປີ 2006 ຫາເດືອນ 5 ປີ 2007. ສ່ວນລະດູຝົນຜ່ານມາ ແມ່ນລະຫວ່າງເດືອນ 6 ຫາ ເດືອນ 10 ປີ 2006.
  - ຕົວຢ່າງ 2: ຖ້ານັກເດີນສຳຫລວດໄປສຳພາດ ເດືອນ 2 ປີ 2008: ໝາຍວ່າ ລະດູແລ້ງຜ່ານມາ ແມ່ນລະຫວ່າງ ເດືອນ 11 ປີ 2006 ຫາເດືອນ 5 ປີ 2007. ສ່ວນລະດູຝົນຜ່ານມາ ແມ່ນລະຫວ່າງເດືອນ 6 ຫາ ເດືອນ 10 ປີ 2007.

**ໃຫ້ຄິດໄລ່ :**

- ສະມັດຕະພາບເຂົ້າ = ເນື້ອທີເກັບກ່ຽວ ຫານໃຫ້ ຜົນຜະລິດ

## XII:4 ການນຳໃຊ້ຜົນຜະລິດ.

ສຳຫລັບພາກນີ້, ໃຫ້ນັກເດີນສຳຫລວດສົມທົບກັບຜູ້ຕອບ ຄິດໄລ່ຜົນຜະລິດຂອງ ລາວໃຫ້ເປັນກິໂລກະຼາມໝົດທຸກຄຳຖາມ ເພື່ອສະດວກໃນການຄິດໄລ່ມູນຄ່າ : ຫົວໜ່ວຍຄິດໄລ່ ລວມມີ :

- 1 ໂຕນ = 1000 ກິໂລ
- 1ມື່ນ = 12 ກິໂລ
- ເປົາເຂົ້າເປືອກໃຫ່ຍ = 65 ຫາ 70 ກິໂລ
- ເປົາເຂົ້າເປືອກນ້ອຍ = 25 ຫາ 30 ກິໂລ

ຄຳຖາມ 1: ໃຫ້ກວດໃສ່ ພາກ XII.2 ທີ່ມີຄຳຕອບ 1 ຫລື 2 ໝາຍວ່າ ຄົວເຮືອນໄດ້ປູກພືດນີ້ ເພື່ອຂາຍ ຫລືປູກເພື່ອກິນ ຈຶ່ງຈົດກ່າຍລາຍຊື່ພືດເຂົ້າຄຳຖາມນີ້.

ຄຳຖາມ 2: ພາຍຫລັງໄດ້ຈົດກ່າຍລາຍການພືດເຂົ້າໝົດແລ້ວ, ນັກເດີນສຳຫລວດ ອ່ານຊື່ເປັນແຕ່ລະພືດ ໃຫ້ຜູ້ຕອບຟັງວ່າ : ທ່ານໄດ້ຂາຍຜົນຜະລິດໃດໜຶ່ງບໍ່ ? ຖ້າບໍ່ໄດ້ຂາຍ ຂ້າມໄປຖາມຄຳຖາມ 4 ເລີຍ.

ຄຳຖາມ 3. ທ່ານຂາຍຜົນຜະລິດນັ້ນຫຼາຍປານໃດ?

ຄຳຖາມ 3b: ເວລາທ່ານຂາຍຜົນຜະລິດນີ້, ທ່ານໄດ້ຂາຍກິໂລເທົ່າໃດ (ກີບ)?

ຄຳຖາມ4. ຫຼັງການເກັບກ່ຽວ, ພືດເສຍຫາຍຫຼາຍປານໃດຈາກແມງໄມ້,ສັດຕູພືດ ຫຼືບັນຫາອື່ນໆ ?

ຄຳຖາມ5. ຖ້າເສຽຜົນຜະລິດນັ້ນເສຽຫາຍຫຼາຍປານໃດຈາກແມງໄມ້,ສັດຕູພືດ ແລະບັນຫາອື່ນ ໆ ໃຫ້ຂຽນເປັນຈຳນວນກິໂລ.

ຄຳຖາມ 6. ການເກັບກ່ຽວໃນລະດູທີ່ຜ່ານມາ ທ່ານໄດ້ຈ່າຍຄ່າແຮງງານ ຫຼືຈ່າຍຄ່າອື່ນ ໆ ຫຼາຍປານໃດ ? ສຳຫລັບຜູ້ມາຊ່ວຍໃນເວລາເກັບກ່ຽວ ຫລືຈ້າງລົດມາກ່ຽວ ແລະຄ່າປັ່ນເຂົ້າໃຫ້.

ຄຳຖາມ 7. ຖ້າໄດ້ຈ່າຍ ໝາຍເຖິງຜົນຜະລິດໃນລະດູການທີ່ຜ່ານມາໄດ້ຈ່າຍເປັນຄ່າແຮງງານ ຫຼື ຈ່າຍເປັນຄ່າອື່ນ ໆ ຫຼາຍປານໃດ (ກິໂລ) ?.

ຄຳຖາມ 8. ໃນລະດູທີ່ຜ່ານມາ ທ່ານ ໄດ້ເອົາຜົນຜະລິດນີ້ໃຫ້ສັດກິນບໍ່ ? ຈັກກິໂລເອົາໃຫ້ສັດກິນ

ຄຳຖາມ 9. ຖ້າໄດ້ໃຫ້ໝາຍເຖິງ ພືດທີ່ເກັບກ່ຽວ ໃນລະດູທີ່ຜ່ານມາ (ລະດູແລ້ງ ແລະຝົນ) ໄດ້ໃຊ້ເປັນອາຫານສັດ ຈັກກິໂລ, ໃຫ້ຂຽນເປັນຕົວເລກສາກົນ.

ຄຳຖາມ 10 ທ່ານ ໄດ້ປຸງແຕ່ງຜົນຜະລິດນັ້ນເປັນອາຫານ ສຳລັບຂາຍບໍ່ ?

ຄຳຖາມ 11. ຖ້າໄດ້ປຸງແຕ່ງ, ປຸງແຕ່ງຜົນຜະລິດນັ້ນຫຼາຍປານໃດ?ໃຫ້ຄິດໄລ່ເປັນກິໂລກຼາມ.

ຄຳຖາມ 12. ທ່ານ ໄດ້ເອົາຜົນຜະລິດນັ້ນ ໃຫ້ຄົນອື່ນບໍ່ ?

ຄຳຖາມ 13. ຖ້າໃຫ້, ຜົນຜະລິດນັ້ນໃຫ້ຫຼາຍປານໃດ ,ໃຫ້ຄິດໄລ່ເປັນກິໂລກຼາມ.

ຄຳຖາມ14. ທ່ານ ໄດ້ເອົາຜົນຜະລິດນີ້ເຮັດແນວບໍ່ ?

ຄຳຖາມ 15. ຖ້າໄດ້, ຜົນຜະລິດທີ່ໃຊ້ເຮັດແນວ ຫຼາຍປານໃດ (ກິໂລ) ?
ໝາຍເຖິງ ພືດທີ່ເກັບກ່ຽວ ໃນລະດູທີ່ຜ່ານມາໄດ້ໃຊ້ເຮັດແນວຫຼາຍປານໃດ ຈັກກິໂລ ? ໃຫ້ຂຽນເປັນຕົວເລກສາກົນ.

ຄຳຖາມ 16. ຄົວເຮືອນຂອງ ທ່ານ ໄດ້ມີຜົນຜະລິດແຮໄວ້ບໍ່ ?

ຄຳຖາມ 17. ຖ້າແຮໄວ້, ຜົນຜະລິດນີ້ແຮໄວຫຼາຍປານໃດ ? ຄິດເປັນ ກິໂລກຼາມ ແລະໃຫ້ຂຽນເປັນຕົວເລກສາກົນ.

## XII :5 ສັດລ້ຽງ

ຄຳຖາມ 1. ໃນ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ລ້ຽງສັດໃດໜຶ່ງບໍ່ ?
ຄຳຕອບວ່າລ້ຽງ ໃຫ້ຂຽນເອົາເລກໜຶ່ງ , ຖ້າຄຳຕອບວ່າບໍ່ ລ້ຽງໃຫ້ຂຽນເລກ 2 ແລ້ວຂ້າມໄປຖາມ *XII:6.*

ຄຳຖາມ 2. ປັດຈຸບັນຄົວເຮືອນຂອງທ່ານລ້ຽງສັດປະເພດນີ້ (ທີ່ຍັງນ້ອຍ) ຫຼາຍປານໃດ ?

- ຄວາຍ, ງົວນ້ອຍ ແມ່ນໝາຍເຖິງຄວາຍ ຫລືງົວທີ່ມີອາຍຸຕ່ຳກວ່າ 1 ປີລົງມາ
- ໝູ, ແບ້ ແລະແກະນ້ອຍ ແມ່ນມີອາຍຸ ຕ່ຳກວ່າ 3 ເດືອນ
- ມ້ານ້ອຍ ແມ່ນມີອາຍຸຕ່ຳກວ່າ 2 ປີ

– ຊ້າງນ້ອຍ ແມ່ນມີອາຍຸຕ່ຳກວ່າ 5 ປີ.

ຄຳຖາມ 3. ສັດລ້ຽງເຫຼົ່ານີ້ມີມູນຄ່າຫຼາຍປານໃດ ? ໃຫ້ນັກເດີນສຳຫລວດ ສົມທຽບໃສ່ລາຄາທີ່ກຳລັງຊື້-ຂາຍກັນ ໃນປັດຈຸບັນ. ຖ້າຜູ້ຕອບບອກເປັນສຸກຸນເງິນຕ່າງປະເທດ ກໍ່ແມ່ນໃຫ້ປ່ຽນເປັນເງິນລາວ.

ຄຳຖາມ 4. ປັດຈຸບັນຄົວເຮືອນຂອງທ່ານລ້ຽງສັດປະເພດນີ້ (ທີ່ໃຫຍ່ແລ້ວ) ຫຼາຍປານໃດ ?

ຄຳຖາມ 5. ສັດລ້ຽງເຫຼົ່ານີ້ມີມູນຄ່າຫຼາຍປານໃດ ? ໃຫ້ນັກເດີນສຳຫລວດ ສົມທຽບໃສ່ລາຄາທີ່ກຳລັງຊື້-ຂາຍກັນ ໃນປັດຈຸບັນ. ຖ້າຜູ້ຕອບບອກເປັນສຸກຸນເງິນຕ່າງປະເທດ ກໍ່ແມ່ນໃຫ້ປ່ຽນເປັນເງິນລາວ.

ຄຳຖາມ 6. ໃນເດືອນດຽວກັນທີ່ນັກເດີນສຳຫລວດກຳລັງສຳພາດຄົວເຮືອນ ຂອງປີກາຍ (ປີຜ່ານມາ) ທ່ານມີສັດລ້ຽງ (ຊື່..) ທັງໝົດຈັກໂຕ ?

ຄຳຖາມ 7. ໃນເດືອນດຽວກັນທີ່ນັກເດີນສຳຫລວດກຳລັງສຳພາດຄົວເຮືອນ ຂອງປີກາຍ (ປີຜ່ານມາ) ສັດລ້ຽງເຫຼົ່ານີ້ມີມູນຄ່າຫຼາຍປານໃດ ?

ຄຳຖາມ 8. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ຂາຍສັດລ້ຽງຈັກໂຕ ?

ຄຳຖາມ 9. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ຂາຍສັດ ທັງໝົດມູນຄ່າເທົ່າໃດ ?

ຄຳຖາມ10. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ຊື້ສັດລ້ຽງຈັກໂຕ ?

ຄຳຖາມ11. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ຊື້ສັດລ້ຽງທັງໝົດເປັນມູນຄ່າເທົ່າໃດ?

ຄຳຖາມ12. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານມີສັດລ້ຽງເກີດໃໝ່ ຫຼືໄດ້ຮັບຈາກຄົນອື່ນ ເປັນມູນຄ່າເທົ່າໃດ ?

ຄຳຖາມ13. ໃນໄລຍະ 12 ເດືອນຜ່ານມາສັດລ້ຽງ ຂອງ ທ່ານ ເສຍ, ຕາຍ ຫຼືໃຫ້ຄົນອື່ນເປັນມູນຄ່າເທົ່າໃດ ?

ຄຳຖາມ14. ໃນໄລຍະ 12 ເດືອນຜ່ານມາ ຄົວເຮືອນຂອງທ່ານຂ້າ ແລະກິນສັດລ້ຽງຂອງຕົນ ເປັນມູນຄ່າເທົ່າໃດ

## *XIII :6 ສັດປີກ*

*ການກຳນົດສັດໃຫ່ຍ (ໝາຍເຖິງສັດທີ່ສາມາດເອົາມາກິນໄດ້ ມີດັ່ງນີ້:*

– ໄກ່ລາດ ແມ່ນມີອາຍຸ ຫາຍກວ່າ 2 ເດືອນ
– ໄກ່ພັນມີອາຍຸ ຫາຍກວ່າ 1 ເດືອນ
– ເປັດລາດ,ເປັດກົກ ມີອາຍຸ ຫາຍກວ່າ 3 ເດືອນ
– ຫ່ານ ມີອາຍຸ ຫາຍກວ່າ 5 ເດືອນ

ຄຳຖາມ 1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານໄດ້ລ້ຽງສັດປີກບໍ່ ?

ຄຳຖາມ 2. ປັດຈຸບັນຄົວເຮືອນຂອງທ່ານລ້ຽງສັດປີກ (ທີ່ ໃຫຍ່ແລ້ວ) ຫຼາຍປານໃດ ? ໝາຍເຖິງປະເພດສັດທີ່ໃຫ່ຍແລ້ວ. ກໍລະນີບໍ່ໄດ້ລ້ຽງສັດປະເພດໃດນື່ງໃຫ້ຂຽນ “0” ໃສ່.

ຄຳຖາມ 3. ສັດປີກເຫຼົ່ານີ້ມີມູນຄ່າຫຼາຍປານໃດ ? ໃຫ້ນັກເດີນສຳຫລວດ ສົມທຽບໃສ່ລາຄາທີ່ກຳລັງຊື້-ຂາຍກັນ ໃນປັດຈຸບັນ. ຖ້າຜູ້ຕອບບອກເປັນສຸກຸນເງິນຕ່າງປະເທດ ກໍ່ແມ່ນໃຫ້ປ່ຽນເປັນເງິນລາວ.

ຄຳຖາມ 4. ໃນໄລຍະ 4 ອາທິດຜ່ານມາ ຄົວເຮືອນຂອງທ່ານໄດ້ຂາຍສັດປີກຫຼາຍປານໃດ ? ໃຫ້ຂຽນເປັນຈຳນວນໂຕ.

ຄຳຖາມ 5. ສັດປີກເຫຼົ່ານັ້ນທັງໝົດມີມູນຄ່າຫຼາຍປານໃດ ? ໃຫ້ຄິດເປັນຈຳນວນເງິນກີບ.

ຄຳຖາມ 6. ໃນໄລຍະ 4 ອາທິດຜ່ານມາ ຄົວເຮືອນຂອງທ່ານ ໄດ້ຊື້ສັດປີກ ທັງໝົດຈັກໂຕ ? ໃຫ້ຂຽນເປັນຈຳນວນໂຕ.

ຄຳຖາມ 7. ໃນໄລຍະ 4 ອາທິດຜ່ານມາ ຄົວເຮືອນຂອງທ່ານ ໄດ້ຊື້ສັດປີກ ທັງໝົດເປັນມູນຄ່າເທົ່າໃດ ? ໃຫ້ຄິດເປັນຈຳນວນເງິນກີບ.

ຄຳຖາມ 8. ໃນໄລຍະ 4 ອາທິດຜ່ານມາ ຄົວເຮືອນຂອງທ່ານ ໄດ້ຮັບສັດປີກຈາກຄົນອື່ນຫຼາຍປານໃດ ? ໃຫ້ຂຽນເປັນຈຳນວນໂຕ.

ຄຳຖາມ 9. ໃນໄລຍະ 4 ອາທິດຜ່ານມາ ຄົວເຮືອນຂອງທ່ານ ໄດ້ເອົາສັດປີກຂອງຕົນໃຫ້ຄົນອື່ນຫຼາຍປານໃດ ? ໃຫ້ຂຽນເປັນຈຳນວນໂຕ.

ຄຳຖາມ 10. ໃນໄລຍະ 4 ອາທິດຜ່ານມາ ສັດປີກຂອງທ່ານ ໄດ້ເສຍ, ຫຼືຕາຍຫຼາຍປານໃດ ? ໃຫ້ຂຽນເປັນຈຳນວນໂຕ.

ຄຳຖາມ 11. ໃນໄລຍະ 4 ອາທິດຜ່ານມາ ຄົວເຮືອນໄດ້ຮັບເງິນຈາກການຂາຍສັດປີກ ເປັນຈຳນວນທັງໝົດເທົ່າໃດ (ກີບ) ?

## XII:7. ການນຳໃຊ້ຝຸ່ນ, ຢາປາບສັດຕູພືດ

ຄຳຖາມ 1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ນຳໃຊ້ຝຸ່ນເຄມີເຂົ້າໃນການກະສິກຳບໍ່ ?

ຄຳຖາມ 2. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ນຳໃຊ້ຢາປາບສັດຕູພືດເຂົ້າໃນການກະສິກຳບໍ່ ?

## *XII :8 ການປະມົງ*

ຄຳຖາມ 1. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ລ້ຽງປາບໍ່ ?

ຄຳຖາມ 2. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ລ້ຽງປາຢູ່ໃສ ? ສຳຫລັບຄຳຖາມນີ້ ແມ່ນໃຫ້ນັກເດີນສຳຫລວດອ່ານໄປແຕ່ລະປະເພດຂອງການລ້ຽງປາ, ຖ້າຄົວເຮືອນໃດຕອບວ່າ “ໄດ້ລ້ຽງ” ແມ່ນຂີດວົງມົນອ້ອມເລກ “1” ຖ້າບໍ່ໄດ້ລ້ຽງ ຂີດວົງມົນອ້ອມ “2”.

ຄຳຖາມ 3. ໃນໄລຍະ 12 ເດືອນຜ່ານມາສະມາຊິກໃນຄົວເຮືອນຂອງທ່ານ ໄດ້ ໄປຫາປາຕາມທຳມະຊາດບໍ່? ປາທຳມະຊາດ ໝາຍເຖິງ ປາ ບໍ່ໄດ້ຖືກຜູ້ໃດລ້ຽງເກືອມັນ ແລະບໍ່ມີໃຜເປັນເຈົ້າຂອງ.

ຄຳຖາມ 4. ສະມາຊິກໃນຄົວເຮືອນຂອງທ່ານ ໄດ້ ໄປຫາປາຢູ່ໃສແດ່ ? ຖາມເຖິງແຫ່ລງຫາປາ ຕາມທຳມະຊາດ ໂດຍອ່ານໃຫ້ຜູ້ຕອບຟັງໝົດທຸກແຫລ່ງ. ຖ້າຄົວເຮືອນບອກແຫ່ລງຫາປາຂອງລາວ ຕາງຈາກປະເພດແຫ່ລງນ້ຳທີ່ກຳນົດໄວ້ ແມ່ນໃຫ້ຂຽນໃສ່ບ່ອນຫວ່າງນັ້ນໂລດ.

## *XII :9. ປ່າໄມ້*

ຄຳຖາມ 1. ຄົວເຮືອນຂອງທ່ານມີປ່າໄມ້ເປັນຂອງຕົນເອງບໍ່ ? ປ່າໄມ້ ແມ່ນກວມເອົາທັງປ່າໄມ້ປູກເອງ ແລະປ່າໄມ້ທີ່ເກີດຕາມທຳມະຊາດ ແລະທ່ານເປັນຜູ້ຄອບຄອງ ຫລືເປັນເຈົ້າຂອງ.

ຄຳຖາມ 2. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ເອົາໄມ້ ໃນປ່າຂອງຕົນມາເຮັດສິ່ງໃດໜຶ່ງບໍ່ ?

ຄຳຖາມ 3. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ເອົາໄມ້ປະເພດໃດຈາກປ່າໄມ້ຂອງທ່ານເອງບໍ່?

ຄຳຖາມ 4. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ໄປເອົາໄມ້ ຢູ່ປ່າບ່ອນອື່ນບໍ່, ທີ່ບໍ່ແມ່ນປ່າໄມ້ຂອງທ່ານມາໃຊ້ບໍ່ ?

ຄຳຖາມ 5. ໃນໄລຍະ 12 ເດືອນຜ່ານມາຄົວເຮືອນຂອງທ່ານ ໄດ້ ເອົາຜະລິດຕະພັນຈາກປ່າບ່ອນອື່ນມາໃຊ້ມີຊະນິດໃດແດ່ ?.

## *ພາກທີ່ XIII: ສຸຂະພາບ.*

ກ່ອນອື່ນນັກເດີນສຳຫລວດ ຕ້ອງຂຽນຊື່ ແລະເລກລຳດັບຂອງສະມາຊິກທີ່ຢູ່ເປັນປົກກະຕິໃນຄົວເຮືອນ ຄືນ ແລ້ວຈຶ່ງເລີ້ມຖາມຄຳຖາມເປັນແຕ່ລະຄົນໄປ ດັ່ງນີ້ :

**ຄຳຖາມ 1:** ທ່ານຕີລາຄາສຸຂະພາບຂອງທ່ານເປັນຄືແນວໃດ ?

**ຄຳຖາມ 2:** ສົມທຽບ ສຸຂະພາບຂອງທ່ານ ໃສ່ຜູ້ທີ່ມີອາຍຸຄ້າຍຄືກັນເປັນຄືແນວໃດ ?

ໃນຊ່ອງນີ້ມີ 5 ຄຳຕອບ ໃຫ້ເລືອກ, ໃຫ້ບັນທຶກລະຫັດ ຄຳຕອບຂອງສະມາຊິກໃນຄົວເຮືອນ ຕາມ ຄຳຕອບທີ່ເຂົາເຈົ້າບອກມາ.

**ຄຳຖາມ 3:** ທ່ານ ມີພະຍາດຊຳ້ເຮື້ອ ຫຼືພິການຍ້ອນອຸບະຕິເຫດບໍ່ ?

ໃນຊ່ອງນີ້ມີ 2 ຄຳຕອບ ໃຫ້ເລືອກ, ໃຫ້ບັນທຶກ ຄຳຕອບຂອງສະມາຊິກໃນຄົວເຮືອນ ຕາມຄຳຕອບທີ່ເຂົາເຈົ້າບອກມາ. ຖ້າຄຳຕອບ ບໍ່ເຈັບ=2 ໄປຫາຄຳຖາມ 5

**ຄຳຖາມ 4:** ການເຈັບເປັນໄດ້ມີຜົນກະທົບເຖິງ ຄວາມອາດສາມາດໃນການເຮັດວຽກ, ການຮຽນ ຫລືກິດຈະກຳປະຈຳວັນຂອງທ່ານບໍ່ ?

ໃຫ້ບັນທຶກລະຫັດ “1” ຖ້າການເຈັບເປັນມີຜົນສະທ້ອນພາໃຫ້ທ່ານບໍ່ສາມາດເຮັດວຽກປະຈຳວັນໄດ້, ໃຫ້ບັນທຶກລະຫັດ “2” ຖ້າການເຈັບເປັນບໍ່ມີຜົນສະທ້ອນຕໍ່ກັບກິດຈະກຳປະຈຳວັນ .

**ຄຳຖາມ 5:** ໃນໄລຍະ 1 ເດືອນ ຜ່ານມາ ທ່ານໄດ້ມີການເຈັບເປັນບໍ່ ?

ໃຫ້ບັນທຶກລະຫັດ “1” ຖ້າໃນໄລຍະ 1 ເດືອນ ຜ່ານມາ ມີການເຈັບເປັນໃດໜຶ່ງ ແລະໃຫ້ບັນທຶກລະຫັດ “2” ຖ້າ ໃນໄລຍະ 1 ເດືອນ ຜ່ານມາ ບໍ່ມີການເຈັບເປັນ ຫຍັງ ແລ້ວໃຫ້ຂ້າມໄປຫາ ຊ່ອງ 9.

**ຄຳຖາມ 6:** ທ່ານເຈັບເປັນຫຍັງ ?
ໃນຊ່ອງນີ້ມີ 10 ຄຳຕອບ ໃຫ້ເລືອກ, ໃນ 1 ເດືອນ ບາງຄົນອາດຈະເຈັບເປັນຫລາຍພະຍາດ, ສະນັ້ນ ໃນຊ່ອງນີ້ຄົນໜຶ່ງສາມາດບັນທຶກໄດ້ 3 ຄຳຕອບ ໂດຍໃຫ້ເລືອກເອົາພະຍາດທີ່ເຈັບແຮງຕາມລຳດັບ. *(ກໍລະນີຫາກມີການເຈັບທີ່ບໍ່ນອນໃນບັນດາຄຳຕອບເຫຼົ່ານີ້ແມ່ນ ໃຫ້ຂຽນ 11 ແລ້ວເວົ້າແຈ້ງແມ່ນພະຍາດຫັຍງ).*

**ຄຳຖາມ 7:** ການເຈັບເປັນໄດ້ລົບກວນການເຮັດວຽກ, ການຮຽນ ຫລືກິດຈະກຳປະຈຳວັນຂອງທ່ານບໍ່ ?
ໃຫ້ບັນທຶກລະຫັດ “1” ຖ້າການເຈັບເປັນໄດ້ລົບກວນໃຫ້ທ່ານບໍ່ສາມາດເຮັດວຽກປະຈຳວັນໄດ້ ແລະ ໃຫ້ບັນທຶກລະຫັດ “2” ຖ້າການເຈັບເປັນບໍ່ໄດ້ລົບກວນຕໍ່ກັບກິດຈະກຳປະຈຳວັນ ແລ້ວໃຫ້ຂ້າມໄປຫາ ຊ່ອງ 9

**ຄຳຖາມ 8:** ໃນໄລຍະ 4 ອາທິດ ຜ່ານມາ ມີຈັກມື້ ທີ່ທ່ານບໍ່ໄດ້ເຮັດກິດຈະກຳປະຈຳວັນ ຍ້ອນການເຈັບເປັນ ?
ໃຫ້ບັນທຶກຈຳນວນມື້ທັງໝົດທີ່ບໍ່ໄດ້ເຮັດກິດຈະກຳປະຈຳວັນ ຍ້ອນການເຈັບເປັນ.

**ຄຳຖາມ 9:** ທ່ານໄດ້ໄປປິ່ນປົວຢູ່ສະຖານທີ່ປິ່ນປົວໃດໜຶ່ງບໍ່ ໃນ 1 ເດືອນຜ່ານມາ?
ໃຫ້ບັນທຶກລະຫັດ “1” ຖ້າໄດ້ໄປປິ່ນປົວຢູ່ສະຖານທີ່ປິ່ນປົວໃດໜຶ່ງ ແລ້ວໃຫ້ຂ້າມໄປຫາ ຊ່ອງ 11, ໃຫ້ບັນທຶກລະຫັດ “2” ຖ້າບໍ່ໄດ້ໄປປິ່ນປົວຢູ່ສະຖານທີ່ປິ່ນປົວ.

**ຄຳຖາມ 10 :** ຍ້ອນຫຍັງທ່ານຈຶ່ງບໍ່ໄດ້ໄປປິ່ນປົວ ?
ໃນຊ່ອງນີ້ມີ 5 ຄຳຕອບ ໃຫ້ເລືອກ, ໃຫ້ບັນທຶກລະຫັດຄຳຕອບ ຕົ້ນຕໍຕາມການບອກຂອງເຂົາເຈົ້າ ແລະຫລັງຈາກນັ້ນໃຫ້ຂ້າມໄປຫາ ຊ່ອງ 17.

**ຄຳຖາມ 11:** ຕົ້ນຕໍແມ່ນ ທ່ານໄປປິ່ນປົວຢູ່ໃສ ຫລືໄປຫາໃຜ ?
ໃນຊ່ອງນີ້ມີ 10 ຄຳຕອບ ໃຫ້ເລືອກ, ແຕ່ລະຄົນສາມາດບັນທຶກໄດ້ 2 ຄຳຕອບ ໂດຍໃຫ້ເລືອກເອົາສະຖານທີ່ຕົ້ນຕໍ ຫລືຜູ້ຕົ້ນຕໍ ທີ່ໄດ້ໄປຫາຕາມລຳດັບ.

**ຄຳຖາມ 12:** ໃນໄລຍະ 4 ອາທິດ ຜ່ານມາ ທ່ານໄປປິ່ນປົວສຸຂະພາບຈັກເທື່ອ ?
ໃຫ້ບັນທຶກຈຳນວນເທື່ອທີ່ໄດ້ໄປສະຖານທີ່ປິ່ນປົວສຸຂະພາບ ໃນໄລຍະ 1 ເດືອນ ຜ່ານມາ, ຖ້າບໍ່ໄດ້ໄປຈັກເທື່ອ ໃຫ້ບັນທຶກ “0” ແລ້ວຂ້າມໄປຫາ ຊ່ອງ 14.

**ຄຳຖາມ 13:** ໃນໄລຍະ 4 ອາທິດ ຜ່ານມາ ສ່ວນຫລາຍທ່ານໄປປິ່ນປົວສຸຂະພາບຢູ່ໃສ ?
ໃນຊ່ອງນີ້ມີ 6 ຄຳຕອບ ໃຫ້ເລືອກ, ບາງທີຜູ້ໜຶ່ງອາດຈະໄປປິ່ນປົວຢູ່ຫລາຍແຫ່ງ ແຕ່ໃຫ້ບັນທຶກພຽງແຕ່ 1 ຄຳຕອບ ໂດຍໃຫ້ຖືເອົາສະຖານທີ່ ສ່ວນຫລາຍທີ່ລາວໄດ້ໄປໃນໄລຍະ 1 ເດືອນ ຜ່ານມາ.

ຄຳຖາມ 14: ໃນໄລຍະ 4 ອາທິດ ທ່ານ ໄດ້ໄປຫາໝໍເອກະຊົນ, ແພດອາສະມັກ ຫຼື ນາງປະດົງຄັນຈັກເທື່ອ ?
ໃຫ້ຂຽນຈຳນວນເທື່ອໄປ, ( ຖ້າບໍ່ໄດ້ໄປໃຫ້ຂຽນ "0" ແລ້ວໄປຊ່ອງ 16 )

ຄຳຖາມ 15: ໃນໄລຍະ 4 ອາທິດ ຜ່ານມາສ່ວນຫຼາຍ ທ່ານໄດ້ໄປປິ່ນປົວນຳໃຜ ?
ໃນຊ່ອງນີ້ມີ 6 ຄຳຕອບ ໃຫ້ເລືອກ, ໃຫ້ບັນທຶກພຽງແຕ່ 1 ຄຳຕອບ ໂດຍໃຫ້ຖືເອົາສະຖານທີ່ ສ່ວນຫລາຍທີ່ລາວໄດ້ໄປໃນໄລຍະ 1 ເດືອນ ຜ່ານມາ.

ຄຳຖາມ 16: ໃນໄລຍະ 4 ອາທິດ ຜ່ານມາທ່ານໄປປິ່ນປົວນຳໝໍພື້ນເມືອງຈັກເທື່ອ ?
ໃຫ້ບັນທຶກ ຈຳນວນເທື່ອໄປ ( ຖ້າບໍ່ໄດ້ໄປ ໃຫ້ຂຽນ "0" )

**ຄຳຖາມ 17:** ໃນໄລຍະ 4 ອາທິດ ຜ່ານມາ ທ່ານຊື້ຢາກິນເອງບໍ່ ໂດຍບໍ່ມີໃບສັ່ງ ຫຼືບໍ່ມີຄຳແນະນຳຈາກແພດໝໍ?
ໃນຊ່ອງນີ້ມີ 2 ຄຳຕອບ ໃຫ້ເລືອກ, ໃຫ້ບັນທຶກພຽງແຕ່ 1 ຄຳຕອບ,

ຄຳຖາມ 18: ທ່ານໄດ້ຊື້ຢາຊະນິດໃດແດ່ ?

ຄຳຖາມ 19: ທ່ານຊື້ຢູ່ໃສ ? ໃນຊ່ອງນີ້ມີ 3 ຄຳຕອບ ໃຫ້ເລືອກ, ໃຫ້ບັນທຶກ1 ຄຳຕອບ. ຖ້າຄຳຕອບອື່ນໆ ແມ່ນໃຫ້ເວົ້າແຈ້ງແມ່ນສະຖານໃດ.

ຄຳຖາມ 20: ໃນໄລຍະ 12 ເດືອນຜ່ານມາ ທ່ານໄດ້ນອນປິ່ນປົວ ຢູ່ສະຖານທີ່ປິ່ນປົວໃດໜຶ່ງບໍ່ ?
ໃນຊ່ອງນີ້ມີ 2 ຄຳຕອບ ໃຫ້ເລືອກ, ໃຫ້ບັນທຶກຄຳຕອບທີ່ເໝາະສົມ,

ຄຳຖາມ 21: ໃນໄລຍະ 12 ເດືອນຜ່ານມາ ທ່ານໄດ້ນອນປິ່ນປົວ ຢູ່ສະຖານທີ່ປິ່ນປົວຈັກເທື່ອ ?
ໃຫ້ບັນທຶກຄຳຕອບ ເປັນຈຳນວນເທື່ອ ປິ່ນປົວ.

ຄຳຖາມ 22: ເທື່ອສຸດທ້າຍທ່ານ ໄດ້ໄປນອນປິ່ນປົວຢູ່ສະຖານປິ່ນປົວປະເພດໃດ?
ໃນຊ່ອງນີ້ມີ 6 ຄຳຕອບ ໃຫ້ເລືອກ, ໃຫ້ບັນທຶກ 1 ຄຳຕອບທີ່ເໝາະສົມ.

ຄຳຖາມ 23: ທ່ານ ນອນປິ່ນປົວຢູ່ສະຖານປິ່ນປົວເທື່ອສຸດທ້າຍຈັກມື້?
ໃຫ້ບັນທຶກຄຳຕອບ ເປັນຈຳນວນມື້ປິ່ນປົວ.

**ຄຳຖາມ 24:** ທ່ານໃຊ້ຈ່າຍໃນການປິ່ນປົວທັງໝົດເທົ່າໃດ ສຳລັບການປິ່ນປົວເທື່ອສຸດທ້າຍ?
ໃຫ້ບັນທຶກຄ່າໃຊ້ຈ່າຍໃນການປິ່ນປົວເທື່ອສຸດທ້າຍທັງໝົດ ທີ່ໄດ້ໃຊ້ຈ່າຍເທົ່າໃດ.

**ຄຳຖາມ 25:** ທ່ານໃຊ້ຈ່າຍຄ່າເດີນທາງຫລາຍປານໃດສຳລັບການໄປປິ່ນປົວເທື່ອສຸດທ້າຍ ?
ໃຫ້ບັນທຶກຄ່າໃຊ້ຈ່າຍໃນເດີນທາງທັງໝົດເພື່ອໄປປິ່ນປົວ ໂດຍໃຫ້ລວມທັງຄ່າເດີນທາງຜູ້ທີ່ໄປນຳ ແລະການໃຊ້ຈ່າຍຊື້ອາຫານການກິນຕ່າງໆ.

**ຄຳຖາມ 26:** ໃນໄລຍະ 12 ເດືອນ ຜ່ານມາ ທ່ານໄດ້ກູ້ຢືມເງິນ ຫລືໄດ້ຂາຍສິ່ງຂອງໃດໜຶ່ງບໍ່ ຫລືສັດລ້ຽງ ເພື່ອປິ່ນປົວສຸຂະພາບບໍ່ ?

## *XIV ການຊື້ ແລະຂາຍເຄື່ອງໃຊ້ຍາວນານຂອງຄົວເຮືອນ ໃນໄລຍະ 12 ເດືອນ ຜ່ານມາ*

ຄຳຖາມ 1 ໃນໄລຍະ 12 ເດືອນຜ່ານມາໃນຄົວເຮືອນຂອງທ່ານໄດ້ ຊື້ສິ່ງຂອງເຫຼົ່ານີ້ບໍ່ ແລະມູນຄ່າເທົ່າໃດ ?

- ເຄື່ອງເຟີນີເຈີ : ຕຽງ , ໂຕະ ແລະຕັ່ງ , ຕູ້ ...............
- ເຄື່ອງໃຊ້ຄົວເຮືອນ : ເຕົາໄຟຟ້າມີເຕົາອົບ, ເຕົາໄຟຟ້າບໍ່ມີເຕົາອົບ, ເຕົາໄຟ, ຕູ້ເຢັນ/ຕູ້ນ້ຳກ້ອນ, ເຕົາລີດໄຟຟ້າ,................................................

– ພາຫະນະ : ລົດໃຫ່ຍ ( ລົດເກັງ, ລົດຕູ້, ລົດກະບະ...), ລົດຈັກ, ລົດຖີບ, ອື່ນໆ(ເວົ້າແຈ້ງ).
– ໂມງແລະເຄື່ອງມີຄ່າ : ໂມງ, ເຄື່ອງເອ້ ( ເພັດພອຍ, ແຫວນ, ສາຍຄໍ, ປະລັກແຂນ...)
– ວິທະຍຸ , ໂທລະພາບ, ກ້ອງຖ່າຍຮູບ ແລະອື່ນ : ວິທະຍຸ/ເທບ, ໂທລະພາບ,ຫູັກອັງແຕນ, ວີດີໂອ, ກ້ອງຖ່າຍຮູບ, ເຄື່ອງດົນຕີ ...........................................

ຄຳຖາມ 2 : ໃນໄລຍະ 12 ເດືອນຜ່ານມາໃນຄົວເຮືອນຂອງທ່ານໄດ້ຊື້ອຸປະກອນສຳລັບການກະສິກຳ ຫຼືສຳລັບທຸລະກິດບໍ່ ?

– ຖ້າໄດ້ຊື້ໃຫ້ເວົ້າແຈ້ງແມ່ນອຸປະກອນປະເພດໃດ, ແລ້ວໃຫ້ໃສ່ລະຫັດລາຍການດັ່ງກ່າວພ້ອມທັງຖາມມູນຄ່າການຊື້.

*ຖ້າຫາກບໍ່ໄດ້ຊື້ເພື່ອເປັນການຢັ້ງຢືນວ່າຄົວເຮືອນນີ້ບໍ່ໄດ້ຊື້ແທ້ ແມ່ນໃຫ້ຂຽນໃສ່ບ່ອນເວົ້າແຈ້ງວ່າ "ບໍ່ໄດ້ຊື້"*

ຄຳຖາມ3 : ໃນໄລຍະ 12 ເດືອນຜ່ານມາໃນຄົວເຮືອນຂອງທ່ານໄດ້ຂາຍສິ່ງຂອງເຫຼົ່ານີ້ບໍ່?, ເຊັ່ນ : ເຄື່ອງເຟີນີເຈີ, ພາຫະນະຂົນສົ່ງ, ວັດຖຸມີຄ່າ, ວິທະຍຸ,ໂທລະພາບ ແລະເຄື່ອງອື່ນໆ?

ຖ້າໄດ້ຂາຍໃຫ້ເວົ້າລະອຽດຂອງລາຍການແລະພ້ອມດ້ວຍມູນຄ່າພ້ອມ.

*ຖ້າບໍ່ໄດ້ຂາຍແມ່ນໃຫ້ຂຽນວ່າ "ບໍ່ໄດ້ຂາຍໃສ່ບ່ອນເວົ້າແຈ້ງ"*

ຄຳຖາມ 4: ໃນໄລຍະ 12 ເດືອນຜ່ານມາໃນຄົວເຮືອນຂອງທ່ານໄດ້ຂາຍເຄື່ອງເກົ່າເຫຼົ່ານີ້ບໍ່?, ເຊັ່ນ : ເຄື່ອງນຸ່ງ, ເກີບ, ຜ້າແພ, ກາລະຫວັດອື່ນໆ? ຖ້າໄດ້ຂາຍໃຫ້ເວົ້າລະອຽດຂອງລາຍການແລະພ້ອມດ້ວຍມູນຄ່າພ້ອມ. *ຖ້າບໍ່ໄດ້ຂາຍແມ່ນໃຫ້ຂຽນວ່າ "ບໍ່ໄດ້ຂາຍໃສ່ບ່ອນເວົ້າແຈ້ງ"*

ຄຳຖາມ 5: ໃນໄລຍະ 12 ເດືອນຜ່ານມາໃນຄົວເຮືອນຂອງທ່ານໄດ້ຂາຍອຸປະກອນສຳລັບກະສິກຳ ຫຼື ສຳລັບທຸລະກິດບໍ່? ຖ້າໄດ້ຂາຍໃຫ້ເວົ້າລະອຽດຂອງລາຍການແລະພ້ອມດ້ວຍມູນຄ່າພ້ອມ.

*ຖ້າບໍ່ໄດ້ຂາຍແມ່ນໃຫ້ຂຽນວ່າ "ບໍ່ໄດ້ຂາຍໃສ່ບ່ອນເວົ້າແຈ້ງ"*

## *XV ລາຍຮັບ ແລະການໂອນ*

ຄຳຖາມ1. ໃນໄລຍະ 1 ເດືອນຜ່ານມາ ໃນຄົວເຮືອນ ຂອງ ທ່ານມີໃຜແດ່ທີ່ມີລາຍຮັບ ຫຼືໄດ້ຮັບຂອງຂັວນ ເປັນເງິນສົດ ຫຼືເປັນວັດຖຸ ແລະມີມູນຄ່າເທົ່າໃດ ?

ໃນຄຳຖາມນີ້ມີຄຳຕອບໃຫ້ເລືອກ ຄື : ລາຍຮັບຕົ້ນຕໍ , ລາຍຮັບຈາກສັບສິນບັດ, ການໂອນ ແລະລາຍຮັບອື່ນໆ ທີ່ໄດ້ຮັບ .ການຈົດກ່າຍໃຫ້ຈົດເລກທີ່ບຸກຄົນຄືກັບພາກທີ I .

*ນອກຈາກລາຍການທີ່ໄດ້ລະບຸໄວ້ນີ້ແລ້ວຖ້າມີຮັບຈາກການໂອນອື່ນໆ ແມ່ນໃຫ້ຂຽນມູນຄ່າທີ່ໄດ້ຮັບເຂົ້າພ້ອມທັງຂຽນບອກແຈ້ງວ່າແມ່ນໄດ້ມາດ້ວຍວິທີໃດ.*

## *ພາກ XVI: ການກູ້ຢືມ, ການໃຫ້ກູ້ຢືມ ຂອງຄົວເຮືອນ*

### *XVI:1. ການກູ້ຢືມ*

ຄຳຖາມ1: ປັດຈຸບັນສະມາຊິກໃນຄົວເຮືອນຂອງທ່ານ ມີໃຜໄດ້ຢືມເງິນ ຫລືຢືມສິນຄ້າຈາກຄົນອື່ນ ?
ໃຫ້ບັນທຶກເອົາພຽງຄຳຕອບດຽວ, 1=ມີ, 2=ບໍ່ມີ, ຖ້າບໍ່ມີ ຂ້າມໄປຫາພາກ XVI.2.

ຄຳຖາມ2: ກູ້ຢືມມາຈາກໃສ?
ໃຫ້ຂຽນໃສ່ແຕ່ລະແຖວຕໍ່ລົງມາ, ຖ້າຫາກໄດ້ກູ້ຢືມຫລາຍແຫລ່ງ ແລ້ວບັນທຶກເລກລະຫັດທີ່ໄດ້ຢືມ

ຄຳຖາມ3: ສະມາຊິກຄົວເຮືອນຂອງທ່ານ ກູ້ຢືມເງິນຈາກແຕ່ລະບ່ອນຫລາຍປານໃດ?
ໃຫ້ຂຽນເປັນຈຳນວນເງິນລວມເປັນກີບ ໃສ່ແຕ່ລະແຫລ່ງທີ່ໄດ້ຢືມມາໃຫ້ຖືກຕ້ອງ. ກໍລະນີ ກູ້ຢືມເປັນເງິນ ແລະສິນຄ້າ(ວັດຖຸ) ແມ່ນໃຫ້ຕີລາຄາເປັນເງິນລວມເຂົ້າກັນ.

ຄຳຖາມ4: ສະມາຊິກຂອງຄົວເຮືອນທ່ານ ຢືມເງິນມາເພື່ອເຮັດຫັຍງ?
ໃຫ້ບັນທຶກຄຳຕອບທີ່ເໝາະສົມໃສ່ພຽງຄຳຕອບດຽວທີ່ເຫັນວ່າຕົ້ນຕໍກວ່າໝູ່ ໃນຈຸດປະສົງຂອງການກູ້ຢືມເງິນນັ້ນ. ກໍລະນີອື່ນໆນອກຈາກລະບຸໄວ້ແມ່ນໃຫ້ຂຽນບອກແຈ້ງ.

ຄຳຖາມ5: ໃນການກູ້ຢືມມີສິ່ງຄ້ຳປະກັນບໍ່? ໃຫ້ບັນທຶກຄຳຕອບທີ່ເໝາະສົມໃສ່ພຽງຄຳຕອບດຽວ, 1=ມີ, 2=ບໍ່ມີ, ຖ້າບໍ່ມີ ໃຫ້ຂ້າມໄປຄຳຖາມ 7.

ຄຳຖາມ6: ຄົວເຮືອນຂອງທ່ານໄດ້ເອົາອັນໃດຄ້ຳປະກັນ?
ໃຫ້ບັນທຶກລະຫັດລາຍການຄ້ຳປະກັນໃຫ້ຖືກຕ້ອງ ໃສ່ໃນ ຫ້ອງສີ່ຫລ່ຽມ.

ຄຳຖາມ7: ທ່ານໄດ້ຈ່າຍດອກເບ້ຍບໍ່?
ໃຫ້ບັນທຶກຄຳຕອບທີ່ເໝາະສົມໃສ່ພຽງຄຳຕອບດຽວ, 1=ໄດ້ຈ່າຍ, 2=ບໍ່ໄດ້ຈ່າຍ, ຖ້າບໍ່ໄດ້ຈ່າຍ ໃຫ້ຂ້າມໄປຄຳຖາມ 9.

ຄຳຖາມ8: ອັດຕາດອກເບ້ຍໃນການກູ້ຢືມ ແມ່ນ ເທົ່າໃດຕໍ່ປີ?
ໃຫ້ຂຽນອັດຕາດອກເບ້ຍທີ່ໄດ້ຈ່າຍ ສະເລ່ຍເປັນປີ ຄິດໄລ່ເປັນອັດຕາສ່ວນຮ້ອຍ.

ຄຳຖາມ9: ກຳນົດດົນປານໃດຈະໃຊ້ໜີ້ຄືນໃຫ້ໝົດ?
ໃຫ້ບັນທຶກ ເດືອນ ແລະປີທີ່ຈະໃຊ້ຄືນໝົດໃສ່ ກໍລະນີບໍ່ມີກຳນົດ/ບໍ່ຮູ້ແມ່ນໃຫ້ຂຽນ “00”.

### *XVI:2. ການໃຫ້ກູ້*

ຄຳຖາມ1: ສະມາຊິກຄົວເຮືອນທ່ານມີໃຜບໍ່ໄດ້ເອົາເງິນ ຫລືສິນຄ້າໃຫ້ຄົນອື່ນຢືມ ທີ່ບໍ່ທັນໃຊ້ຄືນ?
ຖ້າມີໃຫ້ຂີດວົງມົນອ້ອມເອົາເລກ 1=ມີ, ຖ້າ 2= ບໍ່ມີ ***ສິ້ນສຸດການສຳພາດ.***

ຄຳຖາມ2: ສະມາຊິກຄົວເຮືອນຂອງທ່ານ ເອົາເງິນໃຫ້ຄົນອື່ນຢືມຫລາຍປານໃດ ຊຶ່ງປະຈຸບັນຍັງບໍ່ທັນໄດ້ໃຊ້ຄືນ?
ໃຫ້ຂຽນຈຳນວນເງິນກີບທີ່ໃຫ້ຄົນອື່ນກູ້ຢືມ ໃນແຕ່ລະແຖວ ຕາມລາຍການຢືມ.

ຄຳຖາມ3: ໃຫ້ໃຜຢືມ? ໃຫ້ຂຽນລະຫັດຂອງຜູ້ຢືມລົງໃສ່ແຕ່ລະແຖວໃຫ້ເໝາະສົມ.

ຄຳຖາມ4: ມີອັດຕາດອກເບ້ຍບໍ່ສຳຫລັບການກູ້ຢືມນີ້? ຂີດວົງມົນອ້ອມເອົາຄຳຕອບໃຫ້ຖືກຕ້ອງໃສ່ພຽງຄຳຕອບດຽວ, 1=ມີ, 2=ບໍ່ມີ, ຖ້າບໍ່ມີ ໃຫ້ຂ້າມໄປຄຳຖາມ6.

ຄຳຖາມ5: ອັດຕາດອກເບ້ຍເທົ່າໃດຕໍ່ປີ? ໃຫ້ຂຽນອັດຕາດອກເບ້ຍທີ່ໄດ້ຈ່າຍ ສະເລ່ຍເປັນປີ ຄິດໄລ່ເປັນອັດຕາສ່ວນຮ້ອຍ.

ຄຳຖາມ6: ກຳນົດດົນປານໃດຈະໄດ້ຮັບໜີ້ຄືນໝົດ?
ໃຫ້ຂຽນ ເດືອນ ແລະປີທີ່ຈະໄດ້ຮັບໜີ້ຄືນໝົດໃສ່. ກໍລະນີ ບໍ່ມີກຳນົດ ແລະບໍ່ຮູ້ແມ່ນໃຫ້ຂຽນ “00”.

## ພາກການນຳໃຊ້ເວລາຂອງບຸກຄົນ

### 1). ການສຶກສາເວລາທີ່ນຳໃຊ້ແມ່ນຫັຍງ?

ການສຶກສາເວລາທີ່ນຳໃຊ້ ແມ່ນສຶກສາເບິ່ງວ່າປະຊາຊົນນຳໃຊ້ເວລາຂອງພວກເຂົາເຈົ້າ ໃນເວລາກາງເວັນ ແລະ ກາງຄືນແນວໃດ. ການນຳໃຊ້ເວລາປະກອບດ້ວຍການເຮັດວຽກບາງສິ່ງບາງຢ່າງ, ລວມທັງກິດຈະກຳບາງປະເພດ. ມັນເປັນການສົມທຽບລະຫວ່າງ ການປະຕິບັດເຮັດກິດຈະກຳວຽກດ້ວຍກັນ, ລະຫວ່າງຄົນກັບຄົນ ທີ່ມີເງື່ອນໄຂການດຳລົງຊີວິດແຕກຕ່າງກັນ. ຂໍ້ມູນເຫຼົ່ານີ້ ສາມາດນຳໃຊ້ ເຂົ້າໃນການວິໃຈດ້ານເສດຖະກິດ - ສັງຄົມ.

### 2). ຈະເກັບກຳຂໍ້ມູນແນວໃດ?

ດີທີ່ສຸດ ສຳຫລັບການເກັບກຳຂໍ້ມູນ ນຳໃຊ້ເວລາຢູ່ໃນການສຳຫລວດນີ້ ແມ່ນຖາມພົນລະເຮືອນທີ່ເປັນເປົ້າໝາຍ ແລ້ວຂີດຂຽນລົງໃສ່ຕາຕະລາງການບັນທຶກເວລາ ທີ່ໄດ້ກຳນົດຢູ່ໃນແບບສອບຖາມ

ກິດຈະກຳປະຈຳວັນ ລວມມີຫລາຍວຽກທີ່ແຕກຕ່າງກັນ ແລະໄລຍະເວລາແຕກຕ່າງກັນ . ທ່ານພຽງແຕ່ຂີດເສັ້ນຊື່ ຕາມໂມງເວລາທີ່ໄດ້ປະຕິບັດເຮັດວຽກຜ່ານມາ ລົງໃສ່ ແລະໄປຕາມແຖວຕົງກັນກັບກິດຈະກຳ ຫຼື ວຽກຂອງເຂົາເຈົ້ານັ້ນ.

ບາງກິດຈະກຳເຊັ່ນ ແຖວທີ 4; 5; 6; 7 ແລະ 20 ໃນຊ່ອງທີ 1 ໄດ້ຂີດຫ້ອງນ້ອຍໆໃສ່, ມັນສ້າງຂຶ້ນເພື່ອການຈົດກ່າຍລະຫັດສະເພາະໃສ່ ແລະ ເປັນການເກັບກຳຂໍ້ມູນຂ່າວສານທີ່ລະອຽດກວ່າ. ນັກເດີນສຳຫລວດຕ້ອງຖາມຜູ້ຖືກສຳພາດວ່າ ມັນແມ່ນຫັຍງແທ້ ທີ່ເຂົາໄດ້ປະຕິບັດເຮັດຜ່ານມາ ແລ້ວກໍ່ຈົດກ່າຍລະຫັດທີ່ເໝາະສົມໃສ່ ໂດຍອີງໃສ່ໂຄງສ້າງຂອງລະຫັດຢູ່ໃນລະບົບການບັນຊີແຫ່ງຊາດ.

ຖ້າວ່າເຂົາເຈົ້າໄດ້ເຮັດສອງ ຫລື ຫລາຍກິດຈະກຳພ້ອມໆກັນໃນເວລາດຽວກັນ ສຳຄັນທີ່ສຸດ ທ່ານຈະຕ້ອງເອົາກິດຈະກຳທີ່ຕົ້ນຕໍກວ່າໝູ່ ແລະ ມັນແມ່ນກິດຈະກຳທີ່ເກີດຜົນປະໂຫຍດຫລາຍກວ່າກິດຈະກຳອື່ນໆ

### 3). ຈະຕື່ມເວລາທີ່ນຳໃຊ້ເຂົ້າໃນຕາຕະລາງບັນທຶກເມື່ອໃດ?

ການບັນທຶກນຳໃຊ້ເວລາ ຢູ່ໃນປື້ມແບບສອບຖາມ ສຳຫລັບຄົວເຮືອນ ແມ່ນຈະຖືກຕື່ມໃສ່ ໃນມື້ໃດມື້ໜຶ່ງຂອງອາທິດທີ 2 ຫລື ອາທິດທີ 3. ທຸກຄົນທີ່ຈະຈົດເອົາຂໍ້ມູນນີ້ ແມ່ນຕ້ອງກວມເອົາ 1 ວັນເຕັມ ( ທັງກາງເວັນ

ແລະ ກາງຄືນ ). ທຸກຄົນ ຜູ້ທີ່ມີອາຍຸ 10 ປີຂຶ້ນໄປ ຈະຕອ້ງໄດ້ສຳພາດການໃຊ້ເວລາ. ເຂົາເຈົ້າຈະສາມາດບັນທຶກຂໍ້ມູນເຂົ້າໄດ້ໃນວັນດຽວກັນ ຫລື ມື້ຕໍ່ມາ. ນັກເດີນສຳຫລວດຕ້ອງແນ່ໃຈວ່າ ການບັນທຶກຂໍ້ມູນການນຳໃຊ້ເວລາຢູ່ໃນບ້ານຕ່າງໆຕ້ອງແຈກຢາຍ ແລະກວມເອົາ ພາຍໃນ 7 ວັນເຕັມ (1ອາທິດ). ມັນສຳຄັນຫລາຍ ຜູ້ທີ່ຖືກບັນທຶກການນຳໃຊ້ເວລາຈະບໍ່ໄດ້ເລືອກ ແລະ ກຳນົດເອົາມື້ດ້ວຍຕົນເອງ. ນັກເດີນສຳຫລວດເປັນຜູ້ກຳນົດມື້ ແລະມອບຕາຕະລາງເກັບກຳ ການນຳໃຊ້ເວລາໃຫ້ບຸກຄົນ ພ້ອມທັງແນະນຳ ວິທີການບັນທຶກໃຫ້ຜູ້ທີ່ຖືກສຳພາດ ກ່ອນວັນທີ່ຈະບັນທຶກການນຳໃຊ້ເວລາຕົວຈິງ.

> ເອົາໃຈໃສ: *ສຳຫລັບຜູ້ຖືກສຳພາດເກັບກຳຂໍ້ມູນການນຳໃຊ້ເວລາ, ບໍ່ສາມາດບັນຖືກ ແລະຈົດກ່າຍດ້ວຍຕົນເອງໄດ້ນັກກວດກາ, ນັກເດີນສຳຫລວດຕ້ອງໄດ້ພະຍາຍາມແນະນຳ ແລະບັນທຶກ ການຈົດກ່າຍຊ່ວຍເຂົາເຈົ້າໃຫ້ທັນກັບສະພາບການ*

**4). ຈະຈົດກ່າຍໃຜແນ່?**

ໝົດທຸກຄົນທີ່ມີອາຍຸ 10 ປີຂຶ້ນໄປ, ມີລາຍຊື່ ແລະ ເປັນສະມາຊິກຢູ່ໃນຄົວເຮືອນນີ້ ພ້ອມທັງໄດ້ປະກອບສ່ວນເຂົ້າໃນການສ້າງລາຍຮັບຂອງຄົວເຮືອນ

**5). ຜູ້ສາມາດອ່ານ ແລະຂຽນໄດ້.**

ຖ້າວ່າຜູ້ຖືກຈົດກ່າຍ ແລະ ບັນທຶກການນຳໃຊ້ເວລາ ນັ້ນສາມາດອ່ານ ແລະ ຂຽນໄດ້ ທ່ານຄວນມອບໃບບັນທຶກປະຈຳວັນໃຫ້ເຂົາ ແລະ ແນະນຳໃຫ້ເຂົາເປັນຜູ້ບັນທຶກເອງ. ເພື່ອບໍ່ໃຫ້ຫລົງລືມ, ຄົນຜູ້ນັ້ນຈະຕ້ອງຕື່ມເວລາທີ່ນຳໃຊ້ເຂົ້າໃສ່ໃບບັນທຶກຢ່າງຕໍ່ເນື່ອງ ແລະຕະຫລອດວັນ. ເມື່ອທ່ານຮັບເອົາໃບບັນທຶກນັ້ນຄືນ ທ່ານຄວນຖາມຜູ້ຖືກສຳພາດອີກບາງຄຳຖາມ ມັນຈະເປັນປະໂຫຍດໃຫ້ແກ່ທ່ານ ໃນການຮັບຮູ້ ແລະເກັບກຳຂໍ້ມູນຂ່າວສານຢ່າງລະອຽດກ່ຽວກັບບາງກິດຈະກຳທີ່ກຳນົດເຈາະຈົງ ( ເຮັດວຽກຕາມຈ້າງແຖວທີ 4, ເຮັດທຸລະກິດຕົນເອງແຖວທີ 5, ບົວລະບັດຮັກສາເຂົ້າປູກແຖວທີ 6, ບົວລະບັດຮັກສາພືດອື່ນໆແຖວທີ 7).

**6). ຜູ້ທີ່ບໍ່ສາມາດອ່ານ ແລະຂຽນໄດ້.**

ຖ້າວ່າຜູ້ຖືກຈົດກ່າຍ ແລະບັນທຶກ ການນຳໃຊ້ເວລາ ບໍ່ສາມາດອ່ານ ແລະຂຽນໄດ້ ທ່ານຈະຕ້ອງໄປພົບເຂົາໃນໄລຍະກາງເວັນ. ຖ້າວ່າບໍ່ສາມາດພົບກາງເວັນໄດ້ ທ່ານຕ້ອງໄປພົບເຂົາໃນຕອນແລງ ຫຼື ຕອນຄ່ຳ ແລ້ວກໍ່ຖາມລາວວ່າ ໃນເວລາກາງເວັນນັ້ນລາວໄດ້ເຮັດຫັຽງແດ່, ເຮັດຕອນໃດ ແລະໃຊ້ເວລາດົນປານໃດ. ນັກເດີນສຳຫລວດຕ້ອງໄດ້ຊ່ວຍຜູ້ກ່ຽວໃນການບັນທຶກ ແລະ ຈົດກ່າຍການນຳໃຊ້ເວລາ ຂອງບຸນຄົນເຫຼົ່ານີ້ເຂົ້າໃນໃບບັນທຶກການນຳໃຊ້ເວລາຂອງເຂົາເຈົ້າ

**7). ການກຳນົດ ແລະ ພິສູດລະຫັດຕ່າງໆ.**

ກ່ອນທ່ານຈະຈົດກ່າຍ ແລະບັນທຶກການໃຊ້ເວລາ ທ່ານຂຽນລະຫັດທີ່ຕັ້ງໃຫ້ຄົບຖ້ວນກ່ອນ [1] (*1 ໜ້າປົກຂອງປື້ມແບບສອບຖາມຄົວເຮືອນ),* ຂຽນເລກທີຂອງບຸກຄົນທີ່ຖືກສຳພາດການນຳໃຊ້ເວລາ ຈາກປື້ມສອບຖາມຄົວເຮືອນ ພ້ອມລົງວັນທີ່, ເດືອນ, ປີ ເປັນສອງຕົວເລກໃສ່ຫ້ອງທີ່ກຳນົດໃຫ້ *( ຢູ່ແຈເບື້ອງຊ້າຍຂ້າງເທິງຂອງຕາຕະລາງ)* ມາດຖານຂອງການກຳນົດວັນ:

1. ແມ່ນວັນຈັນ
2. ແມ່ນ ວັນອັງຄານ
3. ແມ່ນວັນພຸດ
4. ແມ່ນວັນພະຫັດ
5. ແມ່ນວັນສຸກ
6. ແມ່ນວັນເສົາ
7. ແມ່ນວັນອາທິດ

**8). ກ່ຽວກັບເວລາ (ຊົ່ວໂມງ)**

ການບັນທຶກ ການນຳໃຊ້ເວລາ ແມ່ນປະກອບມີຕາຕະລາງໄລຍະເວລາທີ່ພິມໃຫ້ກ່ອນ ເລີ້ມແຕ່ 4:00 ເຊົ້າ ແລະຈາກນັ້ນໄປ 24 ຊົ່ວໂມງ. ໄລຍະຫ່າງແມ່ນໄດ້ເຮັດເປັນເຄິ່ງຊົ່ວໂມງ ນັ້ນໝາຍຄວາມວ່າເຄິ່ງຊົ່ວໂມງທຳອິດ ຈາກ 04:00 ເຊົ້າ ແມ່ນ 04:30 ໃນຕອນເຊົ້າ, ເຄິ່ງຊົ່ວໂມງຕໍ່ໄປເລີ້ມຈາກ 04:30 ແລະຈົບລົງທີ 05:00 ໂມງ ແລະສຳລັບເຄິ່ງຊົ່ວໂມງຕໍ່ມາ ເລີ້ມຈາກ 05:00 ໂມງ ຫາ 05:30 ໂມງ ແລະ 05:30 ຈົບລົງທີ 06:00 ແລະຕໍ່ໆໄປ ຈົນຮອດ 24:00 ໂມງ. ພວກເຮົາບໍ່ຈຳເປັນໃນການຄາດຄະເນນຳໃຊ້ເວລາໃຫ້ມັນຊັດເຈນປານໃດ ພຽງແຕ່ຕ້ອງການວ່າ ທ່ານໃຊ້ເວລາດົນປານໃດທີ່ເຮັດກິດຈະກຳຕ່າງໆນັ້ນ, ຖ້າທ່ານເຮັດບາງກິດຈະກຳໃຊ້ເວລາສັ້ນກ່ວາ 0:30 ນາທີ (ເຄິ່ງຊົ່ວໂມງ) ທ່ານຈິ່ງຂີດເສັ້ນຊື່ໃສ່ແຖວຕົງກັບກິດຈະກຳ ທີ່ໄດ້ເຮັດ ທາງທີດີ ແມ່ນໃຫ້ລັງລວມເອົາ ວ່າທ່ານໄດ້ເຮັດຫຍັງ. ກິດຈະກຳທີ່ໃຊ້ເວລາຫລາຍກວ່າເຄິ່ງຊົ່ວໂມງ (> 30:00 ນາທີ) ທ່ານຈະຕັດສິນວ່າທ່ານຈະຂີດເສັ້ນຊື່ໃສ່ແຖວໃດ ແລະແນວໃດ?. ຖ້າວ່າທ່ານເຮັດກິດຈະກຳຫລາຍໆຢ່າງໃນເວລາດຽວກັນ, ກິດຈະກຳທີ່ຂະໜານກັນໄປ, ໃຫ້ເລືອກເອົາກິດຈະກຳໜຶ່ງ ຊຶ່ງແມ່ນກິດຈະກຳ ຕົ້ນຕໍ ກວ່າໝູ່.

ຖ້າວ່າມັນມີຄວາມຫຍຸ້ງຍາກກັບການກຳນົດຊົ່ວໂມງ, ນັກເດີນສຳຫລວດຈຳເປັນຕ້ອງກຳນົດຈຸດອ້າງອີງຕ່າງໆແທນ ແລະໃຫ້ກົງກັນກັບຊົ່ວໂມງຕົວຈິງ.

ຕົວຢ່າງ: ຄວາມແຕກຕ່າງຂອງຈຸດອ້າງອີງທີ່ຈະເປັນໄປໄດ້.

| ຈຸດອ້າງອີງ | ເວລາປະມານ |
|---|---|
| ເວລາຕາເວັນຂຶ້ນ | 06.00-07.00 ໃນຕອນເຊົ້າ |
| ເວລາເດັກນ້ອຍໄປໂຮງຮຽນ | 07.00-08.30 ໃນຕອນເຊົ້າ |
| ເວລາເດັກກັບຈາກໂຮງຮຽນ(ອາຫານທ່ຽງ) | 11.00-13.00 |
| ເດັກນ້ອຍກັບເຂົ້າໂຮງຮຽນ | 13.00-14.00 ໃນຕອນບ່າຍ |
| ຕອນບ່າຍ | 14.00-16.00 ໃນຕອນບ່າຍ |

| | |
|---|---|
| ເດັກນ້ອຍກັບຈາກໂຮງຮຽນ | 1500-17.00 ໃນຕອນບ່າຍ |
| ຕາເວັນຕົກ | 17.00-19.00 |
| ເວລາກິນເຂົ້າແລງ | 18.00-21.00 ໃນຕອນແລງ |
| ຕອນຄໍ່າ | 19.00-22.00 |
| ຕອນກາງຄືນ | 22.00- ຕອນເຊົ້າ |

*9) ທ່ານໄດ້ເຮັດຫັຍງແດ່?*

ນອກຈາກກິດຈະກໍາທີ່ໄດ້ລະບຸໄວ້ກ່ອນແລ້ວນັ້ນ ມັນຍັງມີກິດຈະກໍາອື່ນໆອີກທີ່ກວມຢູ່ດ້ວຍ. ນີ້ແມ່ນພາບລວມ ຂອງຄວາມແຕກຕ່າງກິດຈະກໍານັ້ນ ຕົວຢ່າງ: ມີການເຄື່ອນໃຫ່ວໃດແດ່ ທີ່ລວມເຂົ້າໃນກິດຈະກໍາເຫລົ່ານັ້ນ. ການບັນທຶກແມ່ນເປັນໄປຢ່າງງ່າຍດາຍ ເພາະວ່າມັນເປັນວຽກບາງຢ່າງ ທີ່ເຂົາໄດ້ປະຕິບັດເຮັດກິດຈະກໍາຂອງວຽກນັ້ນ. ຖ້າກິດຈະກໍາຂອງວຽກນັ້ນ ບໍ່ກວມຢູ່ໃນໝວດທີ່ລະບູໄວ້ຂ້າງເທິງ ແມ່ນໃຫ້ບັນທຶກ ແລະຂຽນໃສ່ໝວດອື່ນໆ ພ້ອມຂຽນເປັນປະໂຫຍກ ແລະບັນລະຍາຍໃຫ້ຈະແຈ້ງ *(ພະຍາຍາມບັນທຶກໃຫ້ລະອຽດທີ່ສຸດ).* ທ່ານຕ້ອງຂີດເສັ້ນຊື່ຕິດຕໍ່ກັນຕາມໄລຍະເວລາທີ່ເຂົາໄດ້ເຮັດ.ມີບາງກິດຈະກໍາໄດ້ສະແດງ ອອກຢູ່ໃນການບັນທຶກປະຈໍາວັນ ແລະ ມັນເປັນໜ້າທີ່ຂອງນັກເດີນສໍາຫລວດ, ຖ້າຜູ້ຖືກສໍາພາດໃຫ້ຄໍາຕອບວ່າ ເຮັດຫລາຍກິດຈະກໍາພ້ອມໆກັນ ນັກເດີນສໍາຫລວດຕ້ອງຖາມຜູ້ກ່ຽວຕາມບັນຊີຂອງລະຫັດທີ່ພິມໄວ້ໃນແບບສອບຖາມ ແລະ ອີງໃສ່ບັນຊີນັ້ນ ເພື່ອລົງລະຫັດຂອງຄໍາຕອບທີ່ເໝາະສົມ. ຖ້າເປັນໄປໄດ້, ນັກເດີນສໍາຫລວດຕ້ອງຖາມ ເຂົາເຈົ້າເຮັດວຽກນີ້ເປັນເວລາດົນເທົ່າໃດ. ມັນບໍ່ສາມາດເປັນໄປໄດ້, ຖ້າກິດຈະກໍາຂອງວຽກງານນັ້ນໄດ້ດໍາເນີນ ແລະສືບຕໍ່ເຮັດຮອດເວລາກາງຄືນ ນັກເດີນສໍາຫລວດຕ້ອງຖາມ ແລະ ບັນທຶກປະຈໍາວັນເປັນມື້ຕໍ່ມາ.

ການບັນທຶກກິດຈະກໍາປະຈໍາວັນເຊັ່ນການກໍ່ສ້າງ ແມ່ນສາມາດຈັດກ່າຍເຂົ້າໝວດລວມໄດ້. ຖ້າທ່ານໄດ້ເຮັດວຽກງານດ້ວຍການກໍ່ສ້າງ, ແລະມັນໄດ້ຖືກກໍານົດໃຫ້ເປັນ " ເຮັດວຽກຕາມລູກຈ້າງ" ເພາະວຽກງານນີ້ໄດ້ຊໍາລະເບີກຈ່າຍຄ່າແຮງງານຫຼື ( ເປັນເງິນເດືອນ ). ຖ້າວຽກງານການກໍ່ສ້າງນັ້ນເປັນທຸລະກິດຂອງຕົນເອງ ( ທຸລະກິດການກໍ່ສ້າງ) ທ່ານກໍ່ຈະໄດ້ຈ່າຍຊໍາລະສະສາງ ສໍາຫລັບວຽກງານນີ້ຄືກັນ, ການເຄື່ອນໃຫ່ວວຽກງານກິດຈະກໍາ " ການກໍ່ສ້າງ " ສໍາຫລັບການໃຊ້ຈ່າຍ, ມັນບໍ່ພຽງແຕ່ເປັນການນໍາໃຊ້ເຂົ້າໃນວຽກງານກໍ່ສ້າງເທົ່ານັ້ນ, ມັນຍັງມີການຈ່າຍໃຫ້ຜູ້ໃດ ຜູ້ໜຶ່ງຢູ່ໃນຄົວເຮືອນອີກ.

| ແຖວ | ຄໍາສັບຢູ່ໃນບັນທຶກປະຈໍາວັນ | ກິດຈະກໍາທີ່ລວມເອົາ |
|---|---|---|
| 01 | ການນອນ | ທຸກໆປະເພດການນອນ,ນອນຕອນກາງຄືນກໍ່ຄືນອນກາງເວັນແບບສັ້ນໆ |
| 02 | ການກິນ,ດື່ມ,ບົວລະບັດຕົນເອງ | ທຸກອາຫານ,ອາຫານຫວ່າງ, ການດື່ມຊາ/ກາເຟ,ດື່ມເຫລົ້າ ແລະອື່ນໆ, ການບົວລະບັດຮັກສາຕົນເອງ ຕົວຢ່າງ : ຊັກເຄື່ອງ, ອາບນໍ້າ, ແລະອື່ນໆ. |

| | | |
|---|---|---|
| 03 | ໂຮງຮຽນ | ເວລາຢູ່ໃນໂຮງຮຽນ, ການສຶກສາທາງສາສະໜາຢູ່ໃນແບບທີ່ມີການຈັດຕັ້ງ, ທັງເດັກນ້ອຍ ແລະຜູ້ໃຫ່ຍທີ່ໄປໂຮງຮຽນ, ເວລາທຸກປະເພດທີ່ກ່ຽວກັບໂຮງຮຽນແຕ່ຊັ້ນຕ່ຳສຸດຮອດຊັ້ນສູງສຸດ ແລະ ລວມທັງເວລາທີ່ໃຊ້ໃນການຄົ້ນຄວ້າບົດຮຽນຢູ່ບ້ານ. |
| 04 | ການເຮັດວຽກຕາມຈ້າງ | ເຮັດວຽກເປັນລູກຈ້າງຢູ່ໃນຂະແໜງການແຕກຕ່າງກັນ. ມັນເປັນການຈ່າຍຄ່າຈ້າງແຮງງານໃຫ້ທ່ານຈາກວຽກງານທີ່ເຮັດ, ໃຫ້ຈັດແບ່ງອອກໂດຍອີງໃສ່ 3 ລະຫັດ ທີ່ສະແດງຢູ່ໃນບັນທຶກປະຈຳວັນນີ້ |
| 05 | ວຽກທຸລະກິດຕົນເອງ | ທຸລະກິດຕົນເອງ ຕົວຢ່າງ ມີຮ້ານນ້ອຍ, ຂາຍເຄື່ອງຢູ່ນອກເຮືອນ, ຕັດເຄື່ອງນຸ່ງໃຫ້ຄົນອື່ນ ແລະອື່ນໆ. ສິ່ງສຳຄັນແມ່ນທ່ານໄດ້ຮັບເງິນສຳລັບວຽກທີ່ທ່ານໄດ້ເຮັດ, ໃຫ້ບອກແຈ້ງວຽກທຸລະກິດທີ່ທ່ານໄດ້ເຮັດໂດຍອີງໃສ່ພື້ນຖານລະຫັດຂອງລະບົບການບັນຊີແຫ່ງຊາດ. |
| 06 | ບົວລະບັດຮັກສາເຂົ້າ | ການກຳນົດເວລາຂອງລະດູການປູກເຂົ້າລ້ວນແລ້ວມີຄວາມແຕກຕ່າງກັນ, ລະຫັດສຳຫລັບລະດູການປູກຝັງກໍ່ມີຄວາມແຕກຕ່າງກັນ,ຕົວຢ່າງ: ການປູກ, ການເກັບກ່ຽວ ແລະອື່ນໆ. ເຂົ້າແຕ່ລະຊະນິດກໍ່ມີຄວາມແຕກຕ່າງລະຫວ່າງກັນ. |
| 07 | ການບົວລະບັດຮັກສາພືດອື່ນໆ | ການກຳນົດການເວລາຂອງລະດູການປູກພືດອື່ນໆ ແມ່ນມີຄວາມແຕກຕ່າງຫລາຍກວ່າເຂົ້າ. ລະຫັດສຳຫລັບການເວລາຂອງການປູກພືດນີ້ ກໍ່ມີຄວາມແຕກຕ່າງກັນ |
| 08 | ການບົວລະບັດຮັກສາສັດລ້ຽງ | ກິດຈະກຳທີ່ຕິດພັນກັບການບົວລະບັດຮັກສາສັດລ້ຽງຕົວຢ່າງ : ໃຫ້ອາຫານ, ແລະອື່ນໆ |
| 09 | ການຕັກນ້ຳ | ເວລາທັງໝົດທີ່ຕິດພັນກັບການໄປເອົານ້ຳ ຕົວຢ່າງ : ຍ່າງໄປນ້ຳສ້າງ, ຕັກນ້ຳຂຶ້ນມາ ແລະອື່ນໆ. ຖ້າມີການພັກເຊົາຢູ່ກາງທາງ ແລະເວົ້າລົມກັບຄົນອື່ນ, ການໃສ່ເວລາອັນນັ້ນ ແມ່ນຈັດເຂົ້າໝວດ " ເວລາຫວ່າງ", ຕ້ອງໄດ້ຖາມຜູ້ຖືກສຳພາດໃຫ້ລະອຽດ |
| 10 | ການໄປເອົາຟືນ | ເວລາທີ່ໃຊ້ໃນການໄປເອົາຟືນ, ຍ່າງໄປປ່າ, ຊອກຫາຟືນ ແລະອື່ນໆ |
| 11 | ການລ່າສັດ | ການລ່າສັດທຸກຊະນິດຂອງສັດປ່າ |
| 12 | ການຫາປາ | ທຸກກິດຈະກຳທີ່ຕິດພັນກັບການຫາປາ ຕົວຢ່າງ : ການຕຶກແຫ, ໃສ່ມອງ, ໃສ່ເບັດແລະອື່ນໆ |

| | | |
|---|---|---|
| 13 | ໄປຕະຫລາດ/ຊື້ສິ່ງຂອງ | |
| 14 | ການກໍ່ສ້າງ | ການກໍ່ສ້າງເຮືອນ, ຕຶກອາຄານ, ການສ້ອມແປງຄືນໃໝ່/ ຂະຫຍາຍເຮືອນເກົ່າ. ການສ້ອມແປງພາຫະນະຄືນໃໝ່ ຕົວຢ່າງ : ລົດຍົນ, ລົດຈັກ/ລົດຖີບ ແມ່ນໃຫ້ລວມເຂົ້າກັບລາຍການນີ້. |
| 15 | ການຕໍ່າຜ້າ,ການຫຍິບ,ວຽກກ່ຽວກັບແພແຜ່ນ | ລວມເອົາໝົດທຸກປະເພດຫັດຖະກໍາແຜ່ນແພ ຕົວຢ່າງ : ການຕໍ່າຫູກ, ຖັກແຊ່ວ, ຕັດຫຍິບລວມທັງຫຍິບຕາມເຄື່ອງນຸ່ງຮົ່ມອື່ນໆ |
| 16 | ຫັດຖະກໍາ(ບໍ່ແມ່ນແຜ່ນແພ) | ໝາຍເຖິງການຈັກສານວັດສະດຸຕ່າງໆ ຕົວຢ່າງ : ສານແຫ/ມອງ, ຕໍ່າສາດ, ສານກະບຸງ/ກະຕ່າ, ແກະສະຫລັກ, ຄວັດໄມ້, ປັ້ນໝໍ້ ແລະອື່ນໆ |
| 17 | ການແຕ່ງກິນ, ເຮັດອີບ | ທັງຫມົດທຸກຢ່າງທີ່ກ່ຽວຂອ້ງກັບການແຕ່ງຢູ່ຄົວກິນ ແລະການເຮັດອີບ ຕົວຢ່າງ : ການຊອຍຜັກຕ່າງໆ, ເຮັດເຄື່ອງດອງ, ສໍາລັບໄວ້ກິນຍາວນານ, ແຕ່ງອາຫານຄໍ່າ ແລະອື່ນໆ |
| 18 | ຊັກເຄື່ອງ/ລ້າງຖ້ວຍ/ອະນາໄມ | ຕົວຢ່າງ : ການຊັກເຄື່ອງນຸ່ງຫົ່ມ, ຕາກຜ້າທີ່ທໍາຄວາມສະອາດແລ້ວ, ມ້ຽນມັດ, ປັດກວາດ, ຮຸກຖູ ແລະອະນາໄມອື່ນໆ. |
| 19 | ດູແລເດັກນ້ອຍ/ຜູ້ສູງອາຍຸ/ຄົນຊະລາ | ທຸກກິດຈະກໍາທີ່ຕິດພັນການເບິ່ງແຍງດູແລ ຕົວຢ່າງ : ການນຸ່ງເຄື່ອງແລະໃຫ້ອາຫານເດັກ, ການໃຫ້ຢາຄົນເຈັບປ່ວຍນັບທັງເດັກ ແລະຜູ້ໃຫ່ຍ, ຈົນເຖິງແກ່ຊະລາ |
| 20 | ການເດີນທາງ | ການເດີນທາງດ້ວຍພາຫະນະຕ່າງໆທຸກປະເພດ ຕົວຢ່າງ: ຍ່າງ, ຂີ່ລົດຖີບ, ລົດຈັກ, ລົດເກັງ, ເຮືອຈັກ, ລົດໂດຍສານ, ເຮືອບິນ ແລະອື່ນໆ. |
| 21 | ເວລາຫວ່າງ | ແມ່ນເວລາທີ່ທ່ານສາມາດໃຊ້ຕາມທີ່ທ່ານຕ້ອງການ,ຕົວຢ່າງ: ສັງສັນກັບເພື່ອນ, ອ່ານຫນັງສື, ກິດຈະກໍາທາງສາສະໜາ ເຊັ່ນ ໄປວັດ ແລະອື່ນໆ |
| 22 | ອື່ນໆໃຫ້ບອກແຈ້ງ | ລາຍການນີ້ຈະໃຊ້ກໍ່ຕໍ່ເມື່ອທ່ານຫາກໄດ້ເຮັດວຽກໃດໜຶ່ງທີ່ບໍ່ສາມາດຈັດເຂົ້າໃນລາຍການໃດທີ່ລະບຸຂ້າງເທິງນີ້ ແລະທ່ານຕ້ອງອະທິບາຍວ່າທ່ານເຮັດວຽກຫັຍງຢ່າງລະອຽດ ແລະຂຽນໃສ່ບ່ອນຫວ່າງເປົ່າກ້ອງບ່ອນຂີດເປັນຕາກະໂລນັ້ນ. |

**10). ສະຫລູບຫຍໍ້.**

- ທຸກຄົນທີ່ອາຍຸ 10 ປີຂື້ນໄປ ໃນແຕ່ລະຄົວເຮືອນທີ່ເປັນເປົ້າໝາຍໃນການບັນທຶກ ການນຳໃຊ້ເວລາ.
- ສຳຫລັບມື້ທີ່ຈະເຮັດການບັນທຶກນຳໃຊ້ເວລາ ແມ່ນອີງໃສ່ການແຈກຍາຍໃຫ້ນັກເດີນສຳຫລວດ,ຊຶ່ງນອນຢູ່ໃນໜື່ງອາທິດ. ສຳລັບແຕ່ລະຄົວເຮືອນ ນັກເດີນສຳຫລວດ ຫຼື ນັກກວດກາ ຈະເລືອກມື້ແບບບັງເອີນ, ສຳລັບມື້ເພື່ອບັນທຶກເວລາຕ້ອງເປັນມື້ທີ່ຕິດຕໍ່ກັນ, ແຕ່ບໍ່ໃຫ້ເປັນມື້ທີ່ບໍ່ມີການເຄື່ອນໃຫວກິດຈະກຳ ແລະບໍ່ໄດ້ເຮັດວຽກຫຍັງໝົດ
- ການບັນທຶກຈະປະກອບດ້ວຍບັນດາກິດຈະກຳ ແລະເວລາ (ຄວນລະມັດລະວັງໃນການໃຊ້ເວລາຕ້ອງໃຫ້ມີຄວາມແໝ້ນຍຳ ຂອງເຄິ່ງຊົ່ວໂມງ ຫຼື 0:30 ນາທີ ແລະ 1 ຊົ່ວໂມງເຕັມ)
- ການບັນທຶກນຳໃຊ້ເວລາ ຕ້ອງແຕ້ມເສັ້ນໃຫ້ເຕັມແຖວ ຕາມໄລຍະເວລາ ທີ່ໄດ້ປະຕິບັດເຮັດກິດຈະກຳ (ວຽກ) ນັ້ນ. ການຂີດເສັ້ນ ແມ່ນເລີ່ມຕົ້ນຈາກເວລາທຳອິດ ທີ່ເຮັດກິດຈະກຳ (ວຽກ) ນັ້ນ ແລະສິ້ນສຸດກິດຈະກຳ (ວຽກ) ນັ້ນຢ່າງແນ່ນອນ
- ບາງກິດຈະກຳແມ່ນມີຫລາຍລັກຊະນະ, ມັນມີຄວາມຈຳຕ້ອງໄດ້ໃສ່ລະຫັດ ພາຍຫລັງທີ່ໄດ້ຖາມຜູ້ກ່ຽວໂດຍສະເພາະ. ການໃສ່ລະຫັດຕ້ອງໄດ້ອີງໃສ່ ລະຫັດຂອງລະບົບການບັນຊີແຫ່ງຊາດ, ທ່ານສາມາດຊອກເຫັນໄດ້ຢູ່ໃນບັນຊີສະເພາະຂອງເອກະສານເຫຼັ້ມນີ້.

**11).ລະຫັດຂອງ ການເຮັດວຽກຕາມຈ້າງ ແຖວ 4**

| ວຽກ | ລະຫັດ |
|---|---|
| ຊາວນາ (ສະເພາະຜູ້ທີ່ຖືກຈ້າງ) | 1 |
| ຂະແໜງການຂອງລັດ | 2 |
| ຂະແໜງການເອກະຊົນ | 3 |
| ອື່ນໆ | 4 |

ລະຫັດນີ້ແມ່ນໃສ່ຢູ່ໃນລະຫວ່າງການສຳພາດ ໂດຍນັກເດີນສຳຫລວດເປັນຜູ້ໃສ່ເອງ

**ຄຳຖາມ : ເຈົ້າເປັນລູກຈ້າງໃນຂະແໜງການໃດ?**

ຖ້າບໍ່ສາມາດຈັດເຂົ້າໃນລະຫັດ ສາມອັນທຳອິດນັ້ນ, ໃຫ້ໃຊ້ລະຫັດທີ 4 “ອື່ນໆ”. ການໃຊ້ລະຫັດອື່ນໆນີ້ ຖ້າແມ່ນວ່າບໍ່ສາມາດຈັດເຂົ້າລະຫັດໃດໜຶ່ງໄດ້ແທ້ຈິ່ງຄ່ອຍໃສ່.

**13). ລະຫັດ “ ວຽກທຸລະກິດຂອງຕົນເອງ “ ແຖວທີ 5.**

**ຄຳຖາມ : ທຸລະກິດຫັຽງ ທີ່ຄົວເຮືອນທ່ານເຮັດຢູ່?**

ຮູບແບບທຸລະກິດຂອງຄົວເຮືອນໄດ້ກຳນົດ ແລະ ພິສູດດ້ວຍ ຊື່ຂອງກິດຈະກຳທຸລະກິດ ແລະ ລະຫັດ. ມັນເປັນຄວາມແນ່ນອນແລ້ວວ່າ ຮູບແບບທຸລະກິດ ແລະກິດຈະກຳວຽກຕ່າງໆຂອງທຸລະກິດ ໄດ້ບັນທຶກໄວ້ ແຕ່ຕອນຕົ້ນຂອງແບບສອບຖາມໃນພາກທຸລະກິດຄົວເຮືອນ. ຖ້າທຸລະກິດໃດ ຫາກບໍ່ໄດ້ບັນທຶກໄວ້ແຕ່ຕອນຕົ້ນນັ້ນ ມັນກໍ່ຈະເປັນທຸລະກິດອັນໃໝ່ ພ້ອມກັບໃສ່ລະຫັດ ແລະ ຈຳນວນກິດຈະກຳຕ່າງໆ. ການເພີ່ມລະຫັດຂອງທຸລະກິດຢູ່ໃກນານໃຊ້ເວລາ. ລະຫັດຂອງທຸລະກິດເຫຼົ່ານັ້ນ ແມ່ນໄດ້ບັນຈຸຢູ່ໃນແບບສອບຖາມນີ້.

**ລະຫັດ " ສຳລັບເຂົ້າ " ( ແຖວ 6) ແລະ " ສຳລັບພືດອື່ນໆ"**

| ເຂົ້າໜຽວ | | ເຂົ້າຈ້າວ | | ພືດອື່ນໆ | |
|---|---|---|---|---|---|
| ກິດຈະກຳ | ລະຫັດ | ກິດຈະກຳ | ລະຫັດ | ກິດຈະກຳ | ລະຫັດ |
| ການປູກ | 11 | ການປູກ | 21 | ການປູກ | 31 |
| ການຊົມລະປະທານ | 12 | ການຊົມລະປະທານ | 22 | ການຊົມລະປະທານ | 32 |
| ບົວລະບັດ | 13 | ບົວລະບັດ | 23 | ບົວລະບັດ | 33 |
| ເກັບກ່ຽວ | 14 | ເກັບກ່ຽວ | 24 | ເກັບກ່ຽວ | 34 |
| ປ່ຽນເປັນອັນອື່ນ | 15 | ປ່ຽນເປັນອັນອື່ນ | 25 | | |

ລະຫັດເຫລົ່ານີ້ ແມ່ນັກເດີນສຳຫລວດເປັນຜູ້ໃສ່ ດວ້ຍການຖາມຜູ້ຖືກສຳພາດວ່າ ແມ່ນກິດຈາໃດແທ້ທີ່ເຂົາເຈົ້າໄດ້ເຮັດ ໃນໄລຍະຜ່ານມາ. ຜູ້ຖືກສຳພາດພຽງແຕ່ໃຫ້ຄຳຕອບເທົ່ານັ້ນ, ບໍ່ຄວນໃສ່ລະຫັດດ້ວຍຕົນເອງ, ນັກເດີນສຳຫລວດຈະເປັນຜູ້ບັນທຶກ ແລະຂຽນລະຫັດໃສ່ຕົງກັນກັບແຖວທີ່ໄດ້ສຳພາດນັ້ນ.

ຖ້າຜູ້ຖືກສຳພາດຕອບ ໄດ້ເຮັດຫລາຍກິດຈະກຳ ຂອງບັນດາວຽກເຫລົ່ານັ້ນ ໃຫ້ຖືເອົາກິດຈະກຳທີ່ໃຊ້ເວລາຫລາຍກວ່າໝູ່ເປັນຫລັກ ເພື່ອຕັດສິນໃຈໃນການໃສ່ລະຫັດ.

**<u>ຄຳຖາມ ເຂົ້າ : ທ່ານປູກເຂົ້າປະເພດໃດ?</u>**

**<u>ປະເພດພືດອື່ນໆ</u>**

ຄຳຖາມ: ແມ່ນກິດຈະກຳວຽກອັນໃດ ທີ່ທ່ານໄດ້ເຮັດກັບພືດອື່ນໆ (ບໍ່ແມ່ນເຂົ້າ) ໃນມື້ນີ້?

ລະຫັດ ຂອງ" ວິທີການເດີນທາງ"ແຖວ 20

| ວິທີການເດີນທາງ | ລະຫັດ |
|---|---|
| ຍ່າງ | 1 |
| ຂີ່ລົດຖີບ | 2 |
| ລົດຈັກ | 3 |
| ລົດເກັງ | 4 |

| | |
|---|---|
| ລົດເມ | 5 |
| ເຮືອບິນ | 6 |
| ເຮືອ | 7 |
| ຕັກຊີ້-ຕຸກໆ | 8 |
| ແລະວິທີທາງອື່ນໆ | 9 |

**ຄຳຖາມ : ມື້ນີ້ທ່ານເດີນທາງດ້ວຍວິທີໃດ?**

ຖ້າວ່າບຸກຄົນໃດຫາກມີການເດີນທາງຫລາຍຄັ້ງໃນມື້ທີ່ຖືກເລືອກ, ໃຫ້ໃສ່ລະຫັດການເດີນທາງຄັ້ງທີ່ໃຊ້ເວລາຫລາຍກ່ວາໝູ່.

ນັກເດີນສຳຫລວດຈະຖາມ ຜູ້ຖືກສຳພາດ ມື້ນີ້ທ່ານເຮັດຫຍັງ ແລະເດີນທາງດ້ວຍວິທີໃດ, ຜູ້ຖືກສຳພາດຈະໃຫ້ຄຳຕອບ ນັກເດີນສຳຫລວດພຽງແຕ່ບັນທຶກ ແລະໃສ່ລະຫັດການເດີນທາງໃຫ້ຕົງກັບແຖວຂອງຄຳຕອບນັ້ນ